		3.2.2 ອຸດຕັນ (DDB)	3.2.2.1 ມີສິ່ງກີດຂວາງ (DDBO)
			3.2.2.2 ດິນຕົກຕະກອນ (DDBS)
			3.2.2.3 ເກີດຂຸມ(ຮ່ອງທີ່ບໍ່ໄດ້ກໍ່)(DDBP)
		3.2.3 ກັດເຊາະບໍລິເວນທາງນ້ຳໄຫຼອອກ (DDE)	3.2.3 (1) ປະເພດຮ່ອງທີ່ບໍ່ໄດ້ກໍ່ (DDE1)
			3.2.3 (2) ປະເພດຮ່ອງທີ່ບໍ່ໄດ້ກໍ່ (DDE2)
	3.3 ຂຸມດັກຕະກອນ/ທໍ່	3.3.1 ອຸດຕັນ (DMB)	3.3.1.1 ນ້ຳໄຫຼລົ້ນອອກຂຸມດັກຕະກອນ (DMBO)
			3.3.1.2 ດິນເຕັມຂຸມດັກຕະກອນ (DMBS)
		3.3.2 ເສຍຫາຍ (DMD)	3.3.2.1 ຝາປິດຂຸມດັກຕະກອນຫາຍ (DMDM)
			3.3.2.2 ມີດິນແລະຫຍ້າປົກຄຸມຝາປິດ (DMDC)
4. ໂຄງສ້າງຕ່າງໆ	4.1 ຂ໋ວນ້ຳລົ້ນ & ຂ໋ວຈິມ	4.1.1 ຍຸບໂຕ (SDS)	
		4.1.2 ມີຂີ້ເຫຍື້ອ (SDD)	
		4.1.3 ຫລັກນຳທາງຫາຍ (SDM)	
		4.2.2 ຍຸບໂຕ (SRS)	
		4.2.3 ແຕກແຫງ (SRR)	
5. ການຄວບຄຸມການສັນຈອນ	5.1 ປ້າຍຈາລະຈອນ	5.1.1 ເປ່ເປື່ອນ (TTD)	
		5.1.2 ສີໂຄະອອກ (TTF)	
		5.1.3 ປ້າຍເປ່ເພ ຫຼື ຂາດຫາຍ (TTM)	
		5.1.4 ຮາກຖານປ້າຍຖືກທຳລາຍ (TTL)	
		5.1 5 ປ່າຫຸ້ມ (TTV)	
	5.2 ຮາວກັ້ນຕົກ & ຫຼັກນຳທາງ	5.2.1 ຮາວກັ້ນຕົກເປ່ເພ (TRG)	
		5.2.2 ຫລັກນຳທາງເປ່ເພ (TRP)	
	5.3 ຕີເສັ້ນຈາລະຈອນ	5.3.1 ສີຈືດຈາງ (TLW)	

(2) ນິຍາມຂອງແຕ່ລະປະເພດຄວາມເສຍຫາຍ

ຄວາມເສຍຫາຍທີ່ເກີດຂຶ້ນຕາມທາງ ແລະອົງປະກອບຂອງທາງ ແມ່ນໄດ້ສັງລວມໄວ້ໃນ ນິຍາມ ແລະການອະທິບາຍຄວາມໝາຍຂອງຄວາມເສຍຫາຍ. ຄວາມເສຍຫາຍແຕ່ລະ ປະເພດແມ່ນໄດ້ໃຫ້ຂໍ້ມູນລາຍລະອຽດລົງໃນເຈ້ຍໃບໜຶ່ງສະເພາະ. ນັກສຳຫຼວດຈະຕ້ອງ ໄດ້ລະບຸແຕ່ລະປະເພດຄວາມເສຍຫາຍໂດຍອີງໃສ່ນິຍາມ ຕາມທີ່ໄດ້ສະແດງໄວ້ໃນ ຕາຕະລາງ 2.5.2 (1) – 2.5.2 (66).

(i) ລາຍລະອຽດ

ລາຍລະອຽດຂອງຄວາມເສຍຫາຍ ແມ່ນໄດ້ອະທິບາຍຂໍ້ມູນທີ່ຈຳເປັນ ເພື່ອກຳນົດປະເພດ ຄວາມເສຍຫາຍທີ່ພົບຢູ່ສະໜາມ ແລະເພື່ອແຍກຄວາມເສຍຫາຍນັ້ນອອກຈາກຄວາມ ເສຍຫາຍອື່ນໆ.

(ii) ສາຍເຫດທີ່ພາໃຫ້ເກີດຄວາມເສຍຫາຍ

ສາຍເຫດທີ່ອາດເປັນໄປໄດ້ຂອງການເກີດຄວາມເສຍຫາຍແມ່ນຈະຊ່ວຍໃຫ້ນັກວິສະວະ ກອນສາມາດກຳນົດຫາສາຍເຫດຂອງການເກີດຄວາມເສຍຫາຍໄດ້ຢ່າງຖືກຕ້ອງ. ມັນມີ ຄວາມຈຳເປັນທີ່ຈະຕ້ອງໄດ້ກຳນົດຫາສາຍເຫດ ເພາະວ່າສາຍເຫດຂອງການເກີດຄວາມ ເສຍຫາຍທີ່ແຕກຕ່າງ ແມ່ນມີຄວາມຕ້ອງການແກ້ໄຂທີ່ແຕກຕ່າງກັນໄປ.

(iii) ຜົນກະທົບ (ຖ້າບໍ່ເອົາໃຈໃສ່)

ພາກນີ້ແມ່ນໄດ້ສັງລວມສິ່ງທີ່ອາດເກີດຂຶ້ນຖ້າຄວາມເສຍຫາຍດັ່ງກ່າວບໍ່ໄດ້ຮັບສ້ອມແປງ. ມັນຍັງຈະຊ່ວຍໃຫ້ນັກວິສະວະກອນຮູ້ຈັກຄວາມອາດສາມາດທີ່ແຜ່ຂະຫຍາຍຂອງຄວາມ ເສຍຫາຍຕາມໂຄງສ້າງຊັ້ນເສື້ອທາງ.

(iv) ວິທີການບັນທຶກໃນເວລາສຳຫຼວດ

ພາກນີ້ແມ່ນຈະໄດ້ກຳນົດຂໍ້ມູນທີ່ຈະທຳການອັດແທກ ແລະບັນທຶກລົງໃນແບບຟອມ ການສຳຫຼວດ. ວິທີການດັ່ງກ່າວຈະແຕກຕ່າງກັນໄປ ໂດຍຂຶ້ນກັບແຕ່ລະປະເພດຄວາມ ເສຍຫາຍ ແລະບາງສາຍເຫດທີ່ຕ້ອງການການແກ້ໄຂ ແລະການປະເມີນຜົນທີ່ຕ້ອງການ ໂດຍອີງຕາມເງື່ອນໄຂຂອງການຈັດລຳດັບເຊັ່ນກັນ.

(v) ຮຸບຖ່າຍ

ຮຸບຖ່າຍທີ່ໄດ້ລະບຸລົງໃນທີ່ນີ້ແມ່ນເພື່ອກຳນົດຄວາມເປັນຈິງຂອງຄວາມເສຍຫາຍແຕ່ລະ ປະເພດຢ່າງຈະແຈ້ງ.

ตาตะลาง 2.5.2 (1) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.1 ການປ່ຽນແປງຮູບຮ່າງ (CBD)	ຄວາມເສຍຫາຍ: 1.1.1.1 ໜ້າທາງເປັນຄື້ນ (CBDC)

ລາຍລະອຽດ:

ທາງເປັນຄື້ນແມ່ນຮູບແບບໜຶ່ງຂອງການປ່ຽນແປງຕາມຜິວໜ້າທາງປູຢາງ, ເກີດຂຶ້ນໃກ້ໆກັນ ໂດຍມີຊ່ອງຫວ່າງຂອງຄື້ນ ແລະຄວາມຍາວປະມານ2ແມັດ.

ສາຍເຫດທີ່ພາໃຫ້ເກີດ:

- ຄວາມແຂງແກ່ນຂອງຊັ້ນໜ້າທາງ ຫລືຊັ້ນພື້ນທາງບໍ່ພຽງພໍ.
- ການຢຽບແໜ້ນຊັ້ນພື້ນທາງໃນເວລາກໍ່ສ້າງແມ່ນເກີດເປັນຄື້ນ.
- ຄວາມໄວຂອງກົນຈັກທີ່ນຳໃຊ້ໃນການຢຽບແໜ້ນບໍ່ເປັນໄປຕາມທີ່ໄດ້ກຳນົດໄວ້.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ເກີດຄື້ນ ຫລື ຄວາມບໍ່ຮາບພຽງຕາມທາງຂວາງຂອງຜິວໜ້າທາງ ແລະ ຄື້ນດັ່ງກ່າວຈະເປັນອັນຕະລາຍ ແລະສົ່ງຜົນສະທ້ອນເຖິງຄວາມໄວ ແລະການລະບາຍການຈາລະຈອນ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (1) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.1 ການປ່ຽນແປງຮູບຮ່າງ (CBD)	ຄວາມເສຍຫາຍ: 1.1.1.1 ໜ້າທາງເປັນຄື້ນ (CBDC)

ຮູບພາບ:

ตาตะลาง 2.5.2 (2) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.1 ການປ່ຽນແປງຮູບຮ່າງ (CBD)	ຄວາມເສຍຫາຍ: 1.1.1.2 ການຍຸບໂຕຂອງໜ້າທາງ (CBDD)

ລາຍລະອຽດ:

ການຍຸບໂຕແມ່ນ ການລຸບລົງຂອງຜິວໜ້າທາງເມື່ອທຽບໃສ່ບໍລິເວນອ້ອມຂ້າງ. ມັນອາດຈະມີເນື້ອທີ່ກວ້າງ ຫລື ແຄບ ຕາມປົກກະຕິແລ້ວແມ່ນເກີດຂຶ້ນຕາມທິດຂອງ ການສັນຈອນ.

ສາຍເຫດທີ່ພາໃຫ້ເກີດ:

- ການຍຸບຍ້ອນການບໍລິການ ແລະການຂະຫຍາຍຄັນທາງ.
- ການກໍ່ສ້າງຄັນທາງ, ຊັ້ນຮອງພື້ນ ຫລືຊັ້ນພື້ນທາງບໍ່ໄດ້ດີ.
- ວັດສະດຸຊັ້ນຍົກລະດັບມີການປ່ຽນແປງບໍລິມາດຍ້ອນຜົນກະທົບທາງສະພາບແວດລ້ອມ ເຊັ່ນ: ແຫ້ງເກີນໄປໃນຊ່ວງລະດູແລ້ງ ແລະປຽກ ເກີນໄປໃນຊ່ວງລະດູຝົນ.
- ວັດສະດຸປູຜິວໜ້າທາງບໍ່ມີຄວາມແຂງແກ່ນ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ຖ້ານ້ຳຫາກສາມາດຊຶມລົງໄປໃນຊັ້ນເສື້ອທາງ ນ້ຳຈະເຮັດໃຫ້ການຍຸບໂຕຂະຫຍາຍ ຕົວຢ່າງ ໄວ ແລະ ຈະເກີດຮອຍແຕກແໜງ ແລະ ເຮັດໃຫ້ຊັ້ນເສື້ອທາງແຕກໃນທີ່ສຸດ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ, ຄວາມກວ້າງ ແລະຄວາມເລິກສະເລ່ຍ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳໜ່ຽງ

ตาตะลาง 2.5.2 (2) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.1 ການປ່ຽນແປງຮູບຮ່າງ (CBD)	ຄວາມເສຍຫາຍ: 1.1.1.2 ການຍຸບໂຕຂອງໜ້າທາງ (CBDD)

ຮູບພາບ:

ตาตะลาง 2.5.2 (3) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.1 ການປ່ຽນແປງຮູບຮ່າງ (CBD)	ຄວາມເສຍຫາຍ: 1.1.1.3 ຄອງລໍ້ລີດ (CBDR)

ລາຍລະອຽດ:

ຄອງລໍ້ລີດແມ່ນການຍຸບໂຕຕາມທາງຍາວຕາມຜິວໜ້າທາງຕາມປົກກະຕິມັກເກີດຂຶ້ນໃນບ່ອນທີ່ມີ ການກະທຳຂອງຕີນລີດຕາມໜ້າທາງລີດແລ່ນ.

ລາຍເຫດທີ່ພາໃຫ້ເກີດ:

- ຄວາມໜາຂອງຊັ້ນເສື້ອທາງບໍ່ພຽງພໍ.
- ການຢຽບແໜ້ນຊັ້ນພື້ນ ຫລືຊັ້ນໜ້າທາງບໍ່ພຽງພໍ.
- ຄວາມແຂງແກ່ນ(ສະຖຽນລະພາບ)ຂອງຊັ້ນພື້ນ ຫລືຊັ້ນໜ້າທາງບໍ່ພຽງພໍ.
- ອັດຕາຢາງໃນສ່ວນປະສົມອາດສະຟານຫລາຍເກີນໄປ.
- ນ້ຳໜັກບັນທຸກເກີນ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະຂັງແລ້ວຊຶມລົງໄປຫາຊັ້ນເສື້ອທາງ, ຫລັງຈາກນັ້ນຄອງລໍ້ລີດຈະຂະຫຍາຍຕົວຢ່າງໄວຊຶ່ງຈະເຮັດໃຫ້ໜ້າ ທາງແຕກ ແລະເປເພເສຍຫາຍໃນທີ່ສຸດ.
- ໃນກໍລະນີທີ່ມັນເກີດຫລາຍ ເສັ້ນທາງດັ່ງກ່າວນັ້ນຈະບໍ່ສາມາດບໍລິການຜູ້ຊົມໃຊ້ເສັ້ນທາງໄດ້ເຕັມທີ່ ແລະ ຄວາມໄວໃນການແລ່ນລີດຈະລຸດລົງ. ຖ້າມີຄວາມເສຍຫາຍທີ່ຮຸນແຮງໂອກາດເກີດອຸບັດເຫດແມ່ນມີສູງ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ, ຄວາມກວ້າງ ແລະຄວາມເລິກສະເລ່ຍ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳໜ່ຽງ

ตาตะลาง 2.5.2 (3) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.1 ການປ່ຽນແປງຮູບຮ່າງ (CBD)	ຄວາມເສຍຫາຍ: 1.1.1.3 ຄອງລໍ້ລີດ (CBDR)

ຮູບພາບ:

ตาตะลาง 2.5.2 (4) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.1 ການປ່ຽນແປງຮູບຮ່າງ (CBD)	ຄວາມເສຍຫາຍ: 1.1.1.4 ທາງຂວົມ/ເປດ (CBDS)

ລາຍລະອຽດ:

ການເປດແມ່ນການເຄື່ອນຍ້າຍຂອງໜ້າທາງແບບຢືດຢຸ່ນມັນໂນນຂຶ້ນຕາມຜິວໜ້າທາງແລ່ນ. ໂດຍທົ່ວໄປຄວາມ ເສຍຫາຍດັ່ງກ່າວມັກເກີດຂຶ້ນໃນບ່ອນທີ່ຍານພາຫານະເລື້ມ ແລະ ຢຸດ ຫລືບ່ອນທີ່ລີດເບກເວລາລົງຄ້ອຍ. ການເປດຕາມທາງຂວາງມັກເກີດຂຶ້ນໃນເວລາ ລີດລ້ຽວ.

ສາຍເຫດທີ່ພາໃຫ້ເກີດ:

- ການຊຶມຂອງນ້ຳ: ລຸດຜ່ອນຄວາມອາດສາມາດຮັບນ້ຳໜັກຂອງຊັ້ນເສື້ອທາງ.
- ວິທີການກໍ່ສ້າງບໍ່ດີ: ການຢຽບແໜ້ນບໍ່ພຽງພໍ
- ການສັນຈອນ: ຈຳນວນຖ້ຽວຂອງລີດໜັກແລ່ນຜ່ານແມ່ນມີຫລາຍ.
- ຄວາມແຂງແກ່ນຂອງຊັ້ນຜິວໜ້າທາງ ຫລືຊັ້ນພື້ນທາງບໍ່ພຽງພໍ.
- ການຕໍ່ເຂົ້າກັນຂອງຊັ້ນເສື້ອທາງແຕ່ລະຊັ້ນບໍ່ໄດ້ດີ.
- ຂອບຂອງຊັ້ນເສື້ອທາງບໍ່ໄດ້ຮັບການກໍ່ສ້າງ.
- ຄວາມໜາຂອງຊັ້ນເສື້ອທາງບໍ່ພຽງພໍ.
- ຍ້ອນສ່ວນປະສົມຂອງອາດສະຟານມີຢາງຫລາຍເກີນໄປ, ມີວັດສະດຸເມັດແລບຫລາຍ ເກີນໄປ, ຂະໜາດເມັດວັດສະດຸບໍ່ເໝາະສົມ, ການນຳໃຊ້ແຮ່ມິນຫລືຜິວໜ້າກ້ຽງ.
- ໃນກໍລະນີເປັນຢາງນ້ຳ (ອີມັນເຊິນ) ອາດຈະເປັນຍ້ອນຂາດການໄລ່ຟອງອາກາດ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ວັດສະດຸທີ່ອ່ອນຕົວຈະເປດຂຶ້ນໃນຈຸດທີ່ເກີດຄວາມເສຍຫາຍ.
- ເຮັດໃຫ້ຊັ້ນເສື້ອທາງມີການແຍກອອກຈາກກັນ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກ້ວ້າງ

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (4) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.1 ການປ່ຽນແປງຮູບຮ່າງ (CBD)	ຄວາມເສຍຫາຍ: 1.1.1.4 ທາງຂວົມ/ເປດ (CBDS)

ຮູບພາບ:



ตาตะลาง 2.5.2 (5) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍ : 1.1.2 ຮອຍແຕກແຫ້ງ (CBC)	ຄວາມເສຍຫາຍ: 1.1.2.1 ຮອຍແຕກແຫ້ງເປັນຕາ (CBCB)

ລາຍລະອຽດ:

ຮອຍແຕກແຫ້ງເປັນຕາແມ່ນການຕໍ່ເຂົ້າກັນຂອງຫລາຍຮອຍແຕກແຫ້ງເປັນຮູບສີ່ ຫລ່ຽມຍາວ. ຕາມທຳມະດາແລ້ວແມ່ນແຈກຢາຍຢູ່ເທິງຜິວໜ້າທາງ.

ສາຍເຫດທີ່ພາໃຫ້ເກີດ:

- ຊ່ອງຕໍ່ທີ່ຢູ່ດ້ານລຸ່ມຂອງຊັ້ນຕ່າງໆໃນເບຕົ້ງ.
- ການຫົດແລະຄວາມລ້າຂອງວັດສະດຸໃນຊັ້ນຕ່າງໆ.
- ການຫົດຢືດຂອງຮອຍແຕກແຫ້ງໃນຜິວໜ້າທາງທີ່ປູດ້ວຍຢາງຂີ້ວ ຊຶ່ງເກີດຈາກການປ່ຽນແປງຂອງອຸນນະພູມ.
- ການແຕກຍ້ອນຄວາມລ້າຂອງຊັ້ນພື້ນທາງທີ່ປູດ້ວຍຢາງຂີ້ວ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະສາມາດຊຶມລົງໄປຫາຊັ້ນເສື່ອທາງຊຶ່ງເປັນສາຍເຫດເຮັດໃຫ້ຊັ້ນເສື່ອທາງ ແລະ ຊັ້ນທີ່ຢູ່ລຸ່ມທັດລົງໄປເກີດການອ່ອນຕົວ ແລະບວມ. ນັ້ນອາດເປັນສາຍເຫດພາ ໃຫ້ຊັ້ນເສື່ອທາງເປ່ເພເສຍຫາຍໄວຂຶ້ນ.
- ຖ້າຮ້າຍແຮງ, ມັນອາດຈະເຮັດໃຫ້ການຂີ່ລົດຈັກບໍ່ນິ້ມນວນ ແລະອາດເຮັດໃຫ້ ຄວາມໄວຂອງການແລ່ນລົດລຸດລົງ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (5) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍ : 1.1.2 ຮອຍແຕກແຫ້ງ (CBC)	ຄວາມເສຍຫາຍ: 1.1.2.1 ຮອຍແຕກແຫ້ງເປັນຕາ (CBCB)

ຮູບພາບ:

ตาตะลาง 2.5.2 (6) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍ: 1.1.2 ຮອຍແຕກແຫ (CBC)	ຄວາມເສຍຫາຍ: 1.1.2.2 ຮອຍແຕກແຫງໜັງແຂ້ (CBCC)

ລາຍລະອຽດ:

ຮອຍແຕກແຫງແບບໜັງແຂ້ແມ່ນ ຮອຍແຕກແຫງປະເພດໜຶ່ງຊຶ່ງມີການເຊື່ອມຕໍ່ກັນຂອງຫລາຍປະເພດການແຕກແຫງ. ຮອຍແຕກແຫງດັ່ງກ່າວຈະເລີ້ມແຕກຢູ່ທາງລຸ່ມຂອງຜິວໜ້າ ທາງປູດ້ວຍຢາງຂີ້ວ ແລະຈະແຜ່ລາມໄປຕາມຜິວໜ້າທາງ, ໃນເບື້ອງຕົ້ນ ກໍ່ມີເສັ້ນດຽວຫລືຫລາຍເສັ້ນທີ່ແຕກໄປຕາມທາງ ຍາວ.ພາຍຫລັງມີນ້ຳໜັກ ຈາກຍານພາຫານະມາກະທຳໃສ່ມັນຈະເກີດຮອຍແຕກແຫງປະເພດ ຕ່າງ ຕາມມາຈົນພັດທະນາກາຍເປັນຮອຍແຕກແຫງແບບໜັງແຂ້ໃນທີ່ສຸດ. ໂດຍສ່ວນໃຫ່ຍ ແລ້ວຮອຍ ແຕກແຫງດັ່ງກ່າວມັກເກີດຂຶ້ນໃນບໍລິເວນທີ່ມີການກະທຳ ຂອງນ້ຳໜັກຍານພາຫານະຊ້ຳແລ້ວຊ້ຳອີກ.

ສາຍເຫດທີ່ພາໃຫ້ເກີດ:

- ຄວາມໜາຂອງຊັ້ນເສື້ອທາງບໍ່ພຽງພໍ.
- ມາດຕະຖານໃນການຄິດໄລ່ຊັ້ນພື້ນທາງຕ່ຳ.
- ຊັ້ນພື້ນທາງ ຫລືຊັ້ນໜ້າທາງແຕກງ່າຍ (ຕົວຢ່າງເຊັ່ນ: ການເກາະຕິດກັນ, ອາຍຸການນຳໃຊ້).
- ການຊຸດໂຊມຂອງໜ້າທາງປູດ້ວຍຢາງຂີ້ວ ຍ້ອນການກະທຳຂອງນ້ຳໜັກລີດຊ້ຳແລ້ວ ຊ້ຳອີກ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະສາມາດຊຶມລົງໄປຫາຊັ້ນເສື້ອທາງຊຶ່ງເປັນສາຍເຫດເຮັດໃຫ້ຊັ້ນເສື້ອທາງ ແລະຊັ້ນ ທີ່ຢູ່ລຸ່ມ ທັດລົງໄປເກີດການອ່ອນຕົວ ແລະບວມ. ນັ້ນອາດເປັນສາຍເຫດພາໃຫ້ຊັ້ນ ເສື້ອທາງເປ່ເພເສຍ ຫາຍໄວຂຶ້ນ.
- ຖ້າຮ້າຍແຮງ, ມັນອາດຈະເຮັດໃຫ້ການຂີ່ລົດຈັກບໍ່ນີ້ມນວນ ແລະອາດເຮັດ ໃຫ້ຄວາມໄວຂອງ ການແລ່ນລົດລຸດລົງ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງບໍລິເວນທີ່ເກີດຮອຍແຕກແຫງ ແລະຄວາມກວ້າງຂອງຮອຍແຕກແຫງ.

ເຄື່ອງມືໃນການສຳຫຼວດ:

- ໄມ້ເມັດ

ตาตะลาง 2.5.2 (6) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍ: 1.1.2 ຮອຍແຕກແຫງ (CBC)	ຄວາມເສຍຫາຍ: 1.1.2.2 ຮອຍແຕກແຫງໜັງແຂ້ (CBCC)

ຮູບພາບ:

ຕາຕະລາງ 2.5.2 (7) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 1. ໝ້າທາງລີດແລ່ນ	
ໝ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍ: 1.1.2 ຮອຍແຕກແຫ້ງ (CBC)	ຄວາມເສຍຫາຍ: 1.1.2.3 ຮອຍແຕກແຫ້ງຕາມທາງຍາວ (CBCL)

ລາຍລະອຽດ:

ຮອຍແຕກແຫ້ງຕາມທາງຍາວຂອງທາງມັກເກີດຂຶ້ນຂະໜານໄປກັບທິດທາງລີດແລ່ນ. ມັນຍັງມັກເກີດຂຶ້ນໄປຕາມໃຈກາງທາງ, ໃຈກາງຊ່ອງແບ່ງການຈາລະຈອນ, ຄອງຕີນລິດ ແລະຂອບຂອງທາງ. ຮອຍແຕກແຫ້ງສາມາດເປັນເສັ້ນສັ້ນໆ ຫລືຍາວໆຈົນສຸດຊ່ວງຂອງ ຕອນທາງ.

ສາຍເຫດທີ່ພາໃຫ້ເກີດ:

- ການສະທ້ອນກັບຂອງການຫົດຍືດຂອງຮອຍແຕກແຫ້ງ ຫລືຊ່ອງຕໍ່ໃນຊັ້ນທີ່ຢູ່ລຸ່ມຊັ້ນພື້ນ (ເຍຕິງທີ່ນຳໃຊ້ຊີມັງປອກແລນ, ຊັ້ນພື້ນ ທີ່ເຮັດດ້ວຍຊີມັງແລະຜິວໜ້າທາງດ້ວຍຢາງຂໍ້ອ).
- ການກໍ່ສ້າງຊ່ອງຕໍ່ໃນເວລາປູຜິວໜ້າທາງເຮັດບໍ່ໄດ້ດີ.
- ຮອບວຽນຂອງອຸນຫະພູມປະຈຳວັນ ຫລືການແຂງຕົວຂອງຢາງຂໍ້ອ.
- ຊ່ອງຕໍ່ຕາມຜິວໜ້າທາງບໍ່ໄດ້ຮັບການປ່ຽນແທນດ້ວຍວັດສະດຸໃໝ່.
- ດິນໜຽວໃນຊັ້ນຍົກລະດັບຂະຫຍາຍຕົວ.
- ຂອບຂອງຊັ້ນເສື່ອທາງອ່ອນຕົວ.
- ຄວາມແຕກຕ່າງຂອງການຍຸບໂຕລະຫວ່າງດິນຕັດ ແລະດິນຖົມ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະສາມາດຊຶມລົງໄປຫາຊັ້ນເສື່ອທາງຊຶ່ງເປັນສາຍເຫດເຮັດໃຫ້ຊັ້ນເສື່ອທາງ ແລະຊັ້ນທີ່ຢູ່ລຸ່ມທັດລົງໄປເກີດການອ່ອນຕົວ ແລະບວມ. ນັ້ນອາດເປັນສາຍ ເຫດພາໃຫ້ຊັ້ນເສື່ອທາງເປ່ເພ ເສຍຫາຍໄວຂຶ້ນ.
- ຖ້າຮ້າຍແຮງ, ມັນອາດຈະເຮັດໃຫ້ການຂີ່ລິດຈັກບໍ່ນຶ້ມນວນ ແລະອາດເຮັດ ໃຫ້ຄວາມໄວຂອງການແລ່ນລິດລຸດລົງ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງ

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ຕາຕະລາງ 2.5.2 (7) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 1. ໝ້າທາງລີດແລ່ນ	
ໝ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍ: 1.1.2 ຮອຍແຕກແຫ້ງ (CBC)	ຄວາມເສຍຫາຍ: 1.1.2.3 ຮອຍແຕກແຫ້ງຕາມທາງຍາວ (CBCL)

ຮູບພາບ:

ตาตะลาง 2.5.2 (8) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍ: 1.1.2 ຮອຍແຕກແຫ ງ (CBC)	ຄວາມເສຍຫາຍ: 1.1.2.4 ຮອຍແຕກແຫ ງສະຫຼຽງ (CBCS)
ລາຍລະອຽດ: ມັນເປັນຮອຍແຕກແຫ ງທີ່ມີຫລາຍຮູບຮ່າ ຊຶ່ງເກີດຈາກແຮງທາງນອນຂອງການສັນຈອນ.		
ສາຍເຫດທີ່ພາໃຫ້ເກີດ: • ການເກາະຕິດລະຫວ່າງຊັ້ນຕ່າງໆຂອງຜິວໜ້າທາງ ແລະ ຊັ້ນທີ່ຢູ່ທັດລີງໄປແມ່ນບໍ່ໄດ້ດີບາງທີ ອາດຍ້ອນຂີ້ ຝຸ່ນ, ສິ່ງເປິເປື້ອນ, ຄາບນ້ຳມັນ ຫລື ແຮ່ບໍ່ໄດ້ທຳການເຄືອບ. • ມາດຕະຖານຂອງການຄິດໄລ່ຊັ້ນພື້ນທາງແມ່ນຕ່ຳ. • ຊັ້ນໜ້າທາງບາງເກີນໄປ. • ມີແຮງດັນສູງຊຶ່ງເກີດຈາກການເບກຂອງລົດ ແລະ ການອອກລົດເວລາເຄື່ອນຍ້າຍ.		
ຜົນກະທົບ (ຖ້າປ່ອຍປະລະເລີຍ): • ນ້ຳຈະສາມາດຊຶມລົງໄປຫາຊັ້ນເສື້ອທາງຊຶ່ງເປັນສາຍເຫດເຮັດໃຫ້ຊັ້ນເສື້ອທາງ ແລະ ຊັ້ນທີ່ຢູ່ ລຸ່ມທັດລີງໄປເກີດການອ່ອນຕົວ ແລະ ບວມ. ນັ້ນອາດເປັນສາຍເຫດພາໃຫ້ຊັ້ນເສື້ອທາງເປ່ເພ ເສຍຫາຍໄວຂຶ້ນ. • ຖ້າຮ້າຍແຮງ, ມັນອາດຈະເຮັດໃຫ້ການຂີ່ລົດຈັກບໍ່ນຶ່ມນວນ ແລະ ອາດເຮັດໃຫ້ຄວາມໄວຂອງ ການແລ່ນລົດລຸດລີງ.		
ວິທີການບັນທຶກໃນເວລາສຳຫຼວດ: • ໃຫ້ວັດແທກຄວາມຍາວ ແລະ ຄວາມກ້ວ້າງ.		
ເຄື່ອງມືໃນການສຳຫຼວດ: • ໄມ້ແມັດ		

ตาตะลาง 2.5.2 (8) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍ: 1.1.2 ຮອຍແຕກແຫ ງ (CBC)	ຄວາມເສຍຫາຍ: 1.1.2.4 ຮອຍແຕກແຫ ງສະຫຼຽງ (CBCS)
ຮູບພາບ: 		

ตาตะลาง 2.5.2 (9) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ : 1.1.2 ຮອຍແຕກແຫ້ງ (CBC)	ຄວາມເສຍຫາຍ: 1.1.2.5 ຮອຍແຕກແຫ້ງຕາມທາງຂວາງ (CBCT)

ລາຍລະອຽດ:

ຮອຍແຕກແຫ້ງຕາມທາງຂວາງຈະຕັດກັບທິດທາງຂອງການສັນຈອນ. ຮອຍແຕກແຫ້ງ ດັ່ງກ່າວຈະເລີ້ມຈາກຂອບທາງ ຫລືບ່າທາງ ຈົນສຸດໜຶ່ງຊ່ອງຈາລະຈອນ ຫລືຕໍ່ເນື່ອງໄປຈົນສຸດ ຮູບຕັດຂວາງຂອງໜ້າທາງ. ບາງຄັ້ງຮອຍແຕກດັ່ງກ່າວນັ້ນຈະເລີ້ມ ຈາກໃຈກາງຊ່ອງຈາລະຈອນ ຫລືໃຈກາງທາງກໍ່ມີເຊັ່ນກັນ.

ສາຍເຫດທີ່ພາໃຫ້ເກີດ:

- ເກີດການສະທ້ອນກັບຂອງຫົດຕົວຂອງຮອຍແຕກແຫ້ງ ຫລືຊ່ອງຕໍ່ຂອງຊັ້ນຮອງຮັບ ຊັ້ນພື້ນ (ມັກເກີດຂຶ້ນກັບເບຕົ້ງທີ່ນຳໃຊ້ຊີມັງປ້ອກແລນ ຫລືວັດສະດຸຊີມັງ).
- ການກໍ່ສ້າງຊ່ອງຕໍ່ ຫລືຈຸດປ້ອງກັນການແຕກ (ຍ້ອນອຸນະພູມຕ່ຳ ຫລືການແຂງຕົວ ຂອງຢາງປູທາງ) ໃນຜິວໜ້າທາງທີ່ປູດ້ວຍຢາງຂົ້ວ.
- ໂຄງສ້າງຊັ້ນພື້ນທີ່ເຮັດດ້ວຍເບຕົ້ງໂດຍການນຳໃຊ້ຊີມັງປ້ອກແລນເຊື່ອມໂຊມ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະສາມາດຊຶມລົງໄປຫາຊັ້ນເສື່ອທາງຊຶ່ງເປັນສາຍເຫດເຮັດໃຫ້ຊັ້ນເສື່ອທາງ ແລະ ຊັ້ນທີ່ຢູ່ລຸ່ມທັດລົງໄປເກີດການອ່ອນຕົວ ແລະບວມ. ນັ້ນອາດເປັນສາຍເຫດພາໃຫ້ ຊັ້ນເສື່ອທາງ ເປ່ເພເສຍຫາຍໄວຂຶ້ນ.
- ຖ້າຮ້າຍແຮງ, ມັນອາດຈະເຮັດໃຫ້ການຂີ່ລົດຈັກບໍ່ນິ້ມນວນ ແລະອາດເຮັດໃຫ້ ຄວາມໄວຂອງການແລ່ນລົດລຸດລົງ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກລວງຍາວ ແລະລວງກ້ວາງ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (9) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ : 1.1.2 ຮອຍແຕກແຫ້ງ (CBC)	ຄວາມເສຍຫາຍ: 1.1.2.5 ຮອຍແຕກແຫ້ງຕາມທາງຂວາງ (CBCT)

ຮູບພາບ:



ตาตะลาง 2.5.2 (10) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ : 1.1.3 ຂອບທາງກຸດຫ້ຽນ (CBE)	ຄວາມເສຍຫາຍ: 1.1.3 ຂອບທາງກຸດຫ້ຽນ (CBE)

ລາຍລະອຽດ:

ຂອບທາງກຸດຫ້ຽນແມ່ນລະດັບລະຫວ່າງຂອບທາງ ແລະບ່າທາງມີຄວາມແຕກຕ່າງກັນ. ມັນເກີດຂຶ້ນຕາມລວງຍາວຂອງຂອບຜິວໜ້າທາງທັງສອງຂ້າງ.

ສາຍເຫດທີ່ພາໃຫ້ເກີດ:

- ບ່າທາງກຸດຫ້ຽນ (ເກີດເປັນພັກ).
- ນ້ຳກັດເຊາະ.
- ການຕຳແໜ້ນຂອບທາງປູຢາງບໍ່ພຽງພໍ.
- ທາງແຄບເກີນໄປ.
- ຈຳນວນເພົ້າຂອງລີດຫລາຍເກີນໄປ.
- ແລວທາງຄົດໂຄ້ງ ຊຶ່ງເຮັດໃຫ້ນັກຂັບຂີ່ມັກຂັບຢຽບຂອບທາງ (ເຊັ່ນຕາມແລວທາງຮາບ ແລະ ຕາມມຸມໂຄ້ງ)

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ເປ່ເພໄອຂຶ້ນໃນຊ່ວງລະດູຝົນ.
- ພະຫານະຈະທຳລາຍຄວາມເສຍຫາຍ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ, ຄວາມກວ້າງ ແລະຄວາມເລິກສະເລ່ຍ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳໜ່ວງ

ตาตะลาง 2.5.2 (10) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ : 1.1.3 ຂອບທາງກຸດຫ້ຽນ (CBE)	ຄວາມເສຍຫາຍ: 1.1.3 ຂອບທາງກຸດຫ້ຽນ (CBE)

ຮູບພາບ:



ตาตะลาง 2.5.2 (11) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.1 ໜ້າທາງລອກອອກເປັນຈຸດ (CBSD)

ລາຍລະອຽດ:

ສະພາບຂອງຜິວໜ້າທາງບ່ອນທີ່ເກີດຄວາມເສຍຫາຍນັ້ນແມ່ນຄວາມໜາຂອງຊັ້ນປູປົກເທື່ອທີສອງ ແມ່ນຖືກຮື້ອອກເປັນຈຸດໆ ແລະຈະປະກົດເຫັນຊັ້ນທີ່ຢູ່ລຸ່ມຫັດລົງໄປ. ຄວາມ ເສຍຫາຍດັ່ງກ່າວ ສາມາດເກີດຂຶ້ນຕາມໜ້າທາງປູຢາງ ແລະປູຢາງຂີ້ອ (asphalt).

ສາຍເຫດທີ່ພາໃຫ້ເກີດ:

- ການອະນາໄມ ຫລືການສີດຢາງລະລາຍໜ້າທາງເກົ່າບໍ່ພຽງພໍ ກ່ອນການລົງຊັ້ນໜ້າທາງ.
- ນ້ຳອອກບໍ່ຊຶມຜ່ານຊັ້ນຜິວໜ້າທາງລົງໄປທຳລາຍຊັ້ນເສື້ອທາງທີ່ຢູ່ລຸ່ມ.
- ຊັ້ນຮອງຮັບທີ່ຢູ່ທາງລຸ່ມບໍ່ມີຄວາມໜຽວເພື່ອເກາະຕິດກັນຊັ້ນທີ່ປູປົກໃໝ່.
- ຢາງປູໜ້າທາງຕິດກັບຕີນລີດທີ່ສັນຈອນໄປມາ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະທຳລາຍເມື່ອມັນສາມາດເຂົ້າໄປໃນບ່ອນຕໍ່ລະຫວ່າງສອງຊັ້ນຂອງຜິວໜ້າທາງ ແລະຊັ້ນທີ່ຢູ່ ທາງເທິງຈະລອກອອກເປັນແຜ່ນທັນທີໃນເວລາມີການກະທຳຂອງຍານພາຫານະໃນຈຸດດັ່ງກ່າວ.
- ຖ້າຮ້າຍແຮງ, ຈະເຮັດໃຫ້ການຂັບຂີ່ລົດຈັກບໍ່ນີ້ມນວນ ແລະອາດຈະເຮັດໃຫ້ຄວາມໄວ ຂອງ ການແລ່ນ ແລະການລະບາຍການຈາລະຈອນລົດລຸດລົງ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກ້ວາງ

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (11) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.1 ໜ້າທາງລອກອອກເປັນຈຸດ (CBSD)

ຮູບພາບ:

ตาตะลาง 2.5.2 (12) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລິດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ : 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.2 ຢາງຟູ (CBSF)

ລາຍລະອຽດ:

ແມ່ນການຟູຂຶ້ນຂອງຢາງປູທາງທີ່ນຳໃຊ້ປູຜິວໜ້າທາງ ແລະຈະເຮັດໃຫ້ໜ້າທາງເຫລື້ອມ ແລະໃສຄືກັນກັບແກ້ວ. ຢາງຟູມັກເກີດຂຶ້ນເມື່ອຢາງເຂົ້າອັດຊ່ອງຫວ່າງເຕັມໃນເວລາ ອາກາດຮ້ອນ ແລະຢາງຈະເຄື່ອນຍ້າຍອອກຈາກໜ້າທາງ.

ສາຍເຫດທີ່ພາໃຫ້ເກີດ:

- ການສີດຢາງປູທາງເກີນອັດຕາ.
- ການສີດຢາງກັນຊຶມເກີນອັດຕາ ແລະເຮັດໃຫ້ປະລິມານຢາງປູທາງເກີນກຳນົດ.
- ການສີດຢາງປູທາງຢູ່ຊັ້ນລຸ່ມຫລາຍເກີນໄປ (ເຊັ່ນ: ບ່ອນທີ່ຕາບ ຫລືອື່ນໆ).
- ມີການສີດຢາງປູທາງໃນຄະນະທີ່ຢາງກັນຊຶມຍັງບໍ່ທັນແຫ້ງດີເທື່ອ.
- ແຮ່ຝັງລົງໃນຊັ້ນພື້ນທາງເມື່ອຊັ້ນພື້ນທາງບໍ່ມີຄວາມແຂງແກ່ນ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ຜິວໜ້າທາງຈະໝີ່ນ ແລະຈະປັນອັນຕະລາຍແກ່ການສັນຈອນ.
- ຜິວໜ້າທາງຈະແຍກຕົວ ແລະແຕກອອກຈາກກັນໃນເວລາມີລົດມາຢຽບ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (12) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລິດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ : 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.2 ຢາງຟູ (CBSF)

ຮູບພາບ:



ตาตะลาง 2.5.2 (13) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.3 ການເກີດຂຸມຕາມໜ້າທາງ (CBSR)

ລາຍລະອຽດ:

ຄວາມເສຍຫາຍນີ້ແມ່ນເກີດຂຶ້ນຕາມໜ້າທາງໂດຍການສັງເກດເຫັນຫັ້ງຢາງປູທາງ ແລະ ແຮ່ລຸດລ່ອນອອກຈາກໜ້າທາງ.

ສາຍເຫດທີ່ພາໃຫ້ເກີດ:

- ການຊຸດໂຊມຂອງຢາງປູທາງ ຫລືຫີນ
- ມາດຖານການອອກແບບສ່ວນປະສົມຢາງຂີ້ຕໍ່າ
- ການຢຽບແໜ້ນບໍ່ພຽງພໍ
- ກໍ່ສ້າງໃນຊ່ວງລະດູຝົນ ຫລືອາກາດເຢັນ
- ນຳໃຊ້ແຮ່ທີ່ເປື້ອນແລະມີສິ່ງເຈືອປົນ.
- ອຸນຫະພູມໃນການປະສົມຢາງຂີ້ວ (asphalt) ເກີນກຳນົດ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ການລຸດລ່ອນອອກຂອງແຮ່ຈາກໜ້າທາງຈະພາໃຫ້ເກີດເປັນຝຸ່ນປົວຂຶ້ນ, ເກີດ ເປັນຄື້ນ, ນ້ຳຈະຂັງຕາມຂ່ອນທີ່ຫລຸບແລະຜິວໜ້າທາງຈະສູນເສຍແຮງຕ້ານທານ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (13) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.3 ການເກີດຂຸມຕາມໜ້າທາງ (CBSR)

ຮູບພາບ:

ตาตะลาง 2.5.2 (14) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.4 ການລຸດອອກຂອງຫີນໜ້າທາງ (CBSS)

ລາຍລະອຽດ:

ແມ່ນການລຸ້ຍຫ້ຽນຂອງຜິວໜ້າທາງປູຢາງຊຶ່ງເກີດຈາກການຈັບຂອງແຮ່ບໍ່ໄດ້ດີ ແລະ ການສູນເສຍຢາງປູທາງ. ໂດຍທົ່ວໄປແລ້ວແມ່ນເກີດຈາກຢາງປູທາງແຂງເກີນໄປ. ແຮ່ປູໜ້າທາງຈະຄ່ອຍໆລຸດລ່ອນອອກເທື່ອລະໜ້ອຍຈາກພື້ນທີ່ບໍ່ກວ້າງແລ້ວແຜ່ລາມໄປທົ່ວໜ້າທາງ.

ສາຍເຫດທີ່ພາໃຫ້ເກີດ:

- ປະລິມານຢາງປູທາງຕ່ຳ
- ການຈັບແໜ້ນລະຫວ່າງຢາງແລະຫີນບໍ່ໄດ້ດີ (ຫີນເປື້ອນ ຫລື ມີສິ່ງເຈືອປົນ,ປະສິດທິພາບໃນການເຄືອບຫີນບໍ່ດີພໍ ຫລື ຫີນປຽກ).
- ອາຍຸການນຳໃຊ້ ຫລື ການດູດຊຶມຂອງຢາງໝົດແລ້ວ.
- ຄຸນນະພາບຂອງຫີນບໍ່ດີ.
- ສ່ວນປະສົມຂອງຢາງປູທາງບໍ່ຖືກຕ້ອງ.
- ການຢຽບແໜ້ນບໍ່ພຽງພໍກ່ອນເປີດນຳໃຊ້.
- ວິທີການປະຕິບັດວຽກບໍ່ຖືກຕ້ອງ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ແຮ່ຈະບໍ່ຕິດກັບຢາງ ແລະ ແຍກໂຕໄປກອງຢູ່ແຄມທາງຊຶ່ງຈະເຮັດໃຫ້ຜິວໜ້າທາງມົ່ນ ແລະ ນ້ຳສາມາດຊຶມເຂົ້າໄປຊັ້ນເສື່ອທາງໄດ້ງ່າຍຂຶ້ນ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະ ຄວາມກວ້າງ

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (14) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.4 ການລຸດອອກຂອງຫີນໜ້າທາງ (CBSS)

ຮູບພາບ:



ตาตะลาง 2.5.2 (15) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.5 ການສູນເສຍແຮເປັນຈຸດ (CBSL)

ລາຍລະອຽດ:

ການເຄື່ອນຍ້າຍຂອງແຮ່ຈາກຜິວໜ້າທາງເປັນບ່ອນນ້ອຍໆ.

ສາຍເຫດທີ່ພາໃຫ້ເກີດ:

- ປະລິມານຢາງບໍ່ພຽງພໍຍ້ອນຄວາມຜິດພາດຈາກການສີດ.
- ແຮ່ປູໜ້າທາງເປິເປື້ອນໃນເວລາຢາຍ.
- ການຈືມລົງຂອງແຮ່ປູໜ້າທາງບໍ່ພຽງພໍ.
- ຄຸນນະພາບ ຫລືວິທີການປະຕິບັດວຽກບໍ່ດີ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ຈະກາຍເປັນຄວາມເສຍຫາຍປະເພດຕ່າງໆຕາມມາ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງ

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (15) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.5 ການສູນເສຍແຮເປັນຈຸດ (CBSL)

ຮູບພາບ:



ตาตะลาง 2.5.2 (16) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລິດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.6 ຫີນລຸດອອກເປັນບ່ອນ (CBST)

ລາຍລະອຽດ:

ປະລິມານຢາງປູທາງສິດລົງໃສ່ໜ້າທາງບໍ່ສະໝໍ່າສະເໝີຊຶ່ງເກີດຈາກຫົວສີດອຸດຕັນ ຫລື ບໍ່ຖືກຕ້ອງຕາມປົກກະຕິແມ່ນເກີດຕາມທາງຍາວຂະໜານກັບໃຈກາງທາງ.

ສາຍເຫດທີ່ພາໃຫ້ເກີດ:

- ການດຳເນີນງານຂອງລິດສີດຢາງມີຄວາມຜິດພາດ ຊຶ່ງເປັນເຫດໃຫ້ປະລິມານຢາງບໍ່ພຽງພໍຕາມທີ່ຕ້ອງການ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະສາມາດຊຶມລົງຫາຊັ້ນເສື່ອທາງ ຊຶ່ງເປັນສາຍເຫດພາໃຫ້ຜິວໜ້າທາງເກີດຂຸມຮັງໄກ່, ແລະ ຄວາມເສຍຫາຍປະເພດອື່ນໆຕາມມາ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງ

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (16) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລິດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.6 ຫີນລຸດອອກເປັນບ່ອນ (CBST)

ຮູບພາບ:





ตาตะลาง 2.5.2 (17) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.7 ແຮ່ປຸໜ້າທາງຫ້ຽນ (CBSG)

ລາຍລະອຽດ:

ແຮ່ຫ້ຽນ ຫລືແຮ່ປຸໜ້າທາງຝັງລົງໃນຊັ້ນພື້ນທາງ ແລະເຮັດໃຫ້ໜ້າທາງຫມົ່ນ, ເຫລື້ອມເກີດຂຶ້ນ.

ສາຍເຫດທີ່ພາໃຫ້ເກີດ:

- ຫີນຫ້ຽນລົງແຕ່ບໍ່ເຄື່ອນຍ້າຍອອກຈາກໜ້າທາງ (a).
- ແຮ່ປຸໜ້າທາງຝັງລົງໃນຊັ້ນພື້ນທາງ (b).

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ແຮ່ປຸໜ້າທາງຈະສືບຕໍ່ຫາຍໄປຈົນເຮັດໃຫ້ໜ້າທາງໝົ້ນຫລາຍຂຶ້ນ ໂດຍສະເພາະ ເວລາປຽກ. ນັ້ນຈະເປັນອັນຕະລາຍແກ່ການສັນຈອນ ແລະມີໂອກາດເກີດອຸບັດເຫດ ສູງ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (17) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.4 ໜ້າທາງເປ່ເພ (CBS)	ຄວາມເສຍຫາຍ: 1.1.4.7 ແຮ່ປຸໜ້າທາງຫ້ຽນ (CBSG)

ຮູບພາບ:

(a)



(b)



ตาตะลาง 2.5.2 (18) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 1. ໜ້າທາງລີດແລ່ນ	
ໝ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.5 ຂຸມຮັ່ງໄກ່ (CBP)	ຄວາມເສຍຫາຍ: 1.1.5 ຂຸມຮັ່ງໄກ່ (CBP)

ລາຍລະອຽດ:

ຂຸມຮັ່ງໄກ່ແມ່ນຂຸມທີ່ນ້ອຍມີຮູບຮ່າງຄືກັນກັບຖ້ວຍເກີດຂຶ້ນຕາມຜິວໜ້າທາງ/ຊັ້ນພື້ນທາງ, ຕາມປົກກະຕິແມ່ນມີຂະໜາດນ້ອຍກວ່າ1ແມັດ. ໂດຍທົ່ວໄປແລ້ວຂຸມຮັ່ງໄກ່ຂອບ ແລະ ຂ້າງຂອງຂຸມເປັນແນວສາກ. ຂຸມດັ່ງກ່າວນັ້ນຈະຂະຫຍາຍຕົວຢ່າງໄວເມື່ອມີນ້ຳຂັງ. ຂຸມຮັ່ງໄກ່ຈະແຕກອອກເທື່ອລະໜ້ອຍເມື່ອມີການສັນຈອນໄປມາຂອງພາຫານະ. ຊັ້ນເສື່ອທາງຈະສືບຕໍ່ເປ່ເພເພາະຄຸນນະພາບຂອງຜິວໜ້າທາງບໍ່ດີໃນບໍລິເວນຈຸດທີ່ຊັ້ນພື້ນທາງ ຫລື ຊັ້ນຍົກລະດັບ ຫລື ບ່ອນທີ່ມີຮອຍແຕກແໜງຮ້າຍແຮງ. ເມື່ອຂຸມເກີດຂຶ້ນຈາກຮອຍແຕກແໜງແບບໜັງແຂ້ທີ່ຮ້າຍແຮງ ຂຸມ ດັ່ງກ່າວນັ້ນຄວນກຳນົດໃຫ້ເປັນຂຸມຮັ່ງໄກ່ໄດ້.

ສາຍເຫດທີ່ພາໃຫ້ເກີດ:

- ປະລິມານຢາງທີ່ຍັບຈຸໃນອາດສະຟານຕ່ຳຫລາຍ.
- ອຸນຫະພູມເວລາປະສົມເກີນກຳນົດ.
- ຂະບວນການປະສົມມີຄຸນນະພາບຕ່ຳ.
- ການຢຽບແໜ້ນບໍ່ພຽງພໍ ຊຶ່ງອາດເຮັດໃຫ້ນ້ຳສາມາດຊຶມເຂົ້າໄດ້.
- ນ້ຳໜັກເກີນ.
- ການເປ່ເພເສຍຫາຍຊຶ່ງເກີດຈາກການທຳລາຍຂອງພາຫານະຕ້ອງໄດ້ທຳການສ້ອມແປງຄືນພາຍຫລັງເປີດໃຫ້ບໍລິການ.
- ເກີດຄວາມເສຍຫາຍຕາມຊັ້ນເສື່ອທາງ.
- ນ້ຳຖ້ວມ ແລະນ້ຳຊຶມລົງຊັ້ນເສື່ອທາງ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະຊຶມເຂົ້າໄປໃນຊັ້ນເສື່ອທາງ ຊຶ່ງເປັນສາຍເຫດເຮັດໃຫ້ຊັ້ນເສື່ອທາງ ແລະ ຊັ້ນທັດລົງໄປອ່ອນຕົວ ແລະ ບໍ່ສາມາດຮັບນ້ຳໜັກໄດ້. ສິ່ງທີ່ໄດ້ເວົ້າມານັ້ນອາດເປັນສາຍເຫດທີ່ເຮັດໃຫ້ຊັ້ນເສື່ອທາງເປ່ເພໄວກວ່າກຳນົດ.
- ຄວາມເສຍຫາຍຈະຂະຫຍາຍຢ່າງໄວ ຖ້າບໍ່ທຳການສ້ອມແປງ.
- ຄວາມສາມາດໃນການຂັບຂີ່ ແລະຄວາມໄວຂອງລົດຈະລຸດລົງ.
- ພາຫານະສາມາດເປ່ເພເສຍຫາຍໄດ້ ຖ້າຫາກເປັນຂຸມໃຫ່ຍ.
- ໂອກາດທີ່ຈະເກີດອຸບັດເຫດແມ່ນສູງ.

ตาตะลาง 2.5.2 (18) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 1. ໜ້າທາງລີດແລ່ນ	
ໝ້າວຽກຍ່ອຍ: 1.1 ຜິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.5 ຂຸມຮັ່ງໄກ່ (CBP)	ຄວາມເສຍຫາຍ: 1.1.5 ຂຸມຮັ່ງໄກ່ (CBP)

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກເສັ້ນຜ່າສູນກາງ ແລະຄວາມເລິກຂອງແຕ່ລະຂຸມ.
- ນັບຈຳນວນຂອງຂຸມທີ່ເກີດຂຶ້ນ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳທ່ຽງ

ຮູບພາບ:

ตาตะลาง 2.5.2 (19) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 1. ໜ້າທາງລີດແລ່ນ	
ໝ້າວຽກຍ່ອຍ: 1.1 ພິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.6 ສິ່ງກີດຂວາງຕ່າງໆ (CBO)	ຄວາມເສຍຫາຍ: 1.1.6 ສິ່ງກີດຂວາງຕ່າງໆ (CBO)

ລາຍລະອຽດ:

ກ້ອນຫີນ, ຕົ້ນໄມ້ ຫລື ທ່ຽ່ໄມ້, ກອງດິນ, ຂີ້ຊາຍ, ຊາກສັດ, ຂີ້ເຫຍື້ອ,ຊາກພະຫານະທີ່ຢູ່ຕາມໜ້າທາງລີດແລ່ນ.

ສາຍເຫດທີ່ພາໃຫ້ເກີດ:

- ສິ່ງທີ່ຕົກລົງມາຈາກຕົ້ນໄມ້ ຫລືເຈື່ອນມາຕາມຕາລິ່ງຂ້າງທາງ.
- ວັດຖຸສິ່ງຂອງທີ່ລົ້ມພັດມາ ຫລືໃຫຼມາກັບນ້ຳຕາມພິວໜ້າທາງ.
- ສິ່ງເສດເຫລືອຈາກຜູ້ຊົມໃຊ້ເສັ້ນທາງ.
- ສິ່ງເສດເຫລືອຈາກອຸບັດເຫດຕາມເສັ້ນທາງ.
- ສັດທີ່ຖືກລົດຕຳ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ເປັນອັນຕະລາຍຕໍ່ຜູ້ຊົມໃຊ້ເສັ້ນທາງ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (19) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 1. ໜ້າທາງລີດແລ່ນ	
ໝ້າວຽກຍ່ອຍ: 1.1 ພິວໜ້າທາງປູຢາງ	ການແບ່ງປະເພດຄວາມເສຍຫາຍ: 1.1.6 ສິ່ງກີດຂວາງຕ່າງໆ (CBO)	ຄວາມເສຍຫາຍ: 1.1.6 ສິ່ງກີດຂວາງຕ່າງໆ (CBO)

ຮູບພາບ:

ตาตะลาง 2.5.2 (20) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.2 ໜ້າທາງປູດ້ວຍເຍຕີ້ງ	ການແບ່ງປະເພດຄວາມເສຍຫາຍ: 1.2.1 ການຍຸບໂຕຂອງຮອຍຕໍ່ (CCJ)	ຄວາມເສຍຫາຍ: 1.2.1 ການຍຸບໂຕຂອງຮອຍຕໍ່ (CCJ)

ລາຍລະອຽດ:

ແມ່ນການເຄື່ອນໂຕຂອງແຜ່ນເຍຕີ້ງຕາມທາງຕັ້ງເມື່ອທຽບໃສ່ຂ້າງອື່ນໃນບໍລິເວນຮອຍຕໍ່.

ສາຍເຫດທີ່ພາໃຫ້ເກີດ:

- ການຢຽບແໜ້ນຊັ້ນຍົກລະດັບ/ຊັ້ນພື້ນທາງບໍ່ພຽງພໍ.
- ການຍຸບໂຕຂອງພື້ນດິນທີ່ມີຄວາມແຕກຕ່າງກັນ.
- ຍ້ອນແຮງດັນຂຶ້ນລົ່ງ.
- ການທຳໜ້າທີ່ຂອງເຫຼັກຕາມຮອຍຕໍ່ບໍ່ພຽງພໍ.
- ມີນ້ຳຊຶມລົ່ງຕາມຮອຍຕໍ່ຊຶ່ງເປັນສາຍເຫດທີ່ຈະເຮັດໃຫ້ຊັ້ນທີ່ຢູ່ທັດລົ່ງໄປອ່ອນຕົວ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ການຍຸບໂຕເພີ້ມຂຶ້ນຊຶ່ງອາດເປັນອັນຕະລາຍແກ່ການສັນຈອນ.
- ການຊຶມຂອງນ້ຳຫລາຍຂຶ້ນຊຶ່ງເປັນສາຍເຫດພາໃຫ້ວັດສະດຸອ່ອນໂຕ ແລະ ຊັ້ນຕ່າງໆຂອງທາງເກີດການເຊາະເຈື່ອນ.
- ເກີດຮອຍແຕກຕາມແຜ່ນເຍຕີ້ງບໍລິເວນໃກ້ຄຽງຮອຍຕໍ່.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (20) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.2 ໜ້າທາງປູດ້ວຍເຍຕີ້ງ	ການແບ່ງປະເພດຄວາມເສຍຫາຍ: 1.2.1 ການຍຸບໂຕຂອງຮອຍຕໍ່ (CCJ)	ຄວາມເສຍຫາຍ: 1.2.1 ການຍຸບໂຕຂອງຮອຍຕໍ່ (CCJ)

ຮູບພາບ:

ตาตะลาง 2.5.2 (21) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.2 ໜ້າທາງປູດ້ວຍເບຕົ້ງ	ການແບ່ງປະເພດຄວາມເສຍຫາຍ: 1.2.2 ຮອຍແຕກແຫ້ງ (CCC)	ຄວາມເສຍຫາຍ: 1.2.2 ຮອຍແຕກແຫ້ງ (CCC)
ລາຍລະອຽດ: ຮອຍແຕກແຫ້ງທາງຍາວ ແລະທາງຂວາງທີ່ເກີດຕາມຜິວໜ້າງທາງ.		
ສາຍເຫດທີ່ພາໃຫ້ເກີດ: • ສະພາບ ແລະເງື່ອນໄຂໃນເວລາກໍ່ສ້າງອາດແຫ້ງເກີນໄປ. • ຄວາມອາດສາມາດຮັບນ້ຳໜັກຂອງຊັ້ນຍົກລະດັບ/ຊັ້ນພື້ນທາງບໍ່ພຽງພໍ. • ຈຳນວນຮອຍຕໍ່/ການທຳໜ້າທີ່ຂອງຮອຍຕໍ່ບໍ່ພຽງພໍ. • ຄວາມໜາຂອງແຜ່ນເບຕົ້ງໜ້າທາງບໍ່ພຽງພໍ. • ຄຸນນະພາບຂອງເບຕົ້ງຕ່ຳ. • ການຍຸບໂຕຂອງພື້ນດິນມີຄວາມແຕກຕ່າງກັນ. • ນ້ຳໜັກລົດບັນທຸກເກີນ. • ບັນຫາສາທາລະນຸປະໂພກຕ່າງໆທີ່ຢູ່ພື້ນທາງ (ຕົວຢ່າງເຊັ່ນ: ນ້ຳປະປາຮົ່ວ/ແຕກ).		
ຜົນກະທົບ (ຖ້າປ່ອຍປະລະເລີຍ): • ຄວາມຍາວ ຫລື ຄວາມກວ້າງຂອງຮອຍແຕກແຫ້ງເພີ້ມຂຶ້ນຊຶ່ງຈະເຮັດໃຫ້ຊັ້ນເສື່ອທາງເປ່ເພເສຍຫາຍ. • ນ້ຳຈະຊຶມລົງຕາມຮອຍແຕກແຫ້ງ ຊຶ່ງຈະເຮັດໃຫ້ທາງບວມ ແລະ ເປ່ເພເສຍຫາຍ ໃນທີ່ສຸດ.		
ວິທີການບັນທຶກໃນເວລາສຳຫຼວດ: • ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງຂອງຮອຍແຕກແຫ້ງ.		
ເຄື່ອງມືໃນການສຳຫຼວດ: • ໄມ້ແມັດ		

ตาตะลาง 2.5.2 (21) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລີດແລ່ນ	
ໜ້າວຽກຍ່ອຍ: 1.2 ໜ້າທາງປູດ້ວຍເບຕົ້ງ	ການແບ່ງປະເພດຄວາມເສຍຫາຍ: 1.2.2 ຮອຍແຕກແຫ້ງ (CCC)	ຄວາມເສຍຫາຍ: 1.2.2 ຮອຍແຕກແຫ້ງ (CCC)
ຮູບພາບ: 		

ตาตะลาง 2.5.2 (22) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລິດແລ່ນ	
ໜ້າວຽກຍ່ອຍ: 1.2 ໜ້າທາງປູດ້ວຍເຍຕີງ	ການແບ່ງປະເພດຄວາມເສຍຫາຍ: 1.2.3 ຜິວໜ້າທາງກຸດຫ້ຽນ (CCS)	ຄວາມເສຍຫາຍ: 1.2.3 ຜິວໜ້າທາງກຸດຫ້ຽນ (CCS)

ລາຍລະອຽດ:

ລາຍຂອງຜິວໜ້າທາງກຸດຫ້ຽນ ຫລືລອກອອກຊຶ່ງເກີດຈາກການກະທຳຂອງຍານພາຫານະ.

ສາຍເຫດທີ່ພາໃຫ້ເກີດ:

- ຫີນປະສົມເຍຕີງບໍ່ມີຄວາມແຂງແກ່ນພໍ.
- ວຽກການກໍ່ສ້າງບໍ່ຖືກຕ້ອງຕາມເຕັກນິກ (ຕົວຢ່າງເຊັ່ນ: ການຢຽບແໜ້ນບໍ່ພຽງພໍ, ວິທີການປະສົມເຍຕີງບໍ່ເໝາະສົມ, ປະເພດ ຫລືຄວາມເລິກຂອງລາຍໜ້າທາງບໍ່ມີຄວາມ ເໝາະສົມ).

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ໜ້າທາງຈະບໍ່ມີຄວາມຫຍາບຊາເພື່ອຈັບກັບຢາງລົດ ຊຶ່ງອາດຈະບໍ່ມີຄວາມປອດໄພໃນເວລາ ແລ່ນລົດ.
- ນ້ຳອາດຈະບໍ່ສາມາດໄຫຼອອກຈາກໜ້າທາງລົດແລ່ນ ແລະ ຈະຂັງຢູ່ຕາມໜ້າທາງຊຶ່ງອາດຈະກໍ່ໃຫ້ເກີດອຸ ບັດເຫດໃນເວລາແລ່ນລົດ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (22) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 1. ໜ້າທາງລິດແລ່ນ	
ໜ້າວຽກຍ່ອຍ: 1.2 ໜ້າທາງປູດ້ວຍເຍຕີງ	ການແບ່ງປະເພດຄວາມເສຍຫາຍ: 1.2.3 ຜິວໜ້າທາງກຸດຫ້ຽນ (CCS)	ຄວາມເສຍຫາຍ: 1.2.3 ຜິວໜ້າທາງກຸດຫ້ຽນ (CCS)

ຮູບພາບ:

ຕາຕະລາງ 2.5.2 (23) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ບ່າທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.1 ການປ່ຽນແປງຮູບຮ່າງ (RSD)	ຄວາມເສຍຫາຍ: 2.1.1.1 ການຍຸບໂຕ (RSDD)

ລາຍລະອຽດ:

ການປ່ຽນແປງຂອງຜິວໜ້າທາງຈາກຮູບຮ່າງເດີມ (ຕາມທີ່ໄດ້ອະທິບາຍຜ່ານມາສຳຫລັບທາງເປັນຄື້ນ ຫລື ທາງເກີດ ຄອງລໍ້ລົດ). ຕາມປົກກະຕິແລ້ວການຍຸບໂຕຈະມັກມີຮູບຮ່າງຄືກັນ ກັບຈານ, ຖ້ວຍ ຫລືອ່າງ ຊຶ່ງການຍຸບຕົວດັ່ງກ່າວແມ່ນເກີດຈາກການສັນຈອນຂອງ ຍານພາຫານະ.

ສາຍເຫດທີ່ພາໃຫ້ເກີດ:

- ການຍຸບໂຕຂອງວັດສະດຸຊັ້ນຍົກລະດັບ ຫລືຊັ້ນພື້ນທາງແຕກຕ່າງກັນ.
- ຊັ້ນທີ່ຢູ່ລຸ່ມຊັ້ນຍົກລະດັບແມ່ນບໍ່ມີ.
- ຕາລິ່ງຄັນທາງເປ່ເພເສຍຫາຍ.
- ພາຫານະແລ່ນຢູ່ເທິງບ່າທາງ ແລະວັດສະດຸຕາມບ່າທາງຈະຫ້ຽນລົງ.
- ນ້ຳກັດເຊາະບ່າທາງ.
- ໜ້າທາງລົດແລ່ນຖືກປູທັບອີກຊັ້ນໜຶ່ງ ແລະປ່ອຍໃຫ້ຜິວໜ້າຂອງບ່າງທາງຕ່ຳກວ່າຊັ້ນເສື້ອທາງ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຈະຂັງຢູ່ໃນບໍລິເວນທີ່ມີການຍຸບໂຕ ແລະ ສາມາດຊຶມລົງຫາຊັ້ນເສື້ອທາງທີ່ຢູ່ລຸ່ມ ແລະ ຈະເຮັດໃຫ້ຊັ້ນ ຕ່າງໆເຫລົ່ານັ້ນເປ່ເພເສຍຫາຍໄວຂຶ້ນ.
- ການຍຸບໂຕສາມາດຂະຫຍາຍ ແລະກາຍເປັນຮອຍແຕກແຫງ ແລະຂຸມຮັງໄກ່ໄດ້.
- ໂຄງສ້າງຊັ້ນເສື້ອທາງຈະບໍ່ສາມາດຮັບນ້ຳໜັກໄດ້ຢ່າງເຕັມທີ່.
- ຂອບຂອງຊັ້ນເສື້ອທາງຈະແຕກອອກເມື່ອມີຍານພາຫານະມາຢຽບ.
- ໂອກາດເກີດອຸບັດເຫດແມ່ນມີສູງ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ, ຄວາມກວ້າງ ແລະຄວາມເລິກສະເລ່ຍ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳທ່ຽງ

ຕາຕະລາງ 2.5.2 (23) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ບ່າທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.1 ການປ່ຽນແປງຮູບຮ່າງ (RSD)	ຄວາມເສຍຫາຍ: 2.1.1.1 ການຍຸບໂຕ (RSDD)

ຮູບພາບ:





ตาตะลาง 2.5.2 (24) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.1 ບ່າທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.1 ການປ່ຽນແປງຮູບຮ່າງ (RSD)	ຄວາມເສຍຫາຍ: 2.1.1.2 ຄອງລໍ້ລຶກ (RSDR)

ລາຍລະອຽດ:

ຄອງລໍ້ລຶກແມ່ນການຫລຸບລົງຕາມຜິວໜ້າຂອງບ່າທາງຕາມທາງຍາວ.

ສາຍເຫດທີ່ພາໃຫ້ເກີດ:

- ໜ້າທາງລຶກແລ່ນແຄບເກີນໄປ.
- ວັດສະດຸທີ່ບໍ່ຫລອມຫລາຍເກີນໄປ.
- ການຢຽບແໜ້ນຂອງຍານພາຫານະ.
- ນ້ຳໜັກບັນທຸກເກີນ.
- ການກໍ່ສ້າງຕື້ນເກີນໄປ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ບ່າທາງຈະຊຸດໂຊມ ແລະເປ່ເພເສຍຫາຍ.
- ນ້ຳຈະຂັງຕາມຄອງລໍ້ລຶກ ແລະສາມາດຊຶມລົງໄປຫາຊັ້ນເສື້ອທາງທີ່ຢູ່ລຸ່ມ ແລະຈະເຮັດໃຫ້ຊັ້ນດັ່ງກ່າວເຫລົ່ານັ້ນເປ່ເພເສຍຫາຍ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກລວງຍາວ ແລະຄວາມເລິກສະເລ່ຍ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳໜ່ຽງ

ตาตะลาง 2.5.2 (24) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.1 ບ່າທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.1 ການປ່ຽນແປງຮູບຮ່າງ (RSD)	ຄວາມເສຍຫາຍ: 2.1.1.2 ຄອງລໍ້ລຶກ (RSDR)

ຮູບພາບ:

ตาตะลาง 2.5.2 (25) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.1 ຂ່າ ທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາ ຍ: 2.1.1 ການປ່ຽນແປງຮູບຮ່າງ (RSD)	ຄວາມເສຍຫາຍ: 2.1.1.3 ຂ່າທາງສູງກວ່າໜ້າທາງ (RSDH)

ລາຍລະອຽດ:

ການປ່ຽນແປງຂອງຜິວໜ້າຈາກຮູບຮ່າງເດີມ. ການຍົກຂຶ້ນຂອງຜິວໜ້າທີ່ສູງກວ່າໜ້າທາງ ລົດແລ່ນ.

ສາຍເຫດທີ່ພາໃຫ້ເກີດ:

- ດິນຈາກຕາລິ່ງດິນຕັດເຈື່ອນລົງມາຖົມຂ່າທາງ.
- ພືດທີ່ເກີດຕາມຂ່າທາງຈະຍຶດອັດສະດຸໄວ້.
- ອັດສະດຸທີ່ສະສົມຕາມຂ່າທາງແມ່ນມາຈາກຍານພາຫານະ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳທີ່ໄຫຼມາຈາກໜ້າທາງຈະຂັງຢູ່ຕາມຂອບທາງ ແລະເຮັດໃຫ້ຊັ້ນເສື້ອທາງ ແລະ ຂ່າທາງອ່ອນຕົວ.
- ເປັນອັນຕະລາຍແກ່ການສັນຈອນ.
- ຮ່ອງຂ້າງທາງຈະຖືກອຸດຕັນຈາກອັດສະດຸທີ່ຕົກຄ້າງຕາມຂ່າທາງ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກລວງຍາວ, ຄວາມກວ້າງ ແລະຄວາມສູງສະເລ່ຍ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳໜ່ຽງ

ตาตะลาง 2.5.2 (25) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.1 ຂ່າ ທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາ ຍ: 2.1.1 ການປ່ຽນແປງຮູບຮ່າງ (RSD)	ຄວາມເສຍຫາຍ: 2.1.1.3 ຂ່າທາງສູງກວ່າໜ້າທາງ (RSDH)

ຮູບພາບ:



ตาตะลาง 2.5.2 (26) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ข่าทาง (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.1 ການປ່ຽນແປງຮູບຮ່າງ (RSD)	ຄວາມເສຍຫາຍ: 2.1.2.1 ການກັດເຊາະ (RSSS)

ລາຍລະອຽດ:

ນ້ຳໄຫຼພັດເອົາວັດສະດຸຕາມຜິວໜ້າທາງ.

ສາຍເຫດທີ່ພາໃຫ້ເກີດ:

- ການລະບາຍນ້ຳຕາມຂອບທາງບໍ່ດີພໍ.
- ການຕຳແໜ້ນຂອບທາງບໍ່ໄດ້ດີ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ເປັນອັນຕະລາຍແກ່ຜູ້ຂັບຂີ່ລົດຈັກ.
- ທາງຈະຊຸດໂຊມເຊັ່ນ: ເກີດມີການບວມຂອງຊັ້ນເສື້ອທາງ ແລະການອ່ອນຕົວ ຍ້ອນນ້ຳ.
- ข่าทาง ແລະຂອບຂອງຊັ້ນເສື້ອທາງຈະແຕກອອກຈາກກັນ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກລວງຍາວ ແລະຄວາມກ້ວາງ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ตาตะลาง 2.5.2 (26) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ข่าทาง (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.1 ການປ່ຽນແປງຮູບຮ່າງ (RSD)	ຄວາມເສຍຫາຍ: 2.1.2.1 ການກັດເຊາະ (RSSS)

ຮູບພາບ:



ตาตะลาง 2.5.2 (27) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ບ່າທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.3 ຂຸມຮັ່ງໄກ່ (RSP)	ຄວາມເສຍຫາຍ: 2. 1.3 ຂຸມຮັ່ງໄກ່ (RSP)

ລາຍລະອຽດ:

ມີຮູບຮ່າງຄ້າຍຄືຖ້ວຍເກີດຂຶ້ນຕາມຜິວໜ້າທາງບາງຂຸມກໍ່ມີລັກສະນະເປັນຮູບໄຂ່ ຫລື ຮູບຮ່າງບໍ່ແນ່ນອນ.

ສາຍເຫດທີ່ພາໃຫ້ເກີດ:

- ນ້ຳຂັງເປັນບວກ.
- ການອ່ອນຕົວຂອງຊັ້ນຕ່າງໆສູງ ຊຶ່ງອາດເກີດຈາກຄວາມຊຸ່ມ ແລະປະລິມານ ການສັນຈອນ.
- ການຢຽບແໜ້ນໃນເບື້ອງຕົ້ນບໍ່ພຽງພໍ.
- ຄຸນນະພາບຂອງວັດສະດຸປ່ຽນແປງ.
- ຄວາມໜາຂອງບ່າທາງບໍ່ພຽງພໍ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ຖ້າປ່ອຍປະໂດຍບໍ່ໄດ້ຮັບການສ້ອມແປງ, ຄວາມເສຍຫາຍຈະຂະຫຍາຍຕົວຢ່າງໄວ.
- ນ້ຳຈະຂັງແລ້ວຊຶມລົງໄປຫາຊັ້ນເສື່ອທາງ ແລະຈະເຮັດໃຫ້ທາງເປ່ເພໄວຂຶ້ນ.
- ບ່າທາງເປ່ເພຈະສົ່ງຜົນເຮັດໃຫ້ໜ້າທາງເປ່ເພໄດ້.

ວິທີການບັນທຶກໃນເວລາສຳຫຼວດ:

- ວັດແທກຂະໜາດ ແລະຄວາມເລິກຂອງຮັ່ງໄກ່ແຕ່ລະຂຸມ.
- ນັບຈຳນວນຂຸມຮັ່ງໄກ່ທີ່ເກີດຂຶ້ນ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳໜ່ຽງ

ตาตะลาง 2.5.2 (27) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ບ່າທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.3 ຂຸມຮັ່ງໄກ່ (RSP)	ຄວາມເສຍຫາຍ: 2. 1.3 ຂຸມຮັ່ງໄກ່ (RSP)

ຮູບພາບ:

ตาตะลาง 2.5.2 (28) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ຂ່າທາງ (ທີ່ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.4 ສິ່ງກີດຂວາງຕ່າງໆ (RSO)	ຄວາມເສຍຫາຍ: 2.1.4 ສິ່ງກີດຂວາງຕ່າງໆ (RSO)

ລາຍລະອຽດ:

ກ້ອນຫີນ, ຕົ້ນໄມ້ ຫລືຫ່ຳໄມ້, ຂີ້ດິນ, ຂີ້ຝຸ່ນທີ່ມາຕາມລົມ, ຊາກສັດ ແລະ ຊາກລົດ/ສິ່ງເສດເຫລືອຕາມຂ່າ ທາງ.

ສາຍເຫດທີ່ພາໃຫ້ເກີດ:

- ສິ່ງທີ່ຕົກລົງມາຈາກຕົ້ນໄມ້ ຫລືເຈື່ອນມາຕາມຕາລິ່ງຂ້າງທາງ.
- ວັດຖຸສິ່ງຂອງທີ່ລົມພັດມາ ຫລືໄຫຼມາກັບນ້ຳຕາມຜິວໜ້າທາງ.
- ສິ່ງເສດເຫລືອຈາກຜູ້ຊົມໃຊ້ເສັ້ນທາງ.
- ສິ່ງເສດເຫລືອຈາກອຸບັດເຫດຕາມເສັ້ນທາງ.
- ສັດທີ່ຖືກລົດຕຳ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ເປັນອັນຕະລາຍຕໍ່ຜູ້ຊົມໃຊ້ເສັ້ນທາງ.
- ກີດຂວາງນ້ຳໄຫຼອອກຈາກໜ້າທາງລົດແລ່ນ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (28) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ຂ່າທາງ (ທີ່ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.4 ສິ່ງກີດຂວາງຕ່າງໆ (RSO)	ຄວາມເສຍຫາຍ: 2.1.4 ສິ່ງກີດຂວາງຕ່າງໆ (RSO)

ຮູບພາບ:



ຕາຕະລາງ 2.5.2 (29) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ບ່າ ທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.5 ປ່າສູງ/ຫຍ້າຍາວ (RSV)	ຄວາມເສຍຫາຍ: 2.1.5 ປ່າສູງ/ຫຍ້າຍາວ (RSV)

ລາຍລະອຽດ:

ການເຕີບໂຕຂອງພືດຕາມບ່າທາງ ແລະຂ້າງທາງ.

ສາຍເຫດທີ່ພາໃຫ້ເກີດ:

- ຫຍ້າ, ພືດ, ປ່າ ຫລືຕົ້ນໄມ້ທີ່ອະນຸຍາດໃຫ້ເກີດຕາມບ່ອນທີ່ບໍ່ມີຄວາມທົນທານ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ນ້ຳຕາມຜິວໜ້າທາງສາມາດຂັງຢູ່ຕາມຂອບຂອງທາງ ແລະເຮັດໃຫ້ໂຄງສ້າງຊັ້ນເສື້ອທາງ ອ່ອນຕົວ.
- ດິນເມັດແລບຈະສະສົມຢູ່ຕາມຂອບຂອງທາງ.
- ໄລຍະແນມເຫັນຂອງຜູ້ຊົມໃຊ້ເສັ້ນທາງແມ່ນລຸດລົງ ແລະ ຄວາມສ່ຽງໃນການເກີດອຸບັດເຫດ ແມ່ນມີສູງ.
- ອັນຕະລາຍຈາກອັກຄີໄພໃນຊ່ວງລະດູແລ້ງແມ່ນມີສູງ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ຕາຕະລາງ 2.5.2 (29) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.1 ບ່າ ທາງ (ບໍ່ໄດ້ປູຜິວໜ້າ)	ການແບ່ງປະເພດຄວາມເສຍຫາຍ: 2.1.5 ປ່າສູງ/ຫຍ້າຍາວ (RSV)	ຄວາມເສຍຫາຍ: 2.1.5 ປ່າສູງ/ຫຍ້າຍາວ (RSV)

ຮູບພາບ:



ຕາຕະລາງ 2.5.2 (30) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ: 2.2.1 ການພັງທະລາຍ (RLC)	ຄວາມເສຍຫາຍ: 2.2.1.1 ການພັງຂອງໂຄງສ້າງປ້ອງກັນຕາລິ່ງ (RLCP)

ລາຍລະອຽດ:

ໂຄງສ້າງປ້ອງກັນການເຈື່ອນຂອງຕາລິ່ງພັງທະລາຍ ແລະໂຄງສ້າງດັ່ງກ່າວບໍ່ສາມາດ ທຳໜ້າທີ່ໄດ້ຕາມການອອກແບບ.

ສາຍເຫດທີ່ພາໃຫ້ເກີດ:

(ຕາລິ່ງດິນຕັດ)

- ຄຸນນະພາບຂອງວັດສະດຸບໍ່ດີ.
- ຄວາມອາດສາມາດຮັບນ້ຳໜັກ ຂອງໂຄງສ້າງ ບໍ່ໄດ້ດີ.
- ມີຫີນຕົກລົງມາ.
- ຕາລິ່ງແຕກແຫງຍ້ອນບໍ່ໄດ້ມີການຢຽບແໜ້ນຜິວໜ້າທີ່ເໝາະສົມ.
- ຕາລິ່ງດິນຕັດບໍ່ມີຄວາມໝັ້ນຄົງ.

(ຕາລິ່ງດິນຖົມ)

- ຄັນທາງບໍ່ມີຄວາມໝັ້ນຄົງ.
- ຄຸນນະພາບຂອງວັດສະດຸດິນຖົມບໍ່ດີ.
- ການຄວບຄຸມຄຸນນະພາບການກໍ່ສ້າງບໍ່ໄດ້ດີ.
- ການປ່ຽນແປງຕາມລະດູການຂອງຕາລິ່ງ.
- ຕີນຂອງຄັນທາງຖືກແມ່ນ້ຳກັດເຊາະ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

(ຕາລິ່ງດິນຕັດ)

- ມາດຕະການແກ້ໄຂຄວາມເສຍຫາຍຂອງຕາລິ່ງແມ່ນບໍ່ດີ.
- ນ້ຳຝົນຈະເຮັດໃຫ້ຕາລິ່ງອ່ອນ ແລະບວມ.
- ເກີດການເຊາະເຈື່ອນ,ຫີນຕົກແລະດິນເຈື່ອນ.

(ຕາລິ່ງດິນຖົມ)

- ອາດຈະສົ່ງຜົນກະທົບຕໍ່ການປິດທາງຫລື ເປັນອັນຕະລາຍແກ່ການລະບາຍການຈາລະຈອນ.
- ຮ່ອງຂ້າງທາງ ແລະ ໂຄງສ້າງເບຕົ້ງອື່ນໆອາດຖືກທຳລາຍແລະເຮັດໃຫ້ລະບົບລະບາຍນ້ຳມີບັນຫາ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ, ຄວາມກວ້າງ ແລະຄວາມສູງຂອງຕອນທີ່ເປ່ເພ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳໜ່ຽງ

ຕາຕະລາງ 2.5.2 (30) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ: 2.2.1 ການພັງທະລາຍ (RLC)	ຄວາມເສຍຫາຍ: 2.2.1.1 ການພັງຂອງໂຄງສ້າງປ້ອງກັນຕາລິ່ງ (RLCP)

ຮູບພາບ:

ตาตะลาง 2.5.2 (31) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ : 2.2.1 ການພັງທະລາຍ (RLC)	ຄວາມເສຍຫາຍ: 2.2.1.2 ການພັງທະລາຍຂອງຄັນທາງ (RLCE)

ລາຍລະອຽດ:

ຄັນທາງມີການເຄື່ອໜັງ ແລະຈະເຮັດໃຫ້ໂຄງສ້າງທັງໝົດເປ່ເພ, ບໍ່ມີສະຖຽນລະພາບ ແລະບໍ່ມີຄວາມປອດໄພຕໍ່ກັບນ້ຳໜັກຂອງການອອກແບບ.

ສາຍເຫດທີ່ພາໃຫ້ເກີດ:

- ຂາດການຢຽບແໜ້ນ.
- ວັດສະດຸບໍ່ດີ.
- ເກີດການອີ່ມຕົວຂອງນ້ຳເນື່ອງຈາກຂາດລະບົບລະບາຍນ້ຳ ຫລືນ້ຳຖ້ວມ.
- ຊັ້ນຍົກລະດັບອ່ອນຕົວຍ້ອນນ້ຳໃຕ້ດິນ ຫລືຂາດລະບົບລະບາຍນ້ຳ.
- ເກີດການເຊາະເຈື່ອນຕາມຕີນຂອງຄັນທາງເນື່ອງຈາກການກະທຳຂອງນ້ຳ.
- ແຜ່ນດິນໄຫວ ຫລືໄພທຳມະຊາດອື່ນໆ.
- ນ້ຳໜັກເກີນ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ທາງຖືກປິດ ອາດຈະສົ່ງຜົນສະທ້ອນຕໍ່ການສັນຈອນ.
- ມີຄວາມຫຍຸ້ງຍາກໃນການກໍ່ສ້າງຄືນ ແລະມີລາຄາແພງ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (31) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ : 2.2.1 ການພັງທະລາຍ (RLC)	ຄວາມເສຍຫາຍ: 2.2.1.2 ການພັງທະລາຍຂອງຄັນທາງ (RLCE)

ຮູບພາບ:

ตาตะลาง 2.5.2 (32) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ: 2.2.2 ການຕົກ (RLF)	ຄວາມເສຍຫາຍ: 2.2.2.1 ດິນເຈື່ອນ (RLFE)

ສາຍເຫດທີ່ພາໃຫ້ເກີດ:

ການເຈື່ອນຂອງວັດສະດຸຕາມຕາລິ່ງ ຍ້ອນຄວາມບໍ່ໝັ້ນຄົງຂອງຕາລິ່ງ ຫລືການຊຶມຂອງນ້ຳ.

ສາຍເຫດທີ່ພາໃຫ້ເກີດ:

(ຕາລິ່ງດິນຕັດ)

- ຄວາມເນີນຂອງຕາລິ່ງຊັນເກີນໄປ.
- ບໍ່ມີລະບົບລະບາຍນ້ຳ.
- ບໍ່ມີການຕັດເປັນພັກ ແລະຮ່ອງລະບາຍນ້ຳ ຕາມພັກດິນຕັດ.
- ນ້ຳຝົນ ແລະນ້ຳໃຕ້ດິນໄຫຼຢູ່ລະຫວ່າງດິນ ປູກຝັງ ແລະຮອຍແຕກຫີນທີ່ຢູ່ພື້ນ.
- ການຕົກຂອງຫີນ ຫລືຫີນມີແນວໂນ້ມທີ່ ຈະເຈື່ອນ.

(ຕາລິ່ງດິນຖົມ)

- ມີນ້ຳໄຫຼຢູ່ລະຫວ່າງໜ້າດິນທຳ ມະຊາດ ແລະດິນຖົມ.
- ວິທີການກໍ່ສ້າງບໍ່ດີ.
- ຄວາມເນີນຂອງຕາລິ່ງຊັນເກີນໄປ
- ບໍ່ມີການຕັດເປັນພັກ ແລະຮ່ອງລະບາຍນ້ຳ ຕາມພັກດິນຕັດ.
- ບໍ່ມີການຢຽບແໜ້ນທີ່ເໝາະສົມ.
- ຄວາມສາມາດຮັບນ້ຳໜັກຂອງຊັ້ນທີ່ຢູ່ລຸ່ມບໍ່ໄດ້ດີ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

(ຕາລິ່ງດິນຕັດ)

- ອາດຈະກໍ່ໃຫ້ເກີດບັນຫາຮ້າຍແຮງສຳຫລັບຜູ້ຊົມໃຊ້ເສັ້ນທາງ.
- ອາດຈະສົ່ງຜົນສະທ້ອນເຖິງການປິດເສັ້ນທາງໃນໄລຍະຍາວ.
- ນ້ຳບໍ່ສາມາດໄຫຼຕາມຮ່ອງຂ້າງທາງ ແລະຈະ ຂັງຢູ່ຕາມຮ່ອງ.

(ຕາລິ່ງດິນຖົມ)

- ອາດຈະກໍ່ໃຫ້ເກີດບັນຫາຮ້າຍແຮງສຳຫລັບຜູ້ຊົມໃຊ້ເສັ້ນທາງ.
- ອາດຈະສົ່ງຜົນສະທ້ອນເຖິງການປິດເສັ້ນທາງໃນໄລຍະຍາວ.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ, ຄວາມກວ້າງ ແລະຄວາມສູງ/ເລິກຂອງຕອນທີ່ເປ່ເພ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ
- ໄມ້ວັດແທກທີ່ມີນ້ຳທ່ຽງ

ตาตะลาง 2.5.2 (32) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ: 2.2.2 ການຕົກ (RLF)	ຄວາມເສຍຫາຍ: 2.2.2.1 ດິນເຈື່ອນ (RLFE)

ຮູບພາບ:



ตาตะลาง 2.5.2 (33) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ: 2.2.2 ການຕົກຂອງຫີນ (RLF)	ຄວາມເສຍຫາຍ: 2.2.2.2 ການກົ້ງຂອງກ້ອນຫີນ (RLFR)

ສາຍເຫດທີ່ພາໃຫ້ເກີດ:

ກ້ອນຫີນຕົກຈາກທີ່ສູງຍ້ອນແຮງດຶງດູດຂອງໜ່ວຍໂລກ.

ສາຍເຫດທີ່ພາໃຫ້ເກີດ:

- ເກີດການຕົກຂອງຫີນ.
- ການຄວບຄຸມຄຸນນະພາບໃນວຽກການກໍ່ສ້າງຕ່ຳ.
- ການປ່ຽນແປງຂອງດິນຟ້າອາກາດ.
- ຮອຍຕໍ່ຂອງຫີນມີການຂະຫຍາຍຕົວ.
- ມີນ້ຳອອກບໍ່.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ທາງຖືກປິດຊຶ່ງອາດສົ່ງຜົນສະທ້ອນຕໍ່ການສັນຈອນ.
- ເກີດຄວາມເສຍຫາຍຕາມຮ່ອງຂ້າງທາງ ແລະ ໂຄງສ້າງເຂຕົ້ງອື່ນໆຊຶ່ງອາດເຮັດໃຫ້ລະບົບລະບາຍນ້ຳມີບັນຫາ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ.

ตาตะลาง 2.5.2 (33) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ: 2.2.2 ການຕົກຂອງຫີນ (RLF)	ຄວາມເສຍຫາຍ: 2.2.2.2 ການກົ້ງຂອງກ້ອນຫີນ (RLFR)

ຮູບພາບ:



ตาตะลาง 2.5.2 (34) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ: 2.2.3 ການກັດເຊາະ (RLE)	ຄວາມເສຍຫາຍ: 2.2.3 ການກັດເຊາະ (RLE)

ລາຍລະອຽດ:

ອັດສະດຸໄດ້ຖືກກັດເຊາະຕາມທຳມະຊາດຍ້ອນນ້ຳ ຫລື ລົມ.

ສາຍເຫດທີ່ພາໃຫ້ເກີດ:

(ຕາລິ່ງດິນຕັດ)

- ຕາລິ່ງຊັນເກີນໄປ.
- ຄຸນນະພາບອັດສະດຸບໍ່ດີ.
- ຜິວໜ້າຕາລິ່ງບໍ່ໄດ້ຮັບການປ້ອງກັນການເຊາະເຈື່ອນ.
- ນ້ຳຝົນ, ນ້ຳອອກບໍ່ ແລະນ້ຳຕາມ ທຳມະຊາດ.
- ການປ່ຽນແປງຂອງຕະລິ່ງຕາມສະພາບ ອາກາດ.
- ການຢຽບແໜ້ນໃນຊ່ວງການກໍ່ສ້າງບໍ່ມີຄວາມເໝາະສົມ.
- ບໍ່ມີລະບົບລະບາຍນ້ຳຕາມຕາລິ່ງ.

(ຕາລິ່ງດິນຖົມ)

- ຕາລິ່ງຊັນເກີນໄປ.
- ບໍ່ມີລະບົບລະບາຍນ້ຳ.
- ວິທີການກໍ່ສ້າງບໍ່ໄດ້ດີ ຫລືຄຸນນະພາບອັດສະດຸຕ່ຳ.
- ຜິວໜ້າຕາລິ່ງບໍ່ໄດ້ຮັບການປ້ອງກັນການເຊາະເຈື່ອນ.
- ນ້ຳຝົນ, ນ້ຳອອກບໍ່ ແລະນ້ຳຕາມ ທຳມະຊາດ
- ການໄຫລຂອງແມ່ນ້ຳ ຫລືຟອງທະເລ. ການປ່ຽນແປງຂອງຕາລິ່ງຕາມສະພາບອາກາດ.
- ການຢຽບແໜ້ນໃນຊ່ວງການກໍ່ສ້າງບໍ່ມີຄວາມເໝາະສົມ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

(ຕາລິ່ງດິນຕັດ)

- ທາງອາດຈະຖືກປິດ ແລະລົບກວນ ການສັນຈອນ.
- ຮ່ອງຂ້າງທາງ ແລະໂຄງສ້າງເບຕົ້ງອື່ນໆ ອາດຈະຖືກທຳລາຍ, ຍ້ອນບັນຫາ ລະບົບລະບາຍນ້ຳ.

(ຕາລິ່ງດິນຖົມ)

- ບ່າທາງ ແລະພື້ນທາງຈະພັງທະລາຍ.
- ດິນເຈື່ອນອາດເກີດຂຶ້ນ.
- ຮ່ອງຂ້າງທາງ ແລະ ໂຄງສ້າງເບຕົ້ງອື່ນໆ ອາດຈະຖືກທຳລາຍ, ຍ້ອນບັນຫາລະບົບລະບາຍນ້ຳ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ตาตะลาง 2.5.2 (34) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 2. ບໍລິເວນຂ້າງທາງ	
ໜ້າວຽກຍ່ອຍ: 2.2 ຕາລິ່ງ	ການແບ່ງປະເພດຄວາມເສຍຫາຍ: 2.2.3 ການກັດເຊາະ (RLE)	ຄວາມເສຍຫາຍ: 2.2.3 ການກັດເຊາະ (RLE)

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ຮູບພາບ:



ตาตะลาง 2.5.2 (35) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.2 ຕະຫລິ່ງທາງ	ການແບ່ງປະເພດຄວາມເສຍຫາຍ: 2.2.4 ປ່າຕຶບ (RLV)	ຄວາມເສຍຫາຍ: 2.2.4 ປ່າຕຶບ (RLV)

ລາຍລະອຽດ:

ພືດທີ່ເກີດຂຶ້ນຕາມຕາລິ່ງ ແລະຕາມແຄມທາງລົດແລ່ນ, ພືດດັ່ງກ່າວຈະຂີດຂວາງໄລຍະ ແນມເຫັນ ແລະເປັນອັນຕະລາຍເຖິງຄວາມປອດໄພແກ່ການສັນຈອນຕາມເສັ້ນທາງ.

ສາຍເຫດທີ່ພາໃຫ້ເກີດ:

- ການຕັດຫຍ້າ, ອານາໄມປ່າ ແລະການຕັດຫ່ຳໄມ້ບໍ່ໄດ້ເອົາໃຈໃສ່ເທົ່າທີ່ຄວນ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ຕົ້ນໄມ້ ແລະຫ່ຳໄມ້ທີ່ເຕີບໂຕຕາມຂ້າງທາງຈະລົ້ມລົງໃສ່ທາງ ແລະກີດຂວາງການ ສັນຈອນ.
- ໄລຍະແນມເຫັນຂອງຜູ້ຊົມໃຊ້ເສັ້ນທາງຈະລຸດລົງ ແລະ ຄວາມສ່ຽງຂອງການ ເກີດອຸບັດເຫດ ຈະເພີ້ມຂຶ້ນ.
- ພືດຕ່າງໆຈະກີດຂວາງລະບົບລະບາຍນ້ຳ ຫລື ອາດເປັນອຸປະສັກໃນການລົງສຳຫລວດ ຫລື ການ ບຳລຸງຮັກສາແລະສ້ອມແປງ.
- ອັນຕະລາຍຈາກອັກຄີໄພໃນຊ່ວງລະດູແລ້ງແມ່ນມີສູງ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (35) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 2. ບໍລິເວນຂ້າງທາງ	
ໝ້າວຽກຍ່ອຍ: 2.2 ຕະຫລິ່ງທາງ	ການແບ່ງປະເພດຄວາມເສຍຫາຍ: 2.2.4 ປ່າຕຶບ (RLV)	ຄວາມເສຍຫາຍ: 2.2.4 ປ່າຕຶບ (RLV)

ຮູບພາບ:



ຕາຕະລາງ 2.5.2 (36) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໜ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແບ່ງປະເພດຄວາມເສຍຫາຍ: 3.1.1 ການເສຍຮູບຮ່າງເດີມ (DCF)	ຄວາມເສຍຫາຍ: 3.1.1.1 ຮອຍແຕກແຫ້ງໃນຂ່ອນຍຸບ ຕິອ (DCFS)

ລາຍລະອຽດ:

ຮອຍແຕກແຫ້ງເກີດຂຶ້ນຕາມຜິວໜ້າທາງທີ່ຢູ່ເບື້ອງເທິງທໍ່.

ສາຍເຫດທີ່ພາໃຫ້ເກີດ:

- ເກີດການຍຸບຂອງດິນຢູ່ດ້ານລຸ່ມທໍ່ລະບາຍນ້ຳ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ຄວາມເສຍຫາຍນ້ອຍ: ຖ້າການຍຸບໜ້ອຍ, ມີແຕ່ຮອຍແຕກແຫ້ງນ້ອຍຕາມຝາຫ້ວທໍ່, ຝາປິກ ແລະໂຄງສ້າງທີ່ສຳຄັນ. ຄວາມເສຍຫາຍດັ່ງກ່າວອາດຈະບໍ່ສົ່ງຜົນກະທົບ ຫຍັງຫລາຍຕໍ່ກັບໂຄງ ສ້າງ ແຕ່ວ່າຮອຍແຕກແຫ້ງດັ່ງກ່າວຈະຕ້ອງໄດ້ສ້ອມແປງໃຫ້ໄວ.
- ຄວາມເສຍຫາຍໃຫ່ຍ: ຖ້າການຍຸບຮ້າຍແຮງ, ມັນຈະເຮັດໃຫ້ທໍ່ລະບາຍນ້ຳມີການ ເຄື່ອນໜ້ງ ຫລາຍ ດັ່ງນັ້ນຄິດທີ່ຢູ່ຕາມຄັນທາງຈະເຂົ້າໄປອັດຮອຍແຕກແຫ້ງ ແລະເຂົ້າ ໄປອຸດຕັນທໍ່ລະບາຍ ນ້ຳ, ຫລືທໍ່ອາດຈະພັງທະລາຍ. ທໍ່ຈະຕ້ອງໄດ້ທຳການກໍ່ສ້າງ ຄືນໃໝ່.

ວິທີການບັນທຶກໃນເວລາສຳຫຼວດ:

- ໃຫ້ວັດແທກຄວາມຍາວ ແລະຄວາມກວ້າງ.

ເຄື່ອງມືໃນການສຳຫຼວດ:

- ໄມ້ແມັດ

ຕາຕະລາງ 2.5.2 (36) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໜ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແບ່ງປະເພດຄວາມເສຍຫາຍ: 3.1.1 ການເສຍຮູບຮ່າງເດີມ (DCF)	ຄວາມເສຍຫາຍ: 3.1.1.1 ຮອຍແຕກແຫ້ງໃນຂ່ອນຍຸບ ຕິອ (DCFS)

ຮູບພາບ:



ตาตะลาง 2.5.2 (37) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໜ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແບ່ງປະເພດຄວາມເສຍຫາຍ: 3.1.1 ການເສຍຮູບຮ່າງເດີມ (DCF)	ຄວາມເສຍຫາຍ: 3.1.1.2 ທໍ່ຍຸບ (DCFC)

ລາຍລະອຽດ:
ການຍຸບຂອງທໍ່ຈາກແຮງພາຍໃນ.

ສາຍເຫດທີ່ພາໃຫ້ເກີດ:

- ນ້ຳໜັກລົດເກີນ.
- ຫີນຕົກລົງໃສ່.
- ວັດສະດຸບໍ່ດີ.
- ຮາກຖານອ່ອນຕົວ.
- ຄວາມໜາຂອງການຖົມດິນຫລັງທໍ່ບໍ່ພຽງພໍ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ອາດເກີດຈາກອຸບັດເຫດໃນການສັນຈອນ.
- ນ້ຳອາດຈະຊຶມເຂົ້າໄປຕາມຮອຍແຕກແຫງ ແລະພື້ນທາງຈະອ່ອນຕົວ.
- ນ້ຳໄຫຼອອກຈາກທໍ່ອາດຈະເຮັດໃຫ້ດິນເຈື່ອນໄດ້.
- ຄວາມສາມາດໃນການລະບາຍນ້ຳລຸດລົງ ຊຶ່ງອາດຈະເຮັດໃຫ້ນ້ຳຖ້ວມຂັງຢູ່ ຫ້ອຍເບື້ອງເທິງ ຊຶ່ງອາດຈະເກີດການທຳລາຍໂຄງສ້າງທາງ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (37) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໜ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແບ່ງປະເພດຄວາມເສຍຫາຍ: 3.1.1 ການເສຍຮູບຮ່າງເດີມ (DCF)	ຄວາມເສຍຫາຍ: 3.1.1.2 ທໍ່ຍຸບ (DCFC)

ຮູບພາບ:

ตาตะลาง 2.5.2 (38) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໜ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແບ່ງປະເພດຄວາມເສຍຫາຍ: 3.1.1 ການເສຍຮູບຮ່າງເດີມ (DCF)	ຄວາມເສຍຫາຍ: 3.1.1.3 ຝາປິກເປ່ເພ (DCFW)

ລາຍລະອຽດ:

ຝາຫົວທໍ່/ການປ້ອງກັນການເຊາະເຈື່ອນ/ຝາປິກທໍ່ (ຕົວຢ່າງເຊັ່ນ: ແຕກ, ພັງທະລາຍ).

ສາຍເຫດທີ່ພາໃຫ້ເກີດ:

- ມີການຊຸດຕົວເລັກໜ້ອຍ.
- ມີການກັດເຊາະ ຫລືເຊາະເຈື່ອນ.
- ການກໍ່ສ້າງບໍ່ດີ.
- ການອອກແບບບໍ່ດີ.
- ສະພາບສະໜາມບໍ່ເປັນໄປຕາມທີ່ຄາດຫວັງ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ມີການເຊາະເຈື່ອນຢູ່ຝາຫົວທໍ່/ໂຄງສ້າງປ້ອງກັນການເຊາະເຈື່ອນ/ຝາປິກ.
- ທໍ່ອຸດຕັນ ຫລືພັງທະລາຍ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ.

ตาตะลาง 2.5.2 (38) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໜ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແບ່ງປະເພດຄວາມເສຍຫາຍ: 3.1.1 ການເສຍຮູບຮ່າງເດີມ (DCF)	ຄວາມເສຍຫາຍ: 3.1.1.3 ຝາປິກເປ່ເພ (DCFW)

ຮູບພາບ:

ตาตะลาง 2.5.2 (39) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 3. ລະບົບລະບາຍນ້ຳ	
ໝ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແຍ່ງປະເພດຄວາມເສຍຫາຍ: 3.1.2 ທໍ່ອຸດຕັນ (DCB)	ຄວາມເສຍຫາຍ: 3.1.2 ທໍ່ອຸດຕັນ (DCB)

ລາຍລະອຽດ:

ທໍ່ລະບາຍນ້ຳຖືກຕັນດ້ວຍດິນທີ່ຕົກຕະກອນ, ຊາຍແລະ/ຫລືຂີ້ເຫຍື້ອຕ່າງໆ.

ສາຍເຫດທີ່ພາໃຫ້ເກີດ:

- ຄວາມເນີນຂອງບ່ອນວາງທໍ່ຕ່ຳເກີນໄປ.
- ການກໍ່ສ້າງທໍ່ລະບາຍນ້ຳຕ່ຳເກີນໄປ,ດັ່ງນັ້ນຕະກອນຕ່າງໆທີ່ມາກັບນ້ຳຈະເຂົ້າໄປຕົກຄ້າງຢູ່ໃນທໍ່ດັ່ງກ່າວ.
- ຂີ້ເຫຍື້ອ ແລະຫ່ຳໄມ້ທີ່ນ້ຳໄຫຼມາກັບນ້ຳຈະເຂົ້າອຸດຕັນທໍ່ລະບາຍນ້ຳ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ທາງນ້ຳໄຫຼໃນທໍ່ຈະລຸດລົງ, ດັ່ງນັ້ນທໍ່ດັ່ງກ່າວຈະບໍ່ສາມາດລະບາຍນ້ຳໄດ້ທັນເມື່ອເວລາ ນ້ຳຖ້ວມ.
- ນ້ຳຈະຂັງຢູ່ເບື້ອງເທິງຂອງທໍ່ ແລະອາດຈະໄຫຼລົ້ນຄັນທາງຊຶ່ງເປັນສາຍເຫດພາໃຫ້ທາງຂາດໄດ້.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (39) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໝ້າວຽກທີ: 3. ລະບົບລະບາຍນ້ຳ	
ໝ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແຍ່ງປະເພດຄວາມເສຍຫາຍ: 3.1.2 ທໍ່ອຸດຕັນ (DCB)	ຄວາມເສຍຫາຍ: 3.1.2 ທໍ່ອຸດຕັນ (DCB)

ຮູບພາບ:

ตาตะลาง 2.5.2 (40) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໜ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແບ່ງປະເພດຄວາມເສຍຫາຍ: 3.1.3 ການກັດເຊາະຢູ່ຫາງທໍ່ (DCE)	ຄວາມເສຍຫາຍ: 3.1.3 ການກັດເຊາະຢູ່ຫາງທໍ່ (DCE)

ລາຍລະອຽດ:
ພື້ນທໍ່ເບື້ອງປາກນ້ຳໄຫຼອອກຖືກກັດເຊາະຈາກນ້ຳ.

ສາຍເຫດທີ່ພາໃຫ້ເກີດ:

- ຄວາມເນີນໃນການກໍ່ສ້າງທໍ່ຊັນຫລາຍ ຊຶ່ງເປັນສາຍເຫດເຮັດໃຫ້ນ້ຳໃນທໍ່ໄຫຼໄວຂຶ້ນ.
- ຄວາມເນີນໃນການກໍ່ສ້າງທໍ່ຣາບພຽງເກີນໄປ ຊຶ່ງເປັນສາຍເຫດເຮັດໃຫ້ນ້ຳໄຫຼອອກຈາກປາກທໍ່ຕົກແຮງ. ສິ່ງທີ່ເວົ້າມາຂ້າງເທິງນັ້ນແມ່ນຍ້ອນການອອກແບບ ແລະກໍ່ສ້າງ ບໍ່ຖືກຕ້ອງ.

ຜົນກະທົບ (ຖ້າປ່ອຍປະລະເລີຍ):

- ພື້ນທ້ອຍຖືກເຊາະເຈື່ອນ ແລະກາຍເປັນຂຸມໃຫ່ຍ.
- ຝາປົກ ແລະຝາຫົວທໍ່ເບື້ອງນ້ຳໄຫຼອອກ ແລະ ທໍ່ ແລະ ຄັນທາງຈະຂາດລົງໄປກອງກັນຢູ່ເບື້ອງລຸ່ມ.

ວິທີການບັນທຶກໃນເວລາສຳຫຼວດ:

- ສຳຫຼວດດ້ວຍຕາເປົ່າຈາກຂໍ້ມູນອ້າງອີງຈາກການຈັດລຳດັບຄວາມເສຍຫາຍ.

ເຄື່ອງມືໃນການສຳຫຼວດ:

- ບໍ່ຕ້ອງການ

ตาตะลาง 2.5.2 (40) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໜ້າວຽກຍ່ອຍ: 3.1 ທໍ່ລະບາຍນ້ຳ	ການແບ່ງປະເພດຄວາມເສຍຫາຍ: 3.1.3 ການກັດເຊາະຢູ່ຫາງທໍ່ (DCE)	ຄວາມເສຍຫາຍ: 3.1.3 ການກັດເຊາະຢູ່ຫາງທໍ່ (DCE)

ຮູບພາບ:

ตาตะลาง 2.5.2 (41) ນິຍາມຂອງຄວາມເສຍຫາຍ

ປະເພດຄວາມເສຍຫາຍ	ໜ້າວຽກທີ: 3. ລະບົບລະບາຍນ້ຳ	
ໝ້າວຽກ: 3.2 ຮ່ອງນ້ຳ ແລະ ລະບົບລະບາຍນ້ຳ	ຊື່ວຽກ: ການບຸກເບີກ & ອະນາໄມ	ປະເພດວຽກ: ການ ບູລະນະ ຮັກສາ ປົກກະຕິ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ກຳມະກອນ 5 ຄົນ

ເຄື່ອງມື & ກົນຈັກ:

- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ
- ເຄື່ອງມື:

ລໍ້ຍູ້ 1 ຄັນ, ຊວ້ານ 5 ດວງ

ວັດສະດຸ:

- ບໍ່ມີ -

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງກໍ່ແມ່ນເພື່ອເຄື່ອນຍ້າຍດິນທັງໝົດ, ຫຍ້າ/ປ່າຕິບ, ວັດສະດຸ ແລະ ສິ່ງຂອງອອກຈາກຮ່ອງນ້ຳ ຊຶ່ງອາດຈະກີດຂວາງການໃຫຼຂອງນ້ຳ ຫລື ເປັນສາເຫດເຮັດໃຫ້ຮ່ອງນ້ຳອຸດຕັນ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມລວງຍາວຂອງການບຸກເບີກ ແລະ ອະນາໄມສຳເລັດ.
ວຽກດັ່ງກ່າວລວມທັງການຂົນສິ່ງເສດເຫລືອໄປຖິ້ມ

ຫົວໜ່ວຍ: ແມັດ

ຂັ້ນຕອນໃນການປະຕິບັດວຽກ:

1. ຈັດວາງເຄື່ອງມືຄວບຄຸມການສັນຈອນ ແລະ ຄວາມປອດໄພ ຢ່າງເຫມາະສົມ ໂດຍອີງໃສ່ລະຫັດ: G001, ຫລື ຈັດວາງຕາມການແນະນຳຂອງວິສະວະກອນໂດຍກົງ.
2. ເຄື່ອນຍ້າຍ ຫີນ, ດິນ ແລະ ຊາຍ, ໃບໄມ້, ກົກໄມ້, ພຸ່ມໄມ້, ຮວມທັງຮາກໄມ້, ຕະກອນ ແລະ ວັດສະດຸບໍ່ຫມັ້ນຄົງອື່ນໆ ທີ່ຕັນທາງນ້ຳໄຫລໃນຮ່ອງ. (ຮູບ 1)
3. ເອົາດິນອອກຫ່າງຈາກແຄມທາງ ເພື່ອບໍ່ໃຫ້ກີດຂວາງການໄຫລຂອງນ້ຳ ແລະ ດິນຈະບໍ່ຕົກລົງໄປໃນຮ່ອງ ຫລື ຖືກພັດກັບລົງໄປໃນຮ່ອງນ້ຳ.
4. ສຳລັບຮ່ອງນ້ຳທີ່ບໍ່ມີຮູບຮ່າງແນ່ນອນ ການປົກຄຸມດ້ວຍຫຍ້າສັ້ນໄດ້ຊ່ວຍສ້າງຄວາມຫມັ້ນຄົງໃຫ້ແກ່ແຄມຮ່ອງ.
5. ແຄມຮ່ອງທີ່ປົກຄຸມດ້ວຍຫຍ້າ ແມ່ນຫລີກລ້ຽງການເຊາະເຈື່ອນໄດ້ ແລະ ຍັງຮັກສາຄວາມເລິກຂອງຮ່ອງໄດ້ອີກດ້ວຍ.
6. ເຮັດໃຫ້ສະຫນາມສະອາດ ແລະ ເປັນລະບຽບ.
7. ບັນທຶກຄວາມຍາວຫນ້າວຽກທີ່ເຮັດສຳເລັດ ໂດຍໃຊ້ຟອມບັນທຶກຫນ້າວຽກ.
8. ເຄື່ອນຍ້າຍປ້າຍເຕືອນຈະລາຈອນ ແລະ ເຄື່ອງມືຄວບຄຸມຄວາມປອດໄພທັງຫມົດອອກ.

ຕາຕະລາງ 4.4.2 (36) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3205	ລາຍການ: 3. ການລະບາຍນ້ຳ	
ໝ້າວຽກ: 3.2 ຮ່ອງນ້ຳ ແລະ ລະບົບລະບາຍນ້ຳ	ຊື່ວຽກ: ການບຸກເບີກ & ອະນາໄມ	ປະເພດວຽກ: ການ ບູລະນະ ຮັກສາ ປົກກະຕິ



ຮູບ **1**

ມາດຕະຖານເຕັກນິກ:

ວຽກດັ່ງກ່າວ ຄວນປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນປື້ມຄູ່ມື ຫລື ຕາມການແນະນຳຂອງນັກວິສະວະກອນ.

ຕາຕະລາງ 4.4.2 (37) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3206	ລາຍການ: 3. ການລະບາຍນ້ຳ	
ໝ້າວຽກ: 3.2 ຮ່ອງນ້ຳ ແລະ ລະບົບລະບາຍນ້ຳ	ຊື່ວຽກ: ການກໍ່ດ້ວຍ ຫີນພູ	ປະເພດວຽກ: ການ ບູລະ ນະຮັກສາເປັນກຳນົດ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ຊ່າງກໍ່ 2 ຄົນ
- ກຳມະກອນ 5 ຄົນ

ເຄື່ອງມື & ກົນຈັກ:

- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ
- ເຄື່ອງມື:

ຊ້ວານ 5 ດວງ, ເຫລັກເຂົາຄວາຍ 2 ດວງ, ຈົກ 2 ດວງ, ກຽງກໍ່ 2 ອັນ, ມີປະທາຍ 2 ອັນ, ແປງຖູ 2 ອັນ, ຄ້ອນຕີ 2 ອັນ.

ວັດສະດຸ:

- ຫີນຈາກແຫຼ່ງທີ່ເຊື່ອຖືໄດ້
- ຊີມັງ
- ຊາຍ
-

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງ ແມ່ນເພື່ອສ້າງສິ່ງປ້ອງກັນການເຊາະເຈື່ອນທີ່ຕີນຕະຫຼິ່ງ, ຫົວ ແລະ ຫາງທໍ່ ແລະ ຮ່ອງນ້ຳ ບ່ອນທີ່ຈະເກີດການເຊາະເຈື່ອນ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກ ຕາມເນື້ອທີ່ຂອງການກໍ່ຫີນທີ່ປະຕິບັດສຳເລັດ.

ຫົວໜ່ວຍ: ຕາແມັດ

ຂັ້ນຕອນໃນການປະຕິບັດວຽກ:

1. ຈັດວາງເຄື່ອງມືຄວບຄຸມການສັນຈອນ ແລະ ຄວາມປອດໄພ ຢ່າງເຫມາະສົມ ໂດຍອີງໃສ່ ລະຫັດ: G003, ຫລື ຈັດວາງຕາມການແນະນຳຂອງວິສະວະກອນໂດຍກົງ.
2. ຫນ້າຕັດຂອງຫີນທີ່ຈະນຳມາໃຊ້ ຈະຕ້ອງຖືກດັດແປງ ໃຫ້ເຂົ້າກັບເສັ້ນແຖວ ແລະ ລະດັບ ຂອງຕະຫຼິ່ງ 1:1.5.
3. ຫີນຈະຕ້ອງຖືກນຳສົ່ງມາ ແລະ ກອງໄວ້ທີ່ສະຫນາມ.
4. ອັດແຫນ້ນຕະຫຼິ່ງທາງ ໃຫ້ໄດ້ຮູບຮ່າງຕາມຕ້ອງການ.
5. ວາງຫີນຊັ້ນທຳອິດ ໃຫ້ຕິດກັນ ໂດຍເລີ່ມຈາກຕີນຕະຫຼິ່ງຂຶ້ນມາ. (ຮູບ 1)

ຕາຕະລາງ 4.4.2 (37) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3206	ລາຍການ: 3. ການລະບາຍນ້ຳ	
ໝ້າວຽກ: 3.2 ຮ່ອງນ້ຳ ແລະ ລະບົບລະບາຍນ້ຳ	ຊື່ວຽກ: ການກໍ່ດ້ວຍ ຫີນພູ	ປະເພດວຽກ: ການ ບູລະ ນະຮັກສາເປັນກຳນົດ

6. ຫີນຄວນວາງໃສ່ກັບດິນ. ຫີນນ້ອຍຈະຖືກໃຊ້ເປັນຫຼົ້ມ ເພື່ອປັບຫີນໃຫ້ຖືກຕຳແຫນ່ງ.
7. ປິດບັນດາຮູດ້ວຍຫຼົ້ມທີ່ມີຂະຫນາດພໍດີ ແລະ ແຫນ້ນ.
8. ດ້ານເທິງຂອງຫີນ ຄວນໂບກດ້ວຍວັດສະດຸທີ່ເຊື່ອມຕໍ່ກັນ ເພື່ອໃຫ້ຫີນຈັບເປັນເນື້ອດຽວກັນ.
9. ເມື່ອຕ້ອງການຢາຊ່ອງວ່າງ, ໃຫ້ປະສົມປະທາຍດ້ວຍສ່ວນປະສົມ (ຊີມັງ 1 ສ່ວນ: ຊາຍ 4 ສ່ວນ) ແລະ ຕື່ມເຂົ້າໄປໃນຊ່ອງວ່າງຂອງຫີນ. (**ຮູບ** 2)
10. ເຄື່ອນຍ້າຍວັດສະດຸ ທີ່ບໍ່ຕ້ອງການທັງຫມົດອອກຈາກສະຫນາມ ແລະ ນຳໄປຖິ້ມໃນສະຖານ ທີ່ປອດໄພ.
11. ເຮັດໃຫ້ສະຫນາມສະອາດ ແລະ ເປັນລະບຽບ.
12. ບັນທຶກເນື້ອທີ່ ທີ່ປະຕິບັດສຳເລັດ ໂດຍໃຊ້ຟອມບັນທຶກຫນ້າວຽກ.
13. ເຄື່ອນຍ້າຍປ້າຍເຕືອນຈະລາຈອນ ແລະ ເຄື່ອງມືຄວບຄຸມຄວາມປອດໄພທັງຫມົດ ອອກຈາກ ສະໜາມ.

ຮູບ 1 **ຮູບ 2**

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະມາດຕະຖານເຕັກນິກ ທີ່ໄດ້ກຳນົດ ໄວ້ໃນປື້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ตาตะลาง 4.4.2 (38) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3207	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.1 ຮ່ອງນ້ຳ ແລະ ລະບົບລະບາຍນ້ຳ	**ຊື່ວຽກ: ການສ້ອມແປງພັກປ້ອງກັນການກັດເຊາະ**	**ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ**

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ຊ່າງກໍ່ 2 ຄົນ
- ກຳມະກອນ 5 ຄົນ

ເຄື່ອງມື & ກົນຈັກ:

- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ
- ເຄື່ອງມື:

ຊ້ອນ 5 ດວງ, ເຫລັກເຂົ່າຄວາຍ 2 ດວງ, ຈີກ 2 ດວງ, ກຽງກໍ່ 2 ອັນ, ມີ ປະຫາຍ 2 ອັນ, ແປງຖູ 2 ອັນ.

ວັດສະດຸ:

- ວັດສະດຸທີ່ໃຊ້ໃນການກໍ່ (ແຮ່, ຊາຍ, ຊີມັງ)
- ຫີນ/ກ້ອນຫີນ
- ไม้

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງແມ່ນ ເພື່ອສ້ອມແປງ ຫລືປ່ຽນແທນ ພັກປ້ອງກັນການກັດເຊາະ ທີ່ເສຍຫາຍຈາກການກັດເຊາະທີ່ຮຸນແຮງ ໂດຍນຳໃຊ້ການກໍ່ດ້ວຍດິນຈີ່, ไม้, ການລຽງຫີນ ຫລື ກໍ່ດ້ວຍຫີນ ແລະ ເຍຕົ້ງ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກ ຕາມຈຳນວນຂອງພັກປ້ອງກັນການກັດເຊາະ ທີ່ສ້ອມແປງສຳເລັດ.

ຫົວໜ່ວຍ: ຈຸດ

ຂັ້ນຕອນໃນການປະຕິບັດວຽກ:

1. ຈັດວາງເຄື່ອງມືຄວບຄຸມການສັນຈອນ ແລະ ຄວາມປອດໄພ ຢ່າງເໝາະສົມ ໂດຍອີງໃສ່ ລະຫັດ: G003, ຫລື ຈັດວາງຕາມການແນະນຳຂອງວິສະວະກອນໂດຍກົງ.
2. ຂຸດຮ່ອງຕາມໜ້າຕັດຂວາງຂອງຮ່ອງລະບາຍນ້ຳ ໂດຍໃຫ້ຕ່ຳກວ່າລະດັບພື້ນຮ່ອງ 100 ມມ.

ວິທີ ແລະ ຂັ້ນຕອນການປະຕິບັດວຽກ ໄດ້ແບ່ງອອກເປັນ 2 ປະເພດ ໂດຍນຳໃຊ້ວັດສະດຸ ສຳລັບ ພັກປ້ອງກັນການກັດເຊາະ ດັ່ງລຸ່ມນີ້.

ตาตะลาง 4.4.2 (38) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3207	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.1 ຮ່ອງນ້ຳ ແລະ ລະບົບລະບາຍນ້ຳ	**ຊື່ວຽກ: ການສ້ອມແປງພັກປ້ອງກັນການກັດເຊາະ**	**ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ**

ປະເພດ 1: ຖົມດິນ ແລະ ປູກຫຍ້າ

3. ຖົມພື້ນທີ່ໆໄດ້ຮັບຜົນກະທົບດ້ວຍດິນ ແລະ ປູກຫຍ້າໂດຍໃຫ້ຫຍ້າມີຄວາມສູງ 5 ຊັງຕີແມັດ ຈາກໜ້າດິນຖົມ.
4. ຫຍ້າຄວນໄດ້ຮັບການບຸລະນະຮັກສາ ແລະ ຫົດນ້ຳ ຈົນກະທັ່ງມັນສາມາດຢືນຕົ້ນໄດ້.

ປະເພດ 2: ກໍ່ດ້ວຍດິນຈີ່, ไม้, ຫລື ກໍ່ດ້ວຍຫີນພູ (ຮູບ 1 & 2)

5. ຕອກຫລັກໄມ້, ກໍ່ດິນຈີ່, ຫລື ຫີນ ຂວາງຮ່ອງນ້ຳ ໂດຍໃຫ້ລະດັບຫົວຂອງພັກປ້ອງກັນການກັດເຊາະ ຢູ່ຕ່ຳກວ່າຂອບຮ່ອງນ້ຳ 100 ມມ.
6. ວາງດິນຈີ່ ຫລື ຫີນ ຢູ່ດ້ານຫລັງຂອງພັກປ້ອງກັນການກັດເຊາະ ໃຫ້ໄດ້ໄລຍະ 0.5 ແມັດ ເພື່ອ ປ້ອງກັນນ້ຳກັດເຊາະດ້ານຫລັງຂອງພັກ.
7. ເຄື່ອນຍ້າຍວັດສະດຸ ທີ່ບໍ່ຕ້ອງການທັງຫມົດອອກຈາກສະໜາມ ແລະ ນຳໄປຖິ້ມໃນສະຖານ ທີ່ປອດໄພ.
8. ເຮັດໃຫ້ສະໜາມສະອາດ ແລະ ເປັນລະບຽບ.
9. ບັນທຶກຈຳນວນວຽກ ທີ່ປະຕິບັດສຳເລັດ ໂດຍໃຊ້ຟອມບັນທຶກໜ້າວຽກ.
10. ເຄື່ອນຍ້າຍປ້າຍເຕືອນຈະລາຈອນ ແລະ ເຄື່ອງມືຄວບຄຸມຄວາມປອດໄພທັງຫມົດ ອອກຈາກ ສະໜາມ.



ຮູບ 1



ຮູບ 2

ตาตะลาง 4.4.2 (38) มาดຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3207	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.1 ຮ່ອງນ້ຳ ແລະ ລະບົບລະບາຍນ້ຳ	ຊື່ວຽກ: ການສ້ອມແປງພັກ ປ້ອງກັນການກັດເຊາະ	ປະເພດວຽກ: ການ ບຸລະ ນະຮັກສາເປັນກຳນົດ

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ພັກປ້ອງກັນການກັດເຊາະທີ່ຈະສ້ອມແປງຈະຕ້ອງໃຫ້ປະຕິບັດຕາມການແນະນຳຈາກວິສະວະກອນ.

ອັດຕາສ່ວນຂອງວັດສະດຸທີ່ນຳໃຊ້ = ຊີມັງ 1 ສ່ວນ: ຊາຍ 4 ສ່ວນ : ແຮ່ 8 ສ່ວນ

ตาตะลาง 4.4.2 (38) มาดຖานเตักนิกในการปะติบัดอวฺก

ละหัด: 3207	ลายการ: 3. การละขายน้ำ	
หน้าอวฺก: 3.1 ร่องน้ำ และ ละบิบละขายน้ำ	ชื่อวฺก: การส้อมแปวพัก ป้องกันการกัดเซาะ	ปะเพดอวฺก: การ บุละ นะรักสาเป็นกำนิด

ຕາຕະລາງ 4.4.2 (39) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3301	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.3 ຂຸມພັກນ້ຳ ແລະ ທໍ່	ຊໍ່ວຽກ: ອະນາໄມ ແລະ ທຳຄວາມສະອາດ	ປະເພດວຽກ: ການບຸລະນະຮັກສາປົກກະຕິ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 1 ຄົນ
- ກຳມະກອນ 2 ຄົນ

ເຄື່ອງມື ແລະ ກົນຈັກ:

- ລົດຕູ້ນ້ອຍ 1 ຄັນ
- ເຄື່ອງມື:
  ລໍ້ຍູ້ 1 ຄັນ, ຊ້ອນດ້າມຍາວ ຫລື ຄາດ 1 ດວງ, ກະຖັງ 2 ໜ່ວຍ, ເຫລັກດຶງຝາອັດຂຸມພັກນ້ຳ 1 ອັນ, ປ້ຳນ້ຳ 1 ໜ່ວຍ, ໄມ້ຍາວ ແລະ ເຊືອກ

ວັດສະດຸ:

- ນ້ຳ

ລາຍລະອຽດ ແລະ ຈຸດປະສົງ:

ຈຸດປະສົງ ແມ່ນເພື່ອຂົນຍ້າຍດິນ, ຫຍ້າ, ວັດສະດຸ ແລະ ສິ່ງຂອງທັງຫມົດ ອອກຈາກຂຸມພັກນ້ຳ. ເນື່ອງຈາກວ່າສິ່ງເຫລົ່ານີ້ ສາມາດຂັດຂວາງການໄຫລຂອງນ້ຳ ຫລື ເປັນສາເຫດໃຫ້ຮ່ອງລະບາຍນ້ຳ ອຸດຕັນ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຂອງຂຸມພັກນ້ຳທີ່ອະນາໄມ ແລະທຳຄວາມສະອາດແລ້ວ.

ຫົວໜ່ວຍ: ຂຸມ

ຂັ້ນຕອນໃນການປະຕິບັດວຽກ:

1. ຈັດວາງເຄື່ອງມືຄວບຄຸມການສັນຈອນ ແລະ ຄວາມປອດໄພ ຢ່າງເຫມາະສົມ ໂດຍອີງໃສ່ ລະຫັດ: G001, ຫລື ຈັດວາງຕາມການແນະນຳຂອງວິສະວະກອນໂດຍກົງ.
2. ຍົກຝາປົກຂຸມພັກນ້ຳ ຫລື ຕະແກງອອກ.
3. ໃຫ້ແນ່ໃຈວ່າ ຂຸມກວດກາ ບໍ່ມີແກສທີ່ເປັນອັນຕະລາຍ.
4. ຂົນເອົາຂີ້ເຫຍື້ອ, ຊາຍ ແລະ ຂີ້ຕົມ ອອກຈາກຂຸມພັກນ້ຳ ໂດຍໃຊ້ເຄື່ອງມືທີ່ໃຊ້ແຮງງານຄົນ ແລະ ກະຖັງ. (ຮູບ 1)
5. ຖ້ານ້ຳຍັງບໍ່ສາມາດໄຫລໄດ້, ໃຫ້ແຍ່ຄາດເຂົ້າໄປໃນທໍ່ລະບາຍນ້ຳ ເພື່ອເກາະເອົາຂີ້ເຫຍື້ອອອກ ຈົນກະທັ່ງນ້ຳສາມາດໄຫລໄດ້ສະດວກດີຈຶ່ງຢຸດເຊົາ.
6. ຖ້າການໃຊ້ຄາດຍັງບໍ່ສຳເລັດຜົນ ໃຫ້ໃຊ້ແຮງດັນອາກາດສີດນ້ຳເຂົ້າໄປ.
7. ສິ່ງເສດເຫລືອຈາກຂຸມພັກນ້ຳ ຫລື ທໍ່ຈະຕ້ອງຂົນໄປຖິ້ມໃນສະຖານທີ່ປອດໄພ ພ້ອມທັງອະນາໄມພື້ນທີ່ອ້ອມຮອບຂຸມພັກນ້ຳ.

ຕາຕະລາງ 4.4.2 (39) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3301	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.3 ຂຸມພັກນ້ຳ ແລະ ທໍ່	ຊໍ່ວຽກ: ອະນາໄມ ແລະ ທຳຄວາມສະອາດ	ປະເພດວຽກ: ການບຸລະນະຮັກສາປົກກະຕິ

8. ເຮັດໃຫ້ສະຫນາມສະອາດ ແລະ ເປັນລະບຽບ
9. ບັນທຶກຈຳນວນວຽກທີ່ເຮັດສຳເລັດ ໂດຍໃຊ້ຟອມບັນທຶກໜ້າວຽກ
10. ເຄື່ອນຍ້າຍປ້າຍເຕືອນຈະລາຈອນ ແລະ ເຄື່ອງມືຄວບຄຸມຄວາມປອດໄພທັງຫມົດອອກ.



ຮູບ 1

ມາດຖານເຕັກນິກ:

ວຽກດັ່ງກ່າວ ຄວນປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລື ຕາມການແນະນຳຂອງນັກວິສະວະກອນ.

ຖ້າພົບເຫັນແກສທີ່ມີອັນຕະລາຍ ຫລື ມີຂໍ້ສົງໃສວ່າຈະມີ, ກຳມະກອນບໍ່ຄວນຈະເຂົ້າໄປໃນຂຸມກວດກາ ແລະ ຄວນລາຍງານເລື່ອງດັ່ງກ່າວໃຫ້ແກ່ວິສະວະກອນ ເພື່ອເປັນຂໍ້ມູນ ແລະ ມີມາດຕະການ ແລະ ຄຳແນະນຳທີ່ເຫມາະສົມ.

ตาตะลาง 4.4.2 (40) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3302	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.3 ຂຸມ ກວດກາ ແລະ ທໍ່	ຊື່ວຽກ: ປ່ຽນຝາປິດ ຫລື ຕະແກງ	ປະເພດວຽກ: ການບຸລະນະ ຮັກສາເປັນກຳນົດ

ແຮງງານ:

- ວິຊາການ 1 ຄົນ
- ກຳມະກອນ 3 ຄົນ
- ຄົນຂັບລົດ 1 ຄົນ

ເຄື່ອງມື ແລະ ກົນຈັກ:

- ລົດຕູ້ນ້ອຍ 1 ຄັນ
- ເຄື່ອງມື:
  ລໍ້ຍູ້ 1 ຄັນ, ເຫລັກຖ່ຽງຝາອັດຂຸມກວດກາ 1 ອັນ

ວັດສະດຸ:

- ຝາອັດຂຸມກວດກາ
- ຕະແກງ

ລາຍລະອຽດ ແລະ ຈຸດປະສົງ:

ຈຸດປະສົງ ແມ່ນເພື່ອສ້ອມແປງ ຝາອັດຂຸມກວດກາ ເພື່ອຄວາມປອດໄພຂອງຜູ້ນຳໃຊ້ເສັ້ນທາງ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຂອງຝາອັດຂຸມກວດກາ/ຕະແກງ ທີ່ປ່ຽນສຳເລັດ.

ຫົວໜ່ວຍ: ຝາ

ຂັ້ນຕອນການປະຕິບັດວຽກ:

1. ຈັດວາງເຄື່ອງມືຄວບຄຸມການສັນຈອນ ແລະ ຄວາມປອດໄພ ຢ່າງເໝາະສົມ ໂດຍອີງໃສ່ ລະຫັດ: G001, ຫລື ຈັດວາງຕາມການແນະນຳຂອງວິສະວະກອນໂດຍກົງ.
2. ຍົກຝາອັດຂຸມກວດກາ ຫລື ຕະແກງ ທີ່ເປ່ເພ ຫລື ແຕກຫັກອອກ ລວມທັງຊິ້ນສ່ວນທີ່ຕົກລົງໄປໃນຂຸມກວດກາ.
3. ຖ້າຝາອັດ ຫລື ຕະແກງ ຫາກເສັຍໄປ, ໃຫ້ຊອກຫາໃນບໍລິເວນໃກ້ຄຽງ ແລະ ຖ້າພົບເຫັນວ່າ ຍັງຢູ່ໃນສະພາບດີ ກໍໃຫ້ນຳໄປອັດໃສ່ຂຸມກວດກາຄືນ (ຮູບ 1) ແລະ ໃຫ້ແນ່ໃຈວ່າຝາອັດ ແລະ ຕະແກງແມ່ນໄດ້ວາງເຂົ້າກັບປາກຂຸມຢ່າງຮຽບຮ້ອຍ ແລະ ພຽງກັບລະດັບອ້ອມຂ້າງ.
4. ຖ້ານຳໃຊ້ຝາອັດ ຫລື ຕະແກງໃຫມ່ ໃຫ້ແນ່ໃຈວ່າໄດ້ນຳໃຊ້ຂະໜາດທີ່ຖືກຕ້ອງກັບຂຸມ ກວດກາ.
5. ຖ້າເປີດຂຸມກວດກາແລ້ວ ແຕ່ບໍ່ສາມາດປ່ຽນແທນຝາອັດ ໃນທັນທີ ກໍໃຫ້ຈັດຫາຝາອັດ ຊົ່ວຄາວທີ່ເຮັດດ້ວຍໄມ້ກະດານທີ່ມີຄວາມໜາພຽງພໍ.
6. ເຮັດໃຫ້ສະໜາມສະອາດ ແລະ ເປັນລະບຽບ.
7. ບັນທຶກຈຳນວນວຽກທີ່ເຮັດສຳເລັດ ໂດຍໃຊ້ຟອມບັນທຶກໜ້າວຽກ

ตาตะลาง 4.4.2 (40) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3302	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.3 ຂຸມ ກວດກາ ແລະ ທໍ່	ຊື່ວຽກ: ປ່ຽນຝາປິດ ຫລື ຕະແກງ	ປະເພດວຽກ: ການບຸລະນະ ຮັກສາເປັນກຳນົດ

8. ເຄື່ອນຍ້າຍປ້າຍເຕືອນຈະລາຈອນ ແລະ ເຄື່ອງມືຄວບຄຸມຄວາມປອດໄພທັ້ງໝົດ ອອກ.



ຮູບ **1**

ມາດຖານເຕັກນິກ:

ວຽກດັ່ງກ່າວ ຄວນປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ ໃນປຶ້ມຄູ່ມື ຫລື ຕາມການແນະນຳຂອງນັກວິສະວະກອນ.

ตาตะลาง 4.4.2 (41) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3303	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.3 ຂຸມດັກຕະກອນ ແລະ ທໍ່	ຊື່ວຽກ: ອະນາໄມ ພື້ນທີ່ຂຸມດັກຕະກອນ	ປະເພດວຽກ: ການ ບຸລະນະຮັກສາປົກກະຕິ

ແຮງງານ:

- ວິຊາການ 1 ຄົນ
- ກຳມະກອນ 3 ຄົນ
- ຄົນຂັບລົດ 1 ຄົນ

ເຄື່ອງມື ແລະ ກົນຈັກ:

- ລົດຕູ້ນ້ອຍ 1 ຄັນ
- ເຄື່ອງມື:

ລໍ້ຍູ້ 1 ຄັນ, ກະຖັງ 2 ຖັງ, ຊ້ອນດ້າມຍາວ 2 ດວງ ຫລື ຄາດ, ເຫລັກດຶງຝາຂຸມກວດກາ 1 ອັນ, ຟອຍກວດ 2 ອັນ, ເຄື່ອງສີດນ້ຳແຮງດັນສູງ 1 ເຄື່ອງ, ປ້ຳ ແລະ ທໍ່ນ້ຳ 1 ຊຸດ

ວັດສະດຸ:

- ນ້ຳ

ລາຍລະອຽດ ແລະ ຈຸດປະສົງ:

ຈຸດປະສົງ ແມ່ນເພື່ອເຄື່ອນຍ້າຍຂີ້ຕົມ ແລະ ຂີ້ເຫຍື້ອທັງຫມົດ ທີ່ປົກຄຸມຢູ່ພື້ນທີ່ຂຸມດັກຕະກອນ ອອກໄປ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຂອງຂຸມດັກຕະກອນ ແລະ ຂຸມເກັບນ້ຳ ທີ່ອະນາໄມ ແລະ ທຳຄວາມສະອາດແລ້ວ.

ໜ້າວຽກລວມທັງການຂົນເອົາວັດສະດຸທີ່ອະນາໄມອອກ ໄປຖິ້ມດ້ວຍ.

ຫົວໜ່ວຍ: ຂຸມ.

ຂັ້ນຕອນການປະຕິບັດວຽກ:

1. ຊອກຫາທີ່ຕັ້ງຂຸມດັກຕະກອນ ໂດຍໃຊ້ແຜນຜັງການລະບາຍນ້ຳ ຫລືໂດຍການຂຸດທົດລອງ .(ຮູບ 1)
2. ຈັດວາງເຄື່ອງມືຄວບຄຸມການສັນຈອນ ແລະ ຄວາມປອດໄພ ຢ່າງເຫມາະສົມ ໂດຍອີງໃສ່ ລະຫັດ: G001, ຫລື ຈັດວາງຕາມການແນະນຳຂອງວິສະວະກອນໂດຍກົງ.
3. ເຄື່ອນຍ້າຍວັດສະພືດທັງຫມົດ ໃນໄລຍະ 2-3 ແມັດ ອ້ອມຂຸມກວດກາ ແລະ ນຳໄປຖິ້ມໃຫ້ ຫ່າງຈາກບ່ອນເຮັດວຽກ.
4. ຂຸດເອົາຂີ້ຕົມ ຫລື ຂີ້ດິນທີ່ທັບຖົມຢູ່ເທິງຂຸມດັກຕະກອນອອກ ໃຫ້ໄດ້ຄວາມເລິກຢ່າງນ້ອຍ 10 ຊັງຕີແມັດ ລຸ່ມລະດັບຈຸດນ້ຳໄຫລເຂົ້າຂຸມດັກຕະກອນ ແລະ ອ້ອມຮອບຂຸມດັກຕະກອນ

ตาตะลาง 4.4.2 (41) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 3303	ລາຍການ: 3. ການລະບາຍນ້ຳ	
ໜ້າວຽກ: 3.3 ຂຸມດັກຕະກອນ ແລະ ທໍ່	ຊື່ວຽກ: ອະນາໄມ ພື້ນທີ່ຂຸມດັກຕະກອນ	ປະເພດວຽກ: ການ ບຸລະນະຮັກສາປົກກະຕິ

ໃຫ້ໄດ້ໄລຍະ 1 ແມັດເປັນຢ່າງຕ່ຳ.

5. ກວດກາເບິ່ງວ່າ ຂຸມດັກຕະກອນບໍ່ມີຂີ້ຊາຍ ແລະ ຂີ້ຕົມຕົກຄ້າງຢູ່ ແລະ ຫລັງຈາກນັ້ນກໍປົກຝາ ຄືນ.
6. ເຮັດໃຫ້ສະຫນາມສະອາດ ແລະ ເປັນລະບຽບ.
7. ບັນທຶກຈຳນວນຫນ້າວຽກທີ່ເຮັດສຳເລັດ ໂດຍໃຊ້ຟອມບັນທຶກຫນ້າວຽກ.
8. ເຄື່ອນຍ້າຍປ້າຍເຕືອນຈະລາຈອນ ແລະ ເຄື່ອງມືຄວບຄຸມຄວາມປອດໄພທັງຫມົດອອກ.



ຮູບ 1

ມາດຖານເຕັກນິກ:

ວຽກດັ່ງກ່າວ ຄວນປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ ໃນປຶ້ມຄູ່ມື ຫລື ຕາມການແນະນຳຂອງນັກວິສະວະກອນ.

ຕາຕະລາງ 4.4.2 (42) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 4101	ລາຍການ: 4. ໂຄງສ້າງ	
ໜ້າວຽກ: 4.1 ທາງນ້ຳໄຫຼຜ່ານ & ຂີວຈິມ	ຊື່ວຽກ: ວຽກສ້ອມແປງ	ປະເພດວຽກ: ການ ບຸລະນະຮັກສາເປັນປົກກະຕິ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ຊ່າງກໍ່ຫີນ 2 ຄົນ
- ກຳມະກອນ 5 ຄົນ

ເຄື່ອງມື & ກົນຈັກ:

- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ
- ຈັກລົມ 1 ເຄື່ອງ
- ເຄື່ອງມື:
  ລໍ້ຍູ້ 2 ຄັນ, ຊ້ອນ 3 ດວງ, ເຫຼັກເຂົາຄວາຍ 2 ອັນ, ຕີນຊ້າງ 1 ອັນ, ສິ່ວ 2 ຊຸດ, ຄຸ 3 ໜ່ວຍ, ກຽງກໍ່ 2 ອັນ,
  ມືປະທາຍ 1 ອັນ, ເຄື່ອງມືໃຊ້ໄວ້ລູບໃຫ້ພຽງ 2 ອັນ

ວັດສະດຸ:

- ຢາງປູທາງ
- ແຮ່, ຊາຍ, ຊີມັງ

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງກໍ່ແມ່ນເພື່ອສ້ອມແປງຮອຍແຕກແຫງ: ຖົມຂຸມຮັ່ງໄກ່ ແລະການເຊາະເຈື່ອນ ເພື່ອປ້ອງກັນການຊຸດໂຕຕາມໂຄງສ້າງ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມໜ້າວຽກຕ່າງໆທີ່ໄດ້ປະຕິບັດສຳເລັດດັ່ງນີ້.

1. ການປິດຮອຍແຕກແຫງ

   ຫົວໜ່ວຍ: ແມັດ

2. ການສ້ອມແປງການຍຸບໂຕ

   ຫົວໜ່ວຍ: ແມັດກ້ອນ

ຂັ້ນຕອນໃນການປະຕິບັດວຽກ:

1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະເພື່ອຄວບຄຸມການສັນຈອນ ໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G003, ຫລື ຕາມການແນະນຳ ຂອງນັກວິສະວະກອນ.

ຕາຕະລາງ 4.4.2 (42) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 4101	ລາຍການ: 4. ໂຄງສ້າງ	
ໜ້າວຽກ: 4.1 ທາງນ້ຳໄຫຼຜ່ານ & ຂີວຈິມ	ຊື່ວຽກ: ວຽກສ້ອມແປງ	ປະເພດວຽກ: ການ ບຸລະນະຮັກສາເປັນປົກກະຕິ

ຂັ້ນຕອນ ແລະ ວິທີການໃນການປະຕິບັດວຽກແມ່ນໄດ້ແບ່ງອອກເປັນ3ປະເພດຈາກຄວາມເສຍຫາຍທີ່ເກີດຂຶ້ນດັ່ງນີ້.

2. ຮອຍແຕກແຫງ (ຮູບ 1)
   a. ກວດ, ອະນາໄມ ແລະຕ້ອງຮັບປະກັນວ່າພື້ນທີ່ຈະສ້ອມແປງນັ້ນແຫ້ງດີ. (ຮູບ 2)
   b. ໝາຍພື້ນທີ່ຈະສ້ອມແປງນັ້ນດ້ວຍສໍຂາວ ຫລືນ້ຳສີ.
   c. ວິທີການສ້ອມແປງແມ່ນມີ2ວິທີທີ່ແຕກຕ່າງກັນດັ່ງນີ້:
   - ຮອຍແຕກແຫງທີ່ຢູ່ບໍລິເວນໃກ້ໆແມ່ນປຸປົກດ້ວຍslurry: (ຮູບ 3 &4)
     - ການຜະລິດslurryຢູ່ໃນລໍ້ຍູ້: ລອມມິຢາງນ້ຳ (emulsion) 6 ລິດ ແລະຊາຍ 20 ລິດ (D=5ມມ).
     - ໃຊ້ເຄື່ອງຢາຍຢາຍslurryດ້ວຍຊັ້ນບາງໆປະມານ 5ມມ ຢູ່ເທິງພື້ນທີ່ທີ່ໄດ້ໝາຍໄວ້.
     - ປະໃຫ້Slurryແຫ້ງກ່ອນເປີດການສັນຈອນ.
   - ຮອຍແຕກແຫງແຍກກັນ: (ຮູບ 5 & 6)
     - ປິດຮອຍແຕກແຫງດ້ວຍຢາງຮ້ອນດ້ວຍການນຳໃຊ້ແຂນສີດ ຫລືບົວ.
     - ໃຊ້ຊ້ອນຢາຍຊາຍຫຍາບປົກຮອຍແຕກແຫງພາຍຫລັງສີດຢາງແລ້ວ.
3. ຂຸມຮັ່ງໄກ່
   a. ທັບຜິວໜ້າທາງທີ່ເປ່ເພເສຍຫາຍໃຫ້ເຖິງພື້ນ.
   b. ອະນາໄມ ແລະປັດກວາດພື້ນທີ່ທີ່ຈະສ້ອມແປງ.
   c. ປິດຂຸມດ້ວຍເບຕົ້ງ (ສ່ວນປະສົມເບຕົ້ງ: ຊີມັງ 1 ສ່ວນ, ຊາຍ 2 ສ່ວນ ແລະແຮ່ 4 ສ່ວນ).
4. ການເຊາະເຈື່ອນ
   a. ຖົມດ້ວນຫີນກ້ອນໃຫ່ຍ ຫລື riprap.
   b. ໃນກໍລະນີເກີດການເຊາະເຈື່ອນທີ່ຮ້າຍແຮງ ໃຫ້ນຳໃຊ້ກະຕ່າຫີນວາງຕາມພື້ນຫ້ອຍໃນບໍລິເວນເກີດເຊາະເຈື່ອນ ໂດຍໃຫ້ດ້ານເທິງຂອງກະຕ່າຫີນຢູ່ໃນລະດັບດຽວກັນ ຫລືຕ່ຳກວ່າລະດັບຜິວໜ້າຂີວຈິມ ຫລືທາງນ້ຳໄຫຼຜ່ານ.
5. ວັດສະດຸທີ່ເຫລືອຈາກການຊົມໃຊ້ຄວນຈະເຄື່ອນຍ້າຍໄປຍັງສະຖານທີ່ທີ່ປອດໄພ.
6. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະເປັນລະບຽບດີ.
7. ບັນທຶກລວຍາວ/ບໍລິມາດວຽກທີ່ໄດ້ປະຕິບັດສຳເລັດລົງໃນແບບຟອມບັນທຶກ.
8. ເຄື່ອນຍ້າຍປ້າຍເຕືອນ ແລະອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.

ຕາຕະລາງ 4.4.2 (42) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 4101	ລາຍການ: 4. ໂຄງສ້າງ	
ໝ້າວຽກ: 4.1 ທາງນ້ຳໄຫຼຜ່ານ & ຂົວຈົມ	ຊື່ວຽກ: ວຽກສ້ອມແປງ	ປະເພດວຽກ: ການ ບູລະນະຮັກສາເປັນປົກກະຕິ



ຮູບ 1

ຮູບ 2

ຮູບ 3



ຮູບ 4

ຮູບ 5

ຮູບ 6

ຕາຕະລາງ 4.4.2 (42) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 4101	ລາຍການ: 4. ໂຄງສ້າງ	
ໝ້າວຽກ: 4.1 ທາງນ້ຳໄຫຼຜ່ານ & ຂົວຈົມ	ຊື່ວຽກ: ວຽກສ້ອມແປງ	ປະເພດວຽກ: ການ ບູລະນະຮັກສາເປັນປົກກະຕິ

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້ໃນປື້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ຕາຕະລາງ 4.4.2 (43) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 4102	ລາຍການ: 4. ໂຄງສ້າງ	
ໝ້າວຽກ: 4.1 ທາງນ້ຳໄຫຼຜ່ານ & ຂົວຈົມ	ຊື່ວຽກ: ການບຸກເບີກ ແລະອະນາໄມ	ປະເພດວຽກ: ການ ບູລະ ນະຮັກສາເປັນປົກກະຕິ

ແຮງງານ:

- ວິຊາການ 1 ຄົນ
- ຜູ້ຄວບຄຸມເຄື່ອງຈັກ 1 ຄົນ
- ຄົນຂັບລົດ 1 ຄົນ
- ກຳມະກອນ 5 ຄົນ

ເຄື່ອງມື & ກົນຈັກ:

- ລົດກວາດ ຫລືເຄື່ອງກວາດຊະນິດລາກແກ່ 1 ຄັນ
- ລົດຕູ້ 1 ຄັນ
- ເຄື່ອງມື:
  ລໍ້ຍູ້ 2 ຄັນ, ຊ້ວານ 3 ດວງ, ຟອຍ 2 ກ້ານ

ວັດສະດຸ:

- ບໍ່ຕ້ອງການ -

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງກໍ່ແມ່ນເພື່ອເຄື່ອນຍ້າຍຂີ້ເຫຍື້ອ ແລະດິນຕົກຕະກອນຕາມທາງນ້ຳໄຫຼຜ່ານ ຫລື ຂົວຈົມ ຊຶ່ງອາດຈະເປັນອັນຕະລາຍແກ່ການສັນຈອນ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມບໍລິມາດຂອງສິ່ງຕົກຄ້າງທີ່ໄດ້ປະຕິບັດສຳເລັດ.

ຫົວໜ່ວຍ: ແມັດກ້ອນ

ຂັ້ນຕອນໃນການປະຕິບັດວຽກ:

1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະເພື່ອຄວບຄຸມການສັນຈອນ ໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G001, ຫລືຕາມການແນະນຳຂອງນັກວິສະວະກອນ.
2. ເຄື່ອນຍ້າຍ ແລະປັດກວາດຂີ້ເຫຍື້ອ ແລະດິນຕົກຕະກອນຕາມທາງນ້ຳໄຫຼຜ່ານ ຫລື ຂົວຈົມ.
3. ສິ່ງຕົກຄ້າງທີ່ອະນາໄມອອກຈາກຂົວຈົມຄວນນຳໄປຖິ້ມຫ່າງຈາກຂົວຈົມດ້ານລຸ່ມປະ
4. ມານ 1 ແມັດ, ຫລືເຄື່ອນຍ້າຍໄປຖິ້ມໃນບ່ອນທີ່ເໝາະສົມ.
5. ນຳໃຊ້ລົດກວາດ ຫລືໃບມີດສະນິດລາກແກ່ ເພື່ອອະນາໄມຜິວໜ້າຂົວຈົມ. (ຮູບ 1)
6. ດິນທີ່ອະນາໄມອອກຈາກຜິວໜ້າຂອງຂົວຈົມຄວນນຳໄປຖິ້ມຢູ່ດ້ານລຸ່ມຂອງຂົວຈົມ ເພື່ອໃຫ້ນ້ຳໄຫຼສະດວກ.

ຕາຕະລາງ 4.4.2 (43) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 4102	ລາຍການ: 4. ໂຄງສ້າງ	
ໝ້າວຽກ: 4.1 ທາງນ້ຳໄຫຼຜ່ານ & ຂົວຈົມ	ຊື່ວຽກ: ການບຸກເບີກ ແລະອະນາໄມ	ປະເພດວຽກ: ການ ບູລະ ນະຮັກສາເປັນປົກກະຕິ

6. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະເປັນລະບຽບດີ.
7. ບັນທຶກບໍລິມາດວຽກທີ່ໄດ້ປະຕິບັດສຳເລັດລົງໃນແບບຟອມບັນທຶກ.
8. ເຄື່ອນຍ້າຍປ້າຍເຕືອນ ແລະອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.



ຮູບ 1

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້ ໃນປື້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ວັດສະດຸທີ່ເໝາະສົມຕາມການແນະນຳຂອງວິສະວະກອນ ຄວນຈະນຳໄປໃຊ້ໃນບໍລິເວນທີ່ຄາດວ່າຈະ ເກີດການເຊາະເຈື່ອນຕາມລຳຫ້ວຍ.

ตาตะลาง 4.4.2 (44) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 4103	ລາຍການ: 4. ໂຄງສ້າງ	
ໜ້າວຽກ: 4.1 ທາງນ້ຳໄຫຼຜ່ານ & ຂີວຈີມ	ຊື່ວຽກ: ການປ່ຽນແທນຫລັກນຳທາງ	ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ

ແຮງງານ:
- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ຊ່າງກໍ່ 1 ຄົນ
- ກຳມະກອນ 4 ຄົນ

ເຄື່ອງມື & ກົນຈັກ:
- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ
- ເຄື່ອງມື:
  ກຸນແຈຫັນຂໍ້ຕໍ່ທໍ່ 1 ອັນ,
  ນ້ຳທ່ຽງ 1 ອັນ, ຄ້ອນຕີ 1 ອັນ,
  ສໍ່ 2 ອັນ, ມີ້ປະຫາຍ 1 ອັນ

ວັດສະດຸ:
- ຂໍ້ຕໍ່ທໍ່ເຫລັກຕາມຂະໜາດທີ່ໄດ້ອະນຸມັດ
- ທໍ່ເຫລັກຕາມຂະໜາດທີ່ໄດ້ອະນຸມັດ
- ສີ (ຮອງພື້ນ & ສີທາ (ສີເຫຼືອງ & ສີດຳ))
- ຊີມັງ & ຊາຍ

ລາຍລະອຽດ ແລະຈຸດປະສົງ:
ຈຸດປະສົງກໍ່ແມ່ນເພື່ອປ່ຽນແທນຫລັກນຳທາງທີ່ຂາດຫາຍໄປ ຫລື ຖືກທຳລາຍຕາມຂອບຂອງທາງນ້ຳໄຫຼຜ່ານ & ຂີວຈີມ ກ່ອນລະດູຝົນ.

ວິທີການວັດແທກ:
ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຫລັກນຳທາງທີ່ໄດ້ປ່ຽນໃໝ່.

ຫົວໜ່ວຍ: ອັນ

ຂັ້ນຕອນໃນການປະຕິບັດວຽກ:
1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະເພື່ອຄວບຄຸມການສັນຈອນ ໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G001, ຫລືຕາມການແນະນຳຂອງນັກວິສະວະກອນ.
2. ເຄື່ອນຍ້າຍນ້ຳ, ຊາຍ, ດິນ ແລະວັດສະດຸອື່ນໆອອກຈາກຮູເສົາ (pipe socket).
3. ຮູເສົາຄວນຈະມີຄວາມເລິກຢ່າງໜ້ອຍ 15 ຊມ.
4. ໃຊ້ສໍ່ ແລະຄ້ອນຕີເຈາະເພື່ອປ່ຽນຮູເສົາ ຖ້າຫາກຈຳເປັນ.
5. ວາງທໍ່ໃໝ່ລົງໃນຂຸມທີ່ເຈາະ ແລະຕ້ອງຮັບປະກັນວ່າຕຳແໜ່ງ ແລະຄວາມສູງຂອງທໍ່ຖືກ ຕ້ອງດີ.

ตาตะลาง 4.4.2 (44) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 4103	ລາຍການ: 4. ໂຄງສ້າງ	
ໜ້າວຽກ: 4.1 ທາງນ້ຳໄຫຼຜ່ານ & ຂີວຈີມ	ຊື່ວຽກ: ການປ່ຽນແທນຫລັກນຳທາງ	ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ

6. ໃຊ້ປະຫາຍ (ຊີມັງ 1 ສ່ວນ ແລະຊາຍ 3 ສ່ວນ) ຖອກລົງເພື່ອຫຸ້ມທໍ່ທີ່ເປັນຮູເສົາ.
7. ໃຊ້ນ້ຳສີຂາວ ແລະສີດຳທາຫລັກນຳທາງ. (ຮູບ 1)
8. ວັດສະດຸທີ່ເສດເຫຼືອຄວນນຳໄປຖິ້ມໃນສະຖານທີ່ທີ່ປອດໄພ.
9. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະເປັນລະບຽບດີ.
10. ບັນທຶກຈຳນວນຫລັກນຳທາງທີ່ໄດ້ປ່ຽນແທນລົງໃນແບບຟອມບັນທຶກ.
11. ເຄື່ອນຍ້າຍປ້າຍເຕືອນ ແລະອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.



ຮູບ 1

ມາດຕະຖານເຕັກນິກ:
ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ຫລັກນຳທາງທີ່ເປັນໄມ້ແມ່ນແນະນຳບໍ່ໃຫ້ໃຊ້ ເພາະມັນຈະເປ່ເພ່ຳ່າຍກວ່າ. ເຖິງຢ່າງໃດກໍ່ຕາມ, ໄມ້ເນື້ອແຂງຍັງສາມາດນຳໃຊ້ໄດ້ຖ້າຫາກມີຄວາມຈຳເປັນ ແລະ ໄມ້ເນື້ອແຂງດັ່ງກ່າວຈະຕ້ອງຝັງລົງໃນຮູເສົາຢ່າງເໜັ້ນໜາ ແລະ ບໍ່ສູນຫາຍໃນເວລາເກີດນ້ຳນອງ.

ตาตะลาง 4.4.2 (45) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5101	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.1 ປ້າຍຈາລະຈອນ	ຊື່ວຽກ: ການອະນາໄມ	ປະເພດວຽກ: ການ ບຸລະນະ ຮັກສາເປັນປົກກະຕິ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 1 ຄົນ
- • ກຳມະກອນ 2 ຄົນ

ເຄື່ອງມື & ກົນຈັກ:

- •• ລົດຕູ້ 1 ຄັນ
- • ເຄື່ອງມື:
- • ຄຸ 2 ໜ່ວຍ, ຟຸ້ຍນ້ຳ 2 ໜ່ວຍ, ແປງ 2 ອັນ

ວັດສະດຸ:

- • ນ້ຳຢາອະນາໄມ
- • ນ້ຳມັນກາຊວນ
- • ຜ້າຂາດ

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງແມ່ນເພື່ອອະນາໄມປ້າຍ, ແວ່ນສະທ້ອນກັບ, ຫລັກນຳທາງ ແລະຫລັກກິໂລແມັດ ເພື່ອເຮັດໃຫ້ສິ່ງເຫລ່ານັ້ນທຳໜ້າທີ່ຂອງມັນໄດ້ດີ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຂອງປ້າຍທີ່ໄດ້ອະນາໄມສຳເລັດ.

ຫົວໜ່ວຍ: ອັນ

ຂັ້ນຕອນໃນການປະຕິບັດວຽກ:

1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະເພື່ອຄວບຄຸມການສັນຈອນ ໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G001, ຫລືຕາມການແນະນຳ ຂອງນັກວິສະວະກອນ.
2. ອະນາໄມແຜ່ນປ້າຍ, ແວ່ນສະທ້ອນກັບ, ຫລັກນຳທາງ ແລະອື່ນໆ ຢ່າງໜ້ອຍ2ຄັ້ງຕໍ່ປີ ຫລືຫລາຍກວ່ານັ້ນຖ້າຫາກຈຳເປັນ. (ຮູບ 1)
3. ລ້າງຜິວໜ້າຂອງປ້າຍນັ້ນດ້ວຍນ້ຳຢາ ແລະ ຜ້າ. ເວລາອະນາໄມຕ້ອງບໍ່ໃຫ້ຜິວໜ້າປ້າຍຖືກຂູດ/ຂີດ.

ตาตะลาง 4.4.2 (45) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5101	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.1 ປ້າຍຈາລະຈອນ	ຊື່ວຽກ: ການອະນາໄມ	ປະເພດວຽກ: ການ ບຸລະນະ ຮັກສາເປັນປົກກະຕິ

4. ໃຊ້ຜ້າ ຫລືແປງນຸ້ມໆເຊັດນ້ຳຢາອອກ.
5. ອະນາໄມດ້ານຫລັງຂອງປ້າຍດ້ວຍຜ້າ ແລະນ້ຳໃນເວລາດຽວກັນ.
6. ນຳໃຊ້ແປງເພື່ອອະນາໄມຂີ້ຝຸ່ນທີ່ຕິດຢູ່ແຈຂອງປ້າຍໃຫ້ສະອາດ.
7. ຖ້າມີຄາບນ້ຳມັນ, ຢາງປູທາງຕິດຕາມປ້າຍໃຫ້ໃຊ້ ນ້ຳມັນກາຊວນທຳຄວາມສະອາດແລ້ວໃຊ້ນ້ຳລ້າງຕື່ມອີກ.
8. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະເປັນລະບຽບດີ.
9. ບັນທຶກເນື້ອທີ່ຂອງປ້າຍທີ່ໄດ້ອະນາໄມສຳເລັດລົງໃນແບບຟອມບັນທຶກ.
10. ເຄື່ອນຍ້າຍປ້າຍເຕືອນ ແລະອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.



ຮູບ 1

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ตาตะลาง 4.4.2 (46) มาดຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5102	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.1 ປ້າຍຈາລະຈອນ	ຊື່ວຽກ: ການທາສີຄືນໃໝ່	ປະເພດວຽກ: ການ ບຸລະນະ ຮັກສາເປັນປົກກະຕິ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 1 ຄົນ
- ກຳມະກອນ 3 ຄົນ

ເຄື່ອງມື & ກົນຈັກ:

- ລົດຕູ້ 1 ຄັນ
- ເຄື່ອງມື:
- ແປງທາສີ 2 ອັນ, ແປງລອດ 2 ອັນ, ຂັ້ນໃດ 1 ອັນ, ຜ້າຂາດ

ອັດສະດຸ:

- ນ້ຳຢາອະນາໄມ
- ນ້ຳສີ
- ສະກ້ອດ & ເຈ້ຍ

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງແມ່ນເພື່ອປ້ອງກັນຄວາມຜິດພາດຊຶ່ງອາດເກີດຂຶ້ນຍ້ອນອຸປະກອນການຄວບຄຸມການສັນຈອນ ບໍ່ສາມາດແນມເຫັນໄດ້ດີ. ໜ້າວຽກດັ່ງກ່າວຈະປະກອບດ້ວຍການທາສີ ແລະ ການທາສີປ້າຍ ແລະອຸປະກອນການຄວບຄຸມການສັນຈອນຄືນໃໝ່ດັ່ງນີ້:

1. ເສົາປ້າຍ
2. ທາງດ້ານຫລັງຂອງປ້າຍ
3. ຫລັກກິໂລແມັດ
4. ຫລັກນຳທາງ ແລະຫລັກໝາຍບອກທີ່ຕັ້ງຂອງທໍ່ລະບາຍນ້ຳ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຂອງປ້າຍທີ່ໄດ້ທາສີຄືນໃໝ່ສຳເລັດ.

ຫົວໜ່ວຍ: ອັນ

ตาตะลาง 4.4.2 (46) มาดຖานเตักนิกในการปะติบัดอรุก

ละหัด: 5102	ลายการ: 5. อุปะกอบถอบถุมการจาละจอบ	
หน้าอรุก: 5.1 ป้ายจาละจอบ	ชื่อรุก: การทาสีถืบใหม่	ปะเพดอรุก: การ บุละนะ รักสาเป็นปักกะติ

ขั้นตอนในการปะติบัดอรุก:

1. ติดตั้งอุปะกอบถอามปอดไพต่างๆให้มีถอามเพาะ เพื่อถอบถุมการสันจอนโดยให้ปะติบัดตามที่ได้แนะนำใน Code: G001, หลื ตามการแนะนำของนักอิสะอะกอน.
2. อะนาไมผิวหน้าบ่อนที่จะทาสี และ ต้องพั้นใจอ่าบໍລິเอนดั่งก่าอบໍ่มีขี้ฝุ่น, ขี้พ้ยง และ สิ่งอื่นๆ. (ธุบ 1)
3. ให้นำใช้แปงที่มุ้ม และ สะอาด หลื ลูกกิ้งเท่านั้น.
4. การทาสีต้องปะติบัดในเอลาอากาดแห้งดีเท่านั้น. ห้ามทาสีในเอลาบໍລິเอน ที่จะทาสีนั้นปรุก และ เอลาฝินติก.
5. สีจะต้องปะสีมในช่วงการนำใช้.
6. ในเมื่อแอ่นสะท้อนหากมีถอามต้องการทาสี ให้นำใช้เจ้ยหลือสะก่อดปักแอ่นในช่วงการทาสีนั้น.
7. อิที และ ขั้นตอนการทาสีได้แบ่งออกเป็น 3 ปะเพด ตามปะเพดของอัดสะดุที่จะนำใช้ดั่งนี้:

   ปะเพดที 1: ผิวหน้าที่เป็นเผ้ก (หลักป้าย, แผ่นด้านหลังของป้าย และ อื่นๆ) (ธุบ 2)

   a. ขุดสีที่บໍ่จับ และขี้พ้ยงด้วยการนำใช้แปงลอดถ้ามีสีโถะตามผิวหน้า.
   b. อะนาไมผิวหน้าบ่อนที่จะทาสีด้วยการนำใช้ผ้า และ น้ำ และ ป่อยให้บ่อนที่จะทาสีนั้นแห้ง.
   c. ใช้กะดาดซายถัดสีเก่า และ แปงเพื่ออะนาไมผิวหน้าให้สะอาดเพื่อให้สีจับกับเหล็กดี.
   d. ทาสีธองพื้นย่างสะพ่ำสะเพิตามบໍລິเอนที่มีถอามเสยหาย ป่อยให้มันแห้ง.
   e. ทาสีชั้นสุดท้ายย่างทั่วเถิง.

   ปะเพดที 2: ผิวหน้าที่เป็นไม้

   a. ขุดสีที่บໍ่จับด้วยการนำใช้แปงลอดถ้ามีถอามจำเป็น.
   b. อะนาไมผิวหน้าบ่อนที่จะทาสีด้วยการนำใช้ผ้า และ น้ำ และ ป่อยให้บ่อนที่จะทาสีนั้นแห้ง.
   c. ทาสีธองพื้นย่างสะพ่ำสะเพิตามบໍລິเอนที่มีถอามเสยหาย ป่อยให้มันแห้ง.
   d. ทาสีชั้นสุดท้ายย่างทั่วเถิงตามสีที่ได้กำมิดไว้.

ตาตะลาง 4.4.2 (46) มาดຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5102	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.1 ປ້າຍຈາລະຈອນ	ຊື່ວຽກ: ການທາສີຄືນໃໝ່	ປະເພດວຽກ: ການ ບຸລະນະ ຮັກສາເປັນປົກກະຕິ

ປະເພດທີ 3: ຜິວໜ້າທີ່ເປັນເບຕົ້ງ ແລະຫີນ (ຮູບ 3)

a. ລ້າງຂີ້ຝຸ່ນ, ດິນ, ຕົມ ແລະ ອື່ນໆອອກຈາກຜິວໜ້າ ປ່ອຍໄວ້ໃຫ້ແຫ້ງ.

b. ທາສີນ້ຳຮອງພື້ນ ຫລື ສີຮາເຕັກຕາມສີທີ່ໄດ້ກຳນົດໄວ້ເພື່ອແນມເຫັນໄດ້ງ່າຍ.

c. ຕິອໜັງສືຕາມຕາມປ້າຍແມ່ນສາມາດທາດ້ວຍສີປະເພດດຽວກັນຕາມທີ່ໄດ້ກຳນົດໄວ້.

8. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະ ເປັນລະບຽບດີ.
9. ບັນທຶກເນື້ອທີ່ຂອງປ້າຍທີ່ໄດ້ອະນາໄມສຳເລັດລົງໃນແບບຟອມບັນທຶກ.
10. ເຄື່ອນຍ້າຍປ້າຍເຕືອນ ແລະ ອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.

ຮູບ 1

ຮູບ 2

ตาตะลาง 4.4.2 (46) มาดຖานเตักนิกในการปะติบัดอวุก

ละหัด: 5102	ลายการ: 5. อุปะกอนคอบคุมการจาละจอน	
หน้าอวุก: 5.1 ป้ายจาละจอน	ชื่อวุก: การทาสีคืนใหม่	ปะเพดอวุก: การ บุละนะ รักสาเป็นปักกะติ



ຮູບ 3

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລື ຕາມການແນະນຳຂອງນັກວິສະວະກອນ.

ຫ້າມທາສີໃສ່ດ້ານໜ້າຂອງປ້າຍເດັດຂາດ ເພາະສີດ້ານໜ້າຂອງປ້າຍແມ່ນສີທີ່ມີຄຸນນະພາບດີທີ່ສຸດຈາກໂຮງງານຜະລິດ.

ຫ້າມແຕະຕ້ອງ ຫລື ທາສີໃສ່ຜິວໜ້າແວ່ນສະທ້ອນເດັດຂາດ ເພາະມັນຈະສູນເສຍປະສິດທິພາບໃນການໃຊ້ງານທັນທີ.

ตาตะลาง 4.4.2 (47) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5103	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.1 ປ້າຍຈາລະຈອນ	ຊື່ວຽກ: ການສ້ອມແປງ (ໃນອູ່ສ້ອມແປງ)	ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ຊ່າງທາສີ 1 ຄົນ
- ກຳມະກອນ 2 ຄົນ

ເຄື່ອງມື & ກົນຈັກ:

- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ

- ເຄື່ອງມື:

ເຄື່ອງມືທຳຄວາມສະອາດ, ຄັນໃດ 1 ອັນ, ແປງທາສີ ຫລືລູກກິ້ງ 2 ອັນ, ເຄື່ອງມືສຳຫລັບການຂົ້ຖອນ

ວັດສະດຸ:

- ນ້ຳສີ
- ວັດສະດຸເສີມພື້ນປ້າຍ
- ວັດສະດຸສະທ້ອນແສງ
- ບຸລອງ, ແໜວນ ແລະນ໊ອດ

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງກໍ່ແມ່ນເພື່ອສ້ອມແປງປ້າຍຕ່າງໆຊຶ່ງບໍ່ສາມາດສ້ອມແປງໄດ້ຢູ່ສະໜາມ ແຕ່ວ່າສາມາດສ້ອມແປງໄດ້ໃນອູ່ ຫລື ສະຖານທີ່ສ້ອມແປງ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຂອງປ້າຍທີ່ໄດ້ສ້ອມແປງສຳເລັດ.

ຫົວໜ່ວຍ: ຕາແມັດ

ຂັ້ນຕອນໃນການປະຕິບັດວຽກ:

1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະ ເພື່ອຄວບຄຸມການສັນຈອນ ໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G001, ຫລືຕາມການແນະນຳ ຂອງນັກວິສະວະກອນ.
2. ນ້ຳງປ້າຍອອກຈາກເສົາດ້ວຍຄວາມລະມັດລະວັງໃຫ້ຮັກສາບຸລອງ ແລະ ນ໊ອດ ຫລື ຕະປູກຽວ ນຳປ້າຍເຂົ້ຳໄປອູ່ຫລືສະຖານທີ່ສ້ອມແປງ. (ຮູບ 1)
3. ພາຍຫລັງສ້ອມແປງສຳເລັດໃຫ້ນຳປ້າຍກັບຄືນໄປສະໜາມແລ້ວທຳການຕິດຕັ້ງຄືນໃສ່ ບ່ອນ ເກົ່າ.
4. ໃຫ້ປ່ຽນຫລັກປ້າຍໃໝ່ (ຖ້າຫາກຈຳເປັນ).

ตาตะลาง 4.4.2 (47) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5103	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.1 ປ້າຍຈາລະຈອນ	ຊື່ວຽກ: ການສ້ອມແປງ (ໃນອູ່ສ້ອມແປງ)	ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ

5. ຕ້ອງຮັບປະກັນວ່າບຸລອງ, ນ໊ອດ ແລະຕະປູກຽວນັ້ນໄດ້ຖືກຫັນຄືນໃຫ້ແໜ້ນດີ.
6. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະເປັນລະບຽບດີ. (ຮູບ 2)
7. ບັນທຶກເນື້ອທີ່ຂອງປ້າຍທີ່ໄດ້ອະນາໄມສຳເລັດລົງໃນແບບຟອມບັນທຶກ.
8. ເຄື່ອນຍ້າຍປ້າຍເຕືອນ ແລະອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.



ຮູບ 1



ຮູບ 2

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ຫ້າມເຄື່ອນຍ້າຍປ້າຍທີ່ຈະເປັນອັນຕະລາຍແກ່ການສັນຈອນເຊັ່ນ: ປ້າຍ “**ຢຸດ**”.ປ້າຍຕ່າງໆເຫລົ່ານີ້ຕ້ອງໄດ້ມີປ້າຍຊົ່ວຄາວມາປ່ຽນຈຶ່ງສາມາດເຄື່ອນຍ້າຍໄດ້.

ຕາຕະລາງ 4.4.2 (48) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5104	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.1 ປ້າຍຈາລະຈອນ	ຊື່ວຽກ: ການສ້ອມແປງ (ຕິນປ້າຍເປ່ເພ)	ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ກຳມະກອນ 2 ຄົນ

ເຄື່ອງມື & ກົນຈັກ:

- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ
- ເຄື່ອງມື:
  ລໍ້ຍູ້ 1 ຄັນ, ຊ້ອນ 2 ດວງ, ເຫຼັກເຂົາຄວາຍ 2 ດວງ, ຄ້ອນຕີ 1 ອັນ, ເຄື່ອງມືເພື່ອຮື້ຖອນ & ຕິດຕັ້ງ, ແປງທາສີ 1 ອັນ, ລູກກົ້ງ 1 ອັນຫລືເຄື່ອງຜິ່ງສີ 1 ເຄື່ອງ

ວັດສະດຸ:

- ຊີມັງ
- ຊາຍ
- ແຮ່
- ນ້ຳ
- ນ້ຳສີ
- ວັດສະດຸສະທ້ອນແສງ
- ບຸລອງ, ແຫວນ ແລະ ນ໊ອດ

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງແມ່ນເພື່ອສ້ອມແປງຄວາມເສຍຫາຍຂອງຫລັກປ້າຍ ແລະ ຮາກຖານປ້າຍຕາມທາງ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຂອງຮາກຖານປ້າຍທີ່ໄດ້ສ້ອມແປງສຳເລັດ.

ຫົວໜ່ວຍ: ອັນ

ຂັ້ນຕອນໃນການປະຕິບັດວຽກ:

1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະ ເພື່ອຄວບຄຸມການສັນຈອນໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G001, ຫລືຕາມການແນະນຳ ຂອງນັກວິສະວະກອນ.
2. ກຳນົດບ່ອນທີ່ຈະປ່ຽນແທນປ້າຍໃຫ້ໃກ້ຄຽງກັບຕຳແໜ່ງປ້າຍເກົ່າເທົ່າທີ່ເປັນໄປໄດ້.
3. ຂຸດຂຸມບ່ອນທີ່ຈະຝັງປ້າຍ ແລະສ້ອມຂ້າງຂອງຂຸມໃຫ້ຕັ້ງສາກ.
4. ປະສົມເບຕົ້ງ (ຊີມັງ 1 ສ່ວນ, ຊາຍ 3 ສ່ວນ ແລະແຮ່ 6 ສ່ວນ)ເຕີມນ້ຳໃຫ້ເໝາະສົມເພື່ອໃຫ້ເບຕົ້ງແຂງຕົວ ແລະເຮັດວຽກງ່າຍຂຶ້ນ.

ຕາຕະລາງ 4.4.2 (48) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5104	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.1 ປ້າຍຈາລະຈອນ	ຊື່ວຽກ: ການສ້ອມແປງ (ຕິນປ້າຍເປ່ເພ)	ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ

5. ນຳປ້າຍໃໝ່ລົງໃນຂຸມ ຕັ້ງປ້າຍໃຫ້ຊື່ ແລະຖືກຕຳແໜ່ງໂດຍການນຳໃຊ້ໄມ້ຄ້ຳຊ່ວຍ.
6. ຖອກເບຕົ້ງລົງໃນຂຸມຈົນເຖິງລະດັບໜ້າດິນ.
7. ກ່ອນຈະຖົມດ້ວຍດິນໃຫ້ນຳດິນລົງຂຸມເປັນຊັ້ນໆ ແລະ ຕຳແໜ້ນດ້ວຍຕີນຊ້ຳໆຖົມຂຶ້ນຈົນເຖິງໜ້າດິນ. (ຮູບ 1)
8. ຕົບແຕ່ງຜິວໜ້າໃຫ້ງ່ຽງຈາກຫລັກລົງໄປຫາຂອບຂອງບໍລິເວນທີ່ຖົມເພື່ອລະບາຍນ້ຳ.
9. ອະນາໄມດ້ານໜ້າຂອງປ້າຍ ແລະ ຕິດຕັ້ງຄືນ/ປ່ຽນແທນປ້າຍໂຕໃໝ່.
10. ທາສີຫລັກປ້າຍ.
11. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະ ເປັນລະບຽບດີ.
12. ບັນທຶກຈຳນວນຂອງປ້າຍທີ່ໄດ້ສ້ອມແປງສຳເລັດລົງໃນແບບຟອມບັນທຶກ.
13. ເຄື່ອນຍ້າຍປ້າຍເຕືອນ ແລະອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.



ດິນ **ເບຕົ້ງ**

ຮູບ 1

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ตาตะลาง 4.4.2 (49) มาดຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5202	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.2 ຮາວກັນຕົກ & ຫລັກ	ຊື່ວຽກ: ປ່ຽນແທນ (ຮາວປ້ອງກັນຕົກ)	ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ

ແຮງງານ:

- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ກຳມະກອນ 4 ຄົນ

ເຄື່ອງມື & ກົນຈັກ:

- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ
- ເຄື່ອງມື:
  ຊ້ອນ 2 ດວງ, ຄ້ອນຕີ 2 ອັນ
  ເຫຼັກເຂົາຄວາຍ 1 ດວງ, ກຸນແຈປາກຕາຍ 2 ອັນ

ວັດສະດຸ:

- ຊີມັງ, ຊາຍ, ແຮ່
- ຫລັກເຫຼັກທີ່ເຄືອບດ້ວຍGalvanized
- ຮາວກັນຕົກທີ່ເຄືອບດ້ວຍGalvanized
- ບຸລອງ, ແຫວນ ແລະນ໊ອດ

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງແມ່ນເພື່ອປ່ຽນແທນຫລັກ ແລະ ຮາວປ້ອງກັນການຕົກເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຊົມໃຊ້ເສັ້ນທາງ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຄວາມຍາວຂອງຮາວປ້ອງກັນການຕົກທີ່ປ່ຽນໃໝ່ (ລວມທັງຫລັກພ້ອມ).

ຫົວໜ່ວຍ: ແມັດ

ຂັ້ນຕອນໃນການປະຕິບັດວຽກ:

1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະ ເພື່ອຄວບຄຸມການສັນຈອນ ໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G001, ຫລື ຕາມການແນະນຳ ຂອງນັກວິສະວະກອນ.
2. ຫັນນ໊ອດອອກຈາກບຸລອງ ແລະ ເຄື່ອນຍ້າຍຮາວກັນຕົກທີ່ເປ່ເພອອກຈາກຫລັກ. (ຮູບ 1)
3. ໃຫ້ຖອນ ແລະ ປ່ຽນແທນຫລັກໄມ້ ຫລື ເຫລັກຖືກທຳລາຍ.
4. ຫລັກໄມ້ໃໝ່ຈະຕ້ອງໄດ້ຕາມຂະໜາດ ແລະ ປາຍຫລັກຕ້ອງແຫຼມເພື່ອບ່ໍ່ໃຫ້ນ້ຳຝົນຄ້າງ. ເຈາະຮູ

ตาตะลาง 4.4.2 (49) มาดຖานเตักนิกในการปะติบัดอวุก

ละหัด: 5202	ลายการ: 5. อุปะกอบถอบถุมการจาละจอบ	
หน้าอวุก: 5.2 ธาอกันติก & หลัก	ชื่ออวุก: ปั่วนแทบ (ธาอป้องกันติก)	ปะเพดอวุก: การ บุละนะธักสาเป้นกำนิด

เພື່ອໃສ່ບຸລອງ ແລະນ໊ອດຈັບ.

5. ຂຸດຂຸມເພື່ອຝັງຫລັກໃຫ້ກວ້າງພໍເພື່ອທຳການຕຳແໜ້ນ. (ຮູບ 2) ໃຊ້ເຄື່ອງເຈາະສ່ວນລຸ່ມ ຂອງຂຸມກໍ່ເປັນອີກທາງເລືອກໜຶ່ງເຊັ່ນກັນ.
6. ວາງຫລັກລົງໃນຂຸມທີ່ຂຸດໄວ້ກວດການ ເບິ່ງຄວາມສູງ ແລະ ຕຳແໜ່ງໃຫ້ຖືກຕ້ອງດີ.ຫລັກຈະ ຕ້ອງຕັ້ງສາກຢູ່ສະເໝີໃນເວລາຖົມດິນ.
7. ຖົມດິນເປັນຊັ້ນໆຈົນເຖິງລະດັບໜ້າດິນ ແຕ່ລະຊັ້ນບ່ໍ່ໃຫ້ເກີນ 10 ຊມ (ດິນຫລົມ). ຕຳແໜ້ນດິນຖົມໃຫ້ແໜ້ນດ້ວຍຕີນຊ້ຳ ຫົດນ້ຳຖ້າດິນແຫ້ງ.
8. ຖ້ານຳໃຊ້ຫລັກເຫຼັກ ໃຫ້ຖົມຂຸມດ້ວຍເບຕົ້ງດັ່ງທີ່ໄດ້ສະແດງໄວ້ໃນຮູບ 3, ປະໄວ້ໃຫ້ເບຕົ້ງແຂງຕົວຈຶ່ງດຳເນີນການຕໍ່ໄປ.
9. ປະກອບຮາວກັນຕົກໃສ່, ຕ້ອງຮັບປະກັນວ່າຈຸດຕໍ່ກັນນັ້ນເຂົ້າຖືກຕຳແໜ່ງດີ. (ຮູບ 4). ຈຸດຕໍ່ທີ່ເຫລື່ອມກັນຈະຕ້ອງໄປຕາມທິດຂອງການສັນຈອນໃນຊ່ອງແລ່ນລົດທີ່ໃກ້ສຸດກັບໂຄງສ້າງກັນຕົກນັ້ນ.
10. ຫັ້ນບຸລອງ ແລະນ໊ອດໃຫ້ແໜ້ນດີ.
11. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະເປັນລະບຽບດີ.
12. ບັນທຶກຈຳນວນ/ລວງຍາວຂອງວຽກທີ່ເຮັດສຳເລັດລົງໃນແບບຟອມບັນທຶກ.
13. ເຄື່ອນຍ້າຍປ້າຍເຕືອນ ແລະອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.

ຮູບ 1

ตาตะลาง 4.4.2 (49) มาดຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5202	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໝ້າວຽກ: 5.2 ຮາວກັນຕົກ & ຫລັກ	ຊື່ວຽກ: ປ່ຽນແທນ (ຮາວປ້ອງກັນຕົກ)	ປະເພດວຽກ: ການ ບູລະນະຮັກສາເປັນກຳນົດ



ຮູບ 2



ຮູບ 3



ຮູບ 4

ตาตะลาง 4.4.2 (49) มาดຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5202	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໝ້າວຽກ: 5.2 ຮາວກັນຕົກ & ຫລັກ	ຊື່ວຽກ: ປ່ຽນແທນ (ຮາວປ້ອງກັນຕົກ)	ປະເພດວຽກ: ການ ບູລະນະຮັກສາເປັນກຳນົດ

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

ตาตะลาง 4.4.2 (50) มาดຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5202	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.2 ຮາວກັນຕົກ & ຫລັກ	ຊື່ວຽກ: ປ່ຽນແທນ (ຫຼັກກັນຕົກ)	ປະເພດວຽກ: ການ ບຸລະນະຮັກສາເປັນກຳນົດ

ແຮງງານ:
- ວິຊາການ 1 ຄົນ
- ຄົນຂັບລົດ 2 ຄົນ
- ກຳມະກອນ 2 ຄົນ

ເຄື່ອງມື & ກົນຈັກ:
- ລົດແກ່ດິນ 1 ຄັນ
- ລົດຕູ້ 1 ຄັນ
- ເຄື່ອງມື:
ຊ້ອນ 2 ດວງ, ເຫຼັກເຂົາຄາຍ 1 ດວງ, ຄ້ອນຕີ 2 ອັນ, ກຽງກໍ່ 1 ອັນ, ນ້ຳທ່ຽງ 1 ອັນ, ຫຼັກ, ເຊືອກ

ວັດສະດຸ:
- ຊີມັງ, ຊາຍ, ແຮ່
- ຫລັກໝາຍກິໂລແມັດທີ່ເປັນເບຕົງ

ລາຍລະອຽດ ແລະຈຸດປະສົງ:
ຈຸດປະສົງແມ່ນເພື່ອຮັບປະກັນຄວາມຖືກຕ້ອງໃນການບອກທີ່ຕັ້ງຕໍ່ຜູ້ຊົມໃຊ້ເສັ້ນທາງ ແລະ ກຳນົດຈຸດທີ່ຕັ້ງໃນເວລາສ້ອມແປງທາງ.

ວິທີການວັດແທກ:
ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມຈຳນວນຫລັກທີ່ໄດ້ປ່ຽນແທນຕົວຈິງ.

ວຽກດັ່ງກ່າວລວມມີການຂຸດຂຸມ,ເຄື່ອນຍ້າຍດິນ,ປະສົມພ້ອມເທເບຕົງ ແລະ ອະນາໄມສິ່ງເສດເຫລືອ.

ຫົວໜ່ວຍ: ຫລັກ

ຂັ້ນຕອນໃນການປະຕິບັດວຽກ:
1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະ ເພື່ອຄວບຄຸມການສັນຈອນ ໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G001, ຫລືຕາມການແນະນຳ ຂອງນັກວິສະວະກອນ.
2. ກຳນົດທີ່ຕັ້ງຈຸດທີ່ຈະປ່ຽນແທນຫລັກກິໂລແມັດ. (ຮູບ 1)
3. ວິທີການຕິດຕັ້ງໄດ້ແບ່ງອອກເປັນ2ວິທີ ຂຶ້ນກັບປະເພດຂອງວັດສະດຸຖົມຮາກຖານ:

ตาตะลาง 4.4.2 (50) มาดຖานเตักนิกในการปะติบัดอวฺก

ละหัด: 5202	ลายการ: 5. อุปะกอนคอบคุมการจาละจอน	
หน้าอวฺก: 5.2 ธาอกันติก & หลัก	ชื่อวฺก: ปวฺนแทน (หฺลักกันติก)	ปะเพดอวฺก: การ บุละนะธักสาเป็นกำนิด

a. ການຖົມຮາກຖານຫລັກກິໂລແມັດດ້ວຍເບຕົງ (ຮູບ 2&3)
- ເມື່ອຕ້ອງການຢ້າຍຈຸດທີ່ຕັ້ງຫລັກກິໂລແມັດໄປບ່ອນໃໝ່ ໃຫ້ຂຸດຫລັກເກົ່ານັ້ນອອກເສຍກ່ອນ.
- ໃຫ້ຖົມຂຸມທີ່ຂຸດຫລັກເກົ່ານັ້ນອອກດ້ວຍການຕຳແໜ້ນເປັນຊັ້ນໆຈົນເຖິງລະດັບໜ້າດິນໃນບໍລິເວນນັ້ນໆ.
- ເຄື່ອນຍ້າຍຫລັກໃໝ່ ຫລື ຫລັກເກົ່າທີ່ຂຸດອອກນັ້ນໄປບ່ອນທີ່ຕ້ອງການຕິດຕັ້ງໃໝ່ ໂດຍການກຳນົດຈາກທີມງານວັດແທກ. ນຳໃຊ້ຫລັກໝາຍ2ຫລັກ ແລະ ເຊືອກເພື່ອກຳນົດທີ່ຕັ້ງຂອງຫລັກກິໂລແມັດ.
- ຂຸດຂຸມໃຫ້ກວ້າງພໍເພື່ອໃຫ້ເບຕົງໄດ້ຫຸ້ມຫລັກແຕ່ລະຂ້າງ 25ຊມ ແລະ ຈາກພື້ນດິນ 10ຊມ. ຂ້າງຂອງຂຸມຈະຕ້ອງຕັ້ງສາກ ແລະພື້ນຕ້ອງພຽງດີ.
- ປະສົມເບຕົງແຫ້ງເທລົງຂຸມດ້ວຍຄວາມໜາ 10ຊມ ແລ້ວຕຳແໜ້ນ.
- ວາງຫລັກກິໂລແມັດຢູ່ເທິງຊັ້ນເບຕົງແຫ້ງ ພ້ອມປັບໃຫ້ໄດ້ລະດັບ ແລະຕຳແໜ່ງ.
- ນ້ຳຈະຕ້ອງເຕີມໃສ່ສ່ວນປະສົມຂອງເບຕົງໃຫ້ພໍເໝາະສາມາດປະຕິບັດວຽກໄດ້ງ່າຍຂຶ້ນ ແລະ ໃຫ້ ເທເບຕົງລົງໃນຂຸມຈົນເຖິງລະດັບໜ້າດິນ. ຕົບແຕ່ງຜິວໜ້າເບຕົງໃຫ້ລຽບດີ ແລະ ໃຫ້ມີມຸມງ່ຽງລົງໄປຫາຂອບຂອງເບຕົງ.
- ອະນາໄມເສດດິນ, ເສດເບຕົງ ແລະ ສິ່ງເສດເຫລືອຕ່າງໆອອກຈາກບໍລິເວນນັ້ນ.

b. ການຖົມຮາກຖານຫລັກກິໂລແມັດດ້ວຍດິນ (ຮູບ 4&5)
- ຂຸດຂຸມໃຫ້ຖືກຕ້ອງຕາມຕຳແໜ່ງທີ່ໄດ້ກຳນົດຈາກທີມງານວັດແທກ ແລະ ຂຸມນັ້ນຕ້ອງເລິກພໍທີ່ຈະເຮັດໃຫ້ຫລັກກິໂລແມັດມີຄວາມໝັ້ນຄົງ (ຕາມປົກກະຕິແລ້ວປະມານເຄິ່ງໜຶ່ງ ຂອງຄວາມຍາວຫລັກກິໂລແມັດ) ແລະ ຕ້ອງກວ້າງພຽງພໍເພື່ອທີ່ຈະ ຕຳແໜ້ນດ້ວຍຕີນຊ້ຳໆ.
- ປັບລະດັບພື້ນໃຫ້ຮາບພຽງ ແລ້ວຕຳແໜ້ນດ້ວຍຕີນຊ້ຳໆ.
- ວາງຫລັກກິໂລແມັດລົງໃນຂຸມ ແລ້ວປັບໃຫ້ຖືກຕ້ອງຕາມຕຳແໜ່ງ.
- ຖົມຂຸມຄືນເປັນຊັ້ນ ແຕ່ລະຊັ້ນບໍ່ໃຫ້ເກີນ 10 ຊມ ແລ້ວຕຳແໜ້ນດ້ວຍຕີນຊ້ຳໆ.
- ຖົມຂຶ້ນໃຫ້ສູງກວ່າລະດັບໜ້າດິນໜ້ອຍໜຶ່ງ ແລ້ວໃຫ້ຕົບແຕ່ງໃຫ້ງ່ຽງລົງໄປຫາຂອບບໍລິ ເວນທີ່ຖົມນັ້ນ.
- ອະນາໄມສິ່ງເສດເຫລືອຕ່າງໆອອກຈາກບໍລິເວນນັ້ນ.

4. ຖ້າຫາກມີຄວາມຕ້ອງການທາສີຄືນ ໃຫ້ປະຕິບັດຕາມ Code 5102.
5. ຕ້ອງຮັບປະກັນວ່າບ່ອນທີ່ສ້ອມແປງນັ້ນມີຄວາມສະອາດ ແລະ ເປັນລະບຽບດີ.

ตาตะลาง 4.4.2 (50) มาดຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5202	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໝ້າວຽກ: 5.2 ຮາວກັນຕົກ & ຫລັກ	ຊື່ວຽກ: ປ່ຽນແທນ (ຫຼັກກັນຕົກ)	ປະເພດວຽກ: ການ ບູລະນະຮັກສາເປັນກຳນົດ

6. ບັນທຶກຈຳນວນຂອງຫລັກທີ່ປ່ຽນແທນສຳເລັດລົງໃນແບບຟອມບັນທຶກ.
7. ເຄື່ອນຍ້າຍປ້າຍເຕືອນ ແລະອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.



ຮູບ 1



ຮູບ 2



ຮູບ 3

ตาตะลาง 4.4.2 (50) มาดຖานເຕັກນິກໃນການປະຕິບັດວຽກ

ລະຫັດ: 5202	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໝ້າວຽກ: 5.2 ຮາວກັນຕົກ & ຫລັກ	ຊື່ວຽກ: ປ່ຽນແທນ (ຫຼັກກັນຕົກ)	ປະເພດວຽກ: ການ ບູລະນະຮັກສາເປັນກຳນົດ



ຮູບ 4



ຮູບ 5

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມື ຫລືຕາມການແນະນຳຂອງນັກວິສະວະກອນ.

<u>ສ່ວນປະສົມເຍຕົ້ງສຳຫລັບຮາກຖານ = ຊີມັ້ງ 1 ສ່ວນ : ຊາຍ 3 ສ່ວນ: ແຮ່ 6 ສ່ວນ</u>

ຕາຕະລາງ 4.4.2 (51) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5301	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.3 ການຕີເສັ້ນ	ຊື່ວຽກ: ການທາສີຄືນໃໝ່ (ສີຈິດຈາງ)	ປະເພດວຽກ: ການບູລະນະຮັກສາເປັນກຳນົດ

ແຮງງານ:

- ວິຊາການ 1 ຄົນ
- ຜູ້ຄວບຄຸມເຄື່ອງຈັກ 1 ຄົນ
- ຄົນຂັບລົດ 2 ຄົນ
- ກຳມະກອນ 2 ຄົນ

ເຄື່ອງມື & ກົນຈັກ:

- ລົດແກ່ດົນ 1 ຄັນ
- ລົດຕູ້ 1 ຄັນ
- ຈັກລົມ 1 ເຄື່ອງ
- ເຄື່ອງມື:
  ຟອຍອະນາໄມດ້ວຍມື 2 ອັນ,
  ຟອຍອະນາໄມດ້ວຍເຄື່ອງຈັກ 1 ອັນ,
  ແບບໂຕໜັງສື 1 ຊຸດ,ເຄື່ອງເປົ່າດ້ວຍດອກໄຟ 1 ເຄື່ອງ, ແປງທາສີ 2 ອັນ, ເຄື່ອງຂຸດສີ

ວັດສະດຸ:

ນ້ຳສີThermoplastic

ລາຍລະອຽດ ແລະຈຸດປະສົງ:

ຈຸດປະສົງຂອງການທາສີຄືນກໍ່ແມ່ນ ເພື່ອລຸດຜ່ອນຄວາມສ່ຽງທາງອຸບັດເຫດຊຶ່ງອາດເກີດຈາກ ເຄື່ອງໝາຍຈາລະຈອນບໍ່ສາມາດແນມເຫັນໄດ້ດີ. ຕາມປົກກະຕິແລ້ວໜ້າວຽກດັ່ງກ່າວນີ້ ແມ່ນມີຂອບເຂດຈຳກັດໃນການທາສີຄືນບາງຢ່າງເຊັ່ນ: ໃຈກາງທາງ, ຈຸດຫ້າມແຊງ ແລະ ຂອບທາງ ເພື່ອໃຫ້ສີດັ່ງກ່າວນັ້ນສາມາດແນມເຫັນໄດ້ດີ. ການທາສີເຄື່ອງໝາຍຈາລະຈອນຕາມໜ້າທາງຄືນໃໝ່ຄວນປະຕິບັດພາຍຫລັງໄດ້ມີການປູຢາງທັບໜ້າທາງ ເກົ່າ (resealing), ການປູຢາງຂົ້ວປົກ (overlay) ຫລື ການຕາບ.

ວິທີການວັດແທກ:

ວຽກດັ່ງກ່າວຈະໄດ້ທຳການວັດແທກຕາມເນື້ອທີ່ຂອງສີທີ່ໄດ້ທາຄືນສຳເລັດ.

ຫົວໜ່ວຍ: ຕາແມັດ

ຂັ້ນຕອນໃນການປະຕິບັດວຽກ:

1. ຕິດຕັ້ງອຸປະກອນຄວາມປອດໄພຕ່າງໆໃຫ້ມີຄວາມເໝາະເພື່ອຄວບຄຸມການສັນຈອນ ໂດຍໃຫ້ປະຕິບັດຕາມທີ່ໄດ້ແນະນຳໃນ Code: G004, ຫລື ຕາມການແນະນຳ ຂອງນັກວິສະວະກອນ.
2. ອະນາໄມສີຕາມໜ້າທາງດ້ວຍແປງເຫຼັກ.
3. ຕ້ອງຮັບປະກັນວ່າບ່ອນທີ່ຈະທາສີຄືນນັ້ນແຫ້ງ, ບໍ່ມີຂີ້ຝຸ່ນ, ແລະສິ່ງເຈືອປົນອື່ນໆ.
4. ປະສົມສີ ແລະປັບໃຫ້ເຂົ້າກັບສີເດີມທີ່ມີຢູ່ຕາມທີ່ຕ້ອງການ. (ຮູບ 1)

ຕາຕະລາງ 4.4.2 (51) ມາດຖານເຕັກນິກໃນການປະຕິບັດວຽກ

ລະຫັດ: 5301	ລາຍການ: 5. ອຸປະກອນຄວບຄຸມການຈາລະຈອນ	
ໜ້າວຽກ: 5.3 ການຕີເສັ້ນ	ຊື່ວຽກ: ການທາສີຄືນໃໝ່ (ສີຈິດຈາງ)	ປະເພດວຽກ: ການບູລະນະຮັກສາເປັນກຳນົດ

5. ນຳໃຊ້ແປງທາສີ ຫລື ລູກກີ້ງທາສີຄືນ. ຫ້າມທາສີໝາເກີນໄປເພາະມັນອາດຈະແຕກໃນເວລາມັນແຫ້ງໄດ້.
6. ສີເສັ້ນຈາລະຈອນຈະຕ້ອງແຫ້ງພາຍໃນເວລາປະມານ 10-15 ນາທີ (ຂຶ້ນກັບປະເພດຂອງສີທີ່ ນຳໃຊ້ ແລະ ສະພາບອາກາດ).
7. ຕ້ອງຮັບປະກັນວ່າຈວຍນິລະໄພ (cones) ຖືກວາງຢ່າງຖືກຕ້ອງຕາມໃຈກາງທາງໃນບໍລິເວນການທາສີ. ຄວນນຳຈວຍນິລະໄພ (Cone) ກັບຄືນບ່ອນເກົ່າໂດຍໄວໃນກໍລະນີມີການລົບກວນຈາກການສັນຈອນ.
8. ໃຫ້ເຄື່ອນຍ້າຍວຽກການທາສີ (ຄົນໂບກທຸງ, ປ້າຍເຕືອນຕ່າງໆ ແລະຄົນງານ) ໄປຂ້າງໜ້າຖ້າຫາກສັງເກດເຫັນວ່າສີທີ່ທານັ້ນແຫ້ງດີ.
9. ວຽກການທາສີຈະຕ້ອງໄດ້ມີການວາງແຜນທີ່ດີ ບໍລິເວນການທາສີຈະຕ້ອງໄດ້ເປີດໃຫ້ມີ ການສັນຈອນ, ຈວຍນິລະໄພ ແລະ ປ້າຍເຕືອນຕ່າງໆ ຈະຕ້ອງໄດ້ເຄື່ອນຍ້າຍ ພາຍຫລັງສຳເລັດການທາສີ.
10. ອະນາໄມສິ່ງທີ່ບໍ່ຕ້ອງການຕາມຜິວໜ້າທາງໂດຍການນຳໃຊ້ blowlamp ແລະ ເຄື່ອງຂຸດສີ. ຫ້າມໃຊ້ຄວາມຮ້ອນເພື່ອກຳຈັດສີທີ່ບໍ່ຕ້ອງການຕາມຜິວໜ້າທາງປູຢາງ.
11. ຕ້ອງຮັບປະກັນວ່າບໍລິເວນທີ່ທາສີນັ້ນມີຄວາມສະອາດ ແລະເປັນລະບຽບດີ.
12. ບັນທຶກເນື້ອທີ່ຂອງການທາສີທີ່ປະຕິບັດສຳເລັດລົງໃນແບບຟອມບັນທຶກ.
13. ເຄື່ອນຍ້າຍປ້າຍເຕືອນ ແລະ ອຸປະກອນຄວາມປອດໄພຕ່າງໆ ອອກຈາກສະໜາມ.

ຮູບ 1

ມາດຕະຖານເຕັກນິກ:

ວຽກດັ່ງກ່າວຈະຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນປື້ມຄູ່ມື ຫລື ຕາມການແນະນຳຂອງນັກວິສະວະກອນ.

4.5 ການບັນທຶກຂໍ້ມູນ ແລະ ການລາຍງານ

(1) ວິທີການບັນທຶກຂໍ້ມູນ

ຫົວໜ້າທີມໃນການສ້ອມແປງຈະເປັນ ຜູ້ແຕ່ງຕັ້ງຜູ້ບັນທຶກຂໍ້ມູນທັງໝົດທີ່ກ່ຽວກັບການຈັດຕັ້ງປະຕິບັດຕາມທີ່ໄດ້ລະບຸໄວ້ໃນ ແບບຟອມການບັນທຶກວຽກ ພາກສະໜາມ. ບໍລິມາດວຽກໄດ້ປະຕິບັດ ແລະ ສິ່ງທີ່ໄດ້ນຳໃຊ້ເຂົ້າໃນການສ້ອມແປງ ແມ່ນຂໍ້ມູນທີ່ ສຳຄັນທີ່ຈະຕ້ອງບັນທຶກ. ໃນກໍລະນີບຸກຄະລາກອນມີຈຳກັດ,ຫົວໜ້າທີມແມ່ນສາມາດເປັນຜູ້ບັນທຶກໄດ້ເໝືອນກັນ. ເນື້ອໃນທີ່ຄວນປະກອບເຂົ້າໃນວຽກການບັນທຶກແມ່ນມີດັ່ງຕໍ່ໄປນີ້.

- ຕາມຫຼັກການແລ້ວ 1 ແບບຟອມໃຫ້ນຳໃຊ້ສະເພາະ 1 ປະເພດວຽກ.
- ຜູ້ບັນທຶກຄວນຈະບັນທຶກເຄົ້າປະສານ(X,Y) ຂອງຈຸດເລີ່ມຕົ້ນໃນການປະຕິບັດວຽກໃນຖັນໜຶ່ງສະເພາະ.
- ຫົວໜ່ວຍບໍລິມາດຂອງວັດສະດຸທີ່ນຳໃຊ້ຈະຕ້ອງລະບຸຢ່າງຈະແຈ້ງໃນຖັນໜຶ່ງສະເພາະ.
- ຜູ້ບັນທຶກຄວນຈະເກັບກຳຂໍ້ສະເໜີຕ່າງໆໄວ້ໃນຖັນໜຶ່ງສະເພາະ ໝາຍເຫດ ໂດຍອີງຕາມການຈັດຕັ້ງປະຕິບັດວຽກ.
- ຜູ້ບັນທຶກຈະໄດ້ຖ່າຍຮູບທີ່ຕັ້ງຂອງວຽກໃນແຕ່ລະຈຸດທີ່ປະຕິບັດສຳເລັດ. ວັນທີ, ເວລາ, ຊື່ວຽກ ແລະ ຂະໜາດຂອງວຽກແມ່ນຈະໄດ້ຂຽນລົງໃນບ່ອນເກັບຮູບນັ້ນ.

(2) ວິທີການລາຍງານ

ຂໍ້ມູນທີ່ໄດ້ບັນທຶກລົງໃນແບບຟອມການບັນທຶກວຽກແມ່ນຈະໄດ້ສັງລວມ ແລະ ສະຫຼຸບດ້ວຍການຕີລາຄາພິມລົງໃນງານ“ບົດລາຍງານວຽກ”. ຕົວຢ່າງຂອງບົດລາຍງານ(ການປິດຮອຍແຕກແໜງ)ແມ່ນສະແດງໄວ້ໃນ ຮູບສະແດງ 4.5.2.

WORK RECORD SHEET Sheet: (1 of 3)

DATE	10 / Sep / 2012	TYPE OF DEFECT	Code: CBCL, CBCT				
LEADER	Suzuki		Name: Longitudinal, transverse cracks				
PROVINCE	Savannakhet	TYPE OF WORK	Code: 1106				
DISTRICT	Palanxai		Name: Crack sealing				
ROAD NO.	National No. 9	WORK QUANTITY		Length (m)	Width (m)	Depth/ Height (m)	Number
PAVEMENT	Asphalt			5	4.2		1
WEATHER	Fine			3	2		1
LOCATION	Km: 115 to Km: 116			3	3.1		1
	(X, Y): (432614 , 811954)			4	2.8		1
	Item: 1. Carriageway			4	3		2

INPUT

	Type	Number	Type	Number
Labor	Foreman	1		
	Worker	6		
	Driver	2		
Tool & Equipment	**Type**	**Number**	**Type**	**Number**
	Cargo crane truck	1	White board	1
	Mini bus	1	Marker	1
	Wheelbarrow	1	Camera	1
	Shovel	2	GPS	1
	Broom	2	Measuring tape	1
	Squeegee	1		
	Chalk	5		
Material	**Type**	**Quantity**	**Type**	**Quantity**
	Bitumen emulsion	50 ltr		
	Sand	200 kg		

NOTE
Water tends to gather on road surface due to terrain condition. Quick repair to prevent water infiltration is important.

Recorder: Suzuki

ຮູບສະແດງ 4.5.1 ຕົວຢ່າງແບບຟອມການບັນທຶກວຽກທີ່ໄດ້ລົງຂໍ້ມູນ (ການປິດຮອຍແຕກແໜງ)

WORK REPORT

DATE	10/Sep/2012	LOCATION	Km 115 to Km 116
LEADER	Suzuki		(X, Y): (432,614 , 811,954)
PROVINCE	Savannakhet		Item: 1. Carriageway
DISTRICT	Palanxai	TYPE OF DEFECT	Code: CBCL, CBCT
ROAD NO.	National No.9		Name: Longitudinal and transverse cracks
PAVEMENT	Hot mix asphalt	TYPE OF WORK	Code: 1106
WEATHER	Fine		Name: Crack sealing Unit: m2

WORK QUANTITY	Length (m)	Width (m)	Depth/ Height (m)	Number	Area (m2)	Volume (m3)	Length (m)	Width (m)	Depth/ Height (m)	Number	Area (m2)	Volume (m3)
	5.0	4.2		1	21.0	0.0	4.4	2.0		1	8.8	0.0
	3.0	2.0		1	6.0	0.0	6.0	3.0		3	54.0	0.0
	3.0	3.1		1	9.3	0.0	6.2	2.6		1	16.1	0.0
	4.0	2.8		1	11.2	0.0	4.7	1.5		1	7.1	0.0
	4.0	3.0		2	24.0	0.0	5.2	1.9		1	9.9	0.0
	2.2	4.0		1	8.8	0.0					0.0	0.0
	1.8	4.0		1	7.2	0.0					0.0	0.0
	1.5	4.0		2	12.0	0.0					0.0	0.0
	3.4	2.0		1	6.8	0.0					0.0	0.0
	6.8	2.0		1	13.6	0.0	**TOTAL**			**19**	**215.8**	**0.0**

INPUT

	Type	Number	Type	Number	Type	Number
Labor	Foreman	1				
	Worker	6				
	Driver	2				

	Type	Number	Type	Number	Type	Number
Tool & Equipment	Cargo crane truck	1	Chalk	5		
	Mini bus	1	White board	1		
	Wheel barrow	2	Marker	1		
	Shovel	4	Camera	1		
	Broom	4	GPS	1		
	Squeegee	2	Measuring tape	1		

	Type	Unit	Qty	Type	Unit	Qty	Type	Unit	Qty
Material	Bituminous emulsion	ltr	90.0						
	Sand	kg	300.0						

NOTE

2 team worked in this section. 1 team consists of 3 workers.
Water tends to gather on road surface due to terrain condition (sag). Quick repair is important to prevent further deterioration of the pavement by water infiltration.

ຮູບສະແດງ 4.5.2 ຕົວຢ່າງບົດລາຍງານວຽກ (ການປິດຮອຍແຕກແຫ້ງ)

1. INTRODUCTION

Contents

1. Introduction 1-1
   1.1 Background 1-1
   1.2 Objective 1-1
   1.3 Glossary of Terms 1-1
   1.4 Work Flow of Road Maintenance Activities 1-1

DRAFT

1. Introduction

1.1 Background

(Under work)

1.2 Objective

(Under work)

1.3 Glossary of Terms

(Under work)

1.4 Work Flow of Road Maintenance Activities

Road maintenance work is composed of 3 major activities namely inspection, evaluation and repair work. These activities are closely connected each other as shown in the work flow in Figure 1.4.1. The responsible agency should appropriately conduct the work by applying the Manuals.

DRAFT



Figure 1.4.1 Work Flow of Road Maintenance Activities